# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

31 ທັນວາ 2018

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

**ສາລະບານ**


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 2 - 3 |
| ໃບລາຍງານຜົນການດຳເນີນງານ | 4 |
| ໃບລາຍງານຜົນການດຳເນີນງານນອກການທຸລະກິດ | 5 |
| ໃບລາຍງານຖານະການເງິນ | 6 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 7 |
| ໃບລາຍງານກະແສເງິນສົດ | 8 - 9 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 10 - 74 |

# ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈາກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ ແລະ ດໍາເນີນພາຍໃຕ້ໃບອະນຸຍາດດໍາເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2016.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ທຶນຈົດທະບຽນທີ່ຖອກແລ້ວນະວັນທີ 31 ທັນວາ 2018 ແມ່ນ 405,100,000,000 ກີບ (31 ທັນວາ 2017 ແມ່ນ 405,100,000,000 ກີບ).

ກິດຈະກໍາຫຼັກຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຜູ້ອໍານວຍໃຫຍ່ ແລະ ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ແມ່ນທ່ານ Li Zhiyong, ຜູ້ອໍານວຍໃຫຍ່.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ.

EY
Building a better working world

Ernst & Young Lao Co., Ltd
6th Floor, Kolao Tower I
23 Singha Road, Nongbone Village
Saysettha District
Vientiane Capital, Lao PDR

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/20598988-IFRS

## ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ**

### ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2018, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ລວມທັງສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນໄດ້ຖືກນຳສະເໜີຢ່າງຖືກຕ້ອງ, ຕາມຄວາມເປັນຈິງຂອງຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2018 ແລະ ຜົນການດຳເນີນງານ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວຖືກນຳສະເໜີໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ.

### *ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານດັ່ງກ່າວ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ* ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ, ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສພລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາກ່ຽວກັບຄວາມສືບເນື່ອງໃນການດຳເນີນທຸລະກິດ, ຖ້າມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

EY

Building a better working world

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄໍາເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດໍາເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບນັ້ນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ສາມາດພິຈາລະນາວ່າ ສໍາຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນໍາໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທໍາຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນໍາໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນໍາໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນຄວາມສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.
- ປະເມີນຜົນການຈັດການໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນ, ລວມທັງການເປີດເຜີຍຂໍ້ມູນ ແລະ ບັນດາເອກະສານລາຍງານການເງິນແມ່ນການລາຍງານຄືນ ແລະ ກິດຈະກໍາທີ່ກ່ຽວຂ້ອງທີ່ສາມາດສະເຫນີອອກໄດ້ຢ່າງຖືກຕ້ອງ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສໍາຄັນ ລວມທັງບັນດາຂໍ້ບົກພ່ອງທີ່ສໍາຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກໍານົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| ລາຍຮັບດອກເບ້ຍທີ່ໄດ້ຄິດໄລ່ໂດຍການນຳໃຊ້ວິທີດອກເບ້ຍທີ່ແທ້ຈິງ | 9 | 140,490 | 77,867 |
| ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍການນຳໃຊ້ວິທີດອກເບ້ຍທີ່ແທ້ຈິງ | 9 | (24,973) | (10,750) |
| **ລາຍຮັບສຸດທິຈາກດອກເບ້ຍ** | | **115,517** | **67,117** |
| ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | 10 | 5,610 | 3,437 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 10 | (273) | (281) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | | **5,337** | **3,156** |
| ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ | 11 | 13,317 | 7,867 |
| **ລວມຍອດລາຍຮັບຈາກການດຳເນີນງານ** | | **134,171** | **78,140** |
| ລາຍຈ່າຍໜີ້ເສຍ | 12 | (5,326) | (2,872) |
| **ລາຍຮັບສຸດທິຈາກການດຳເນີນງານ** | | **128,845** | **75,268** |
| ລາຍຈ່າຍເງິນເດືອນ | 13 | (15,981) | (16,273) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19 | (3,033) | (3,327) |
| ລາຍຈ່າຍອື່ນໆໃນການດຳເນີນງານ | 14 | (9,410) | (8,911) |
| **ລວມຍອດລາຍຈ່າຍໃນການດຳເນີນງານ** | | **(28,424)** | **(28,511)** |
| **ກຳໄລ ກ່ອນຫັກອາກອນ** | | **100,421** | **46,757** |
| ອາກອນກຳໄລ | 25 | (25,777) | (9,547) |
| **ກຳໄລ ພາຍໃນປີ** | | **74,644** | **37,210** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| | 2018<br>*ລ້ານກີບ* | 2017<br>*ລ້ານກີບ* |
|---|---|---|
| **ກຳໄລ ພາຍໃນປີ** | **74,644** | **37,210** |
| **ລາຍຮັບອື່ນໆນອກການທຸລະກິດຫຼັງຫັກອາກອນ** | - | - |
| **ລວມຍອດຜົນໄດ້ຮັບນອກການທຸລະກິດພາຍໃນປີ, ຫຼັງຫັກອາກອນ** | **74,644** | **37,210** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ | 15 | 965,118 | 428,487 |
| ເງິນຝາກຢູ່ທະນາຄານອື່ນ | 16 | 982,928 | 869,290 |
| ການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ | 17 | 860,129 | - |
| ຫຼັກຊັບຖືໄວ້ເພື່ອຄົບກຳນົດ | 17 | - | 835,197 |
| ເງິນກູ້ໃຫ້ລູກຄ້າ | 18 | 567,722 | 407,499 |
| ຊັບສິນບັດ ແລະ ອຸປະກອນ | 19 | 5,577 | 7,465 |
| ຊັບສິນອື່ນໆ | 20 | 13,374 | 15,579 |
| **ລວມຍອດຊັບສິນ** | | **3,394,848** | **2,563,517** |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 21 | 224,526 | 139,803 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 22 | 2,648,535 | 1,980,192 |
| ໜີ້ຕ້ອງສົ່ງອາກອນໃນປີ | 25 | 8,683 | 3,065 |
| ເງິນແຮ | 24 | 354 | - |
| ໜີ້ສິນອື່ນໆ | 23 | 5,657 | 7,988 |
| **ລວມຍອດໜີ້ສິນ** | | **2,887,755** | **2,131,048** |
| **ທຶນ** | | | |
| ທຶນຈົດທະບຽນທີ່ຖອກແລ້ວ | 26 | 405,100 | 405,100 |
| ຄັງສຳຮອງຕາມກົດໝາຍ | | 10,859 | 2,737 |
| ກຳໄລສະສົມ | | 91,134 | 24,632 |
| **ລວມຍອດທຶນ** | | **507,093** | **432,469** |
| **ລວມຍອດໜີ້ສິນ ແລະ ທຶນ** | | **3,394,848** | **2,563,517** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019

ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| | *ທຶນຈົດທະບຽນທີ່ຖອກແລ້ວ* *ລ້ານກີບ* | *ຄັງສໍາຮອງຕາມກົດໝາຍ* *ລ້ານກີບ* | *ກໍາໄລ/(ຂາດທຶນ) ສະສົມ* *ລ້ານກີບ* | *ລວມ* *ລ້ານກີບ* |
|---|---|---|---|---|
| **ຍອດເຫຼືອນະວັນທີ 31 ທັນວາ 2016** | **405,100** | **-** | **(9,841)** | **395,259** |
| ກໍາໄລສຸດທິພາຍໃນປີ 2017 | - | - | 37,210 | 37,210 |
| ຫັກສໍາຮອງ ສໍາລັບປີ 2017 | - | 2,737 | (2,737) | - |
| **ຍອດເຫຼືອນະວັນທີ 31 ທັນວາ 2017** | **405,100** | **2,737** | **24,632** | **432,469** |
| ຜົນກະທົບຂອງການນໍາໃຊ້ IFRS 9 (ບົດອະທິບາຍເລກທີ 8) | - | - | (20) | (20) |
| **ຍອດທີ່ດັດແກ້ຄືນນະວັນທີ ທີ 31 ທັນວາ 2017 ພາຍໃຕ້ IFRS 9** | **405,100** | **2,737** | **24,612** | **432,449** |
| ກໍາໄລສຸດທິພາຍໃນປີ 2018 | - | - | 74,644 | 74,644 |
| ຫັກສໍາຮອງສໍາລັບປີ 2018 | - | 8,122 | (8,122) | - |
| **ຍອດເຫຼືອນະວັນທີ 31 ທັນວາ 2018** | **405,100** | **10,859** | **91,134** | **507,093** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດໍາເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອໍານວຍໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019

ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| **ກິດຈະກໍາການດໍາເນີນງານ** | | | |
| **ກໍາໄລ ສຸດທິກ່ອນຫັກອາກອນ** | | **100,421** | **46,757** |
| *ດັດແກ້ສໍາລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19 | 3,033 | 3,327 |
| ລາຍຈ່າຍໜີ້ເສຍ | 12 | 5,326 | 2,872 |
| ລາຍຮັບດອກເບ້ຍ | | (140,490) | (77,867) |
| ລາຍຈ່າຍດອກເບ້ຍ | | 24,973 | 10,750 |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນໃນການດໍາເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | (401,637) | (177,665) |
| ເງິນກູ້ ໃຫ້ແກ່ລູກຄ້າ | | (164,351) | (287,901) |
| ຊັບສິນອື່ນໆ | | (21,494) | 2,046 |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນໃນການດໍາເນີນງານ | | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | | 84,419 | (393,026) |
| ໜີ້ຕ້ອງສົ່ງລູກຄ້າ | | 660,717 | 1,552,868 |
| ໜີ້ສິນອື່ນໆ | | (2,180) | 4,262 |
| ດອກເບ້ຍທີ່ໄດ້ຮັບ | | 134,940 | 75,144 |
| ດອກເບ້ຍທີ່ໄດ້ຈ່າຍ | | (17,043) | (10,958) |
| ອາກອນກໍາໄລຈ່າຍໃນປີ | 25 | (20,288) | (6,482) |
| **ກະແສເງິນສົດສຸດທິຈາກໃນກິດຈະກໍາການດໍາເນີນງານ** | | **246,346** | **744,127** |
| **ກິດຈະກໍາການລົງທຶນ** | | | |
| ການຊື້ຊັບສິນບັດ ແລະ ອຸປະກອນ | | (1,145) | (984) |
| ການລົງທຶນໃນຫຼັກຊັບ | | - | (420,100) |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກໍາການລົງທຶນ** | | **(1,145)** | **(421,084)** |

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| **ກິດຈະກຳທາງການເງິນ** | | | |
| **ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ** | | - | - |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | 245,201 | 323,043 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | 1,089,552 | 766,509 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | 27 | 1,334,753 | 1,089,552 |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019

## 1. ຂໍ້ມູນກ່ຽວກັບສາຂາ

### *ການສ້າງຕັ້ງ ແລະ ການເຄື່ອນໄຫວ*

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສປປ ລາວ ແລະ ດຳເນີນ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2016.

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

### *ທຶນຈົດທະບຽນ*

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ທຶນຈົດທະບຽນທີ່ຖອກແລ້ວ ນະວັນທີ 31 ທັນວາ 2018 ແມ່ນ 405,100,000,000 ກີບ (31 ທັນວາ 2017: 405,100,000,000 ກີບ).

### *ຜູ້ອຳນວຍໃຫຍ່.*

ຜູ້ອຳນວຍໃຫຍ່ຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນທ່ານ Li Zhiyong.

### *ທີ່ຕັ້ງ*

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

### *ພະນັກງານ*

ພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2018 ມີ 33 ຄົນ (31 ທັນວາ 2017: 27).

## 2. ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມ ບົນພື້ນຖານມູນຄ່າຕົ້ນທຶນເດີມ, ຍົກເວັ້ນທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍອື່ນໆ.

ສາຂາດຳເນີນການບັນທຶກບັນຊີ ເປັນສະກຸນເງິນລ້ານກີບ ("ກີບ") ເຊິ່ງເປັນສະກຸນເງິນທີ່ໃຊ້ໃນການດຳເນີນງານຂອງສາຂາ ແລະ ນຳສະເໜີໃນເອກະສານລາຍງານການເງິນເປັນຈຳນວນລ້ານຂອງລາວກີບ (ລ້ານກີບ) ເວັ້ນເສຍແຕ່ໄດ້ລະບຸເພີ່ມເຕີມເຊິ່ງຂໍ້ມູນທາງການເງິນທີ່ໄດ້ສະແດງເປັນເງິນກີບແມ່ນໄດ້ຖືກປັບເປັນຕົວເລກມົນໃຫ້ໃກ້ຄຽງກັບໜຶ່ງລ້ານ.

ປີການບັນຊີຂອງສາຂາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດ 31 ທັນວາ.

## 3. ຄຳຖະແຫຼງການປະຕິບັດຕາມ

ເອກະສານລາຍງານການເງິນຂອງສາຂາຖືກກະກຽມຂຶ້ນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ທີ່ອອກໂດຍ IASB.

## 4. ການນໍາສະເໜີເອກະສານລາຍງານການເງິນ

ສາຂາໄດ້ນໍາສະເໜີໃບລາຍງານຖານະການເງິນຂອງຕົນຕາມລໍາດັບສະພາບຄ່ອງ. ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນແມ່ນຖືກສະແດງເປັນມູນຄ່າລວມໃນໃບລາຍງານຖານະການເງິນ. ເຊິ່ງຈະຖືກນໍາມາຫັກລ້າງກັນ ແລະ ລາຍງານຕາມມູນຄ່າສຸດທິກໍ່ຕໍ່ເມື່ອ ມີຂໍ້ກໍານົດອະນຸຍາດທາງກົດໝາຍໃດໜຶ່ງໃຫ້ຫັກລ້າງມູນຄ່າທີ່ຖືກຮັບຮູ້ໂດຍປາສະຈາກເຫດການທີ່ອາດຈະເກີດຂຶ້ນໃນອະນາຄົດ, ເມື່ອບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຂ້າງລຸ່ມນີ້:

- ຕາມສະພາບການປົກກະຕິຂອງທຸລະກິດ
- ໃນກໍລະນີທີ່ທຸລະກິດມີການກະທໍາຄວາມຜິດ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງສາຂາ ແລະ/ຫຼື ຄູ່ຄ້າຂອງຕົນ.

## 5. ການປ່ຽນແປງຂອງນະໂຍບາຍການບັນຊີ ແລະ ການເປີດເຜີຍ

### 5.1 *ມາດຕະຖານ ແລະ ການປັບປຸງໃໝ່ ແລະ ການຕີຄວາມໝາຍ*

ໃນເອກະສານລາຍງານການເງິນສະບັບນີ້, ສາຂາໄດ້ນໍາໃຊ້ເປັນຄັ້ງທໍາອິດຂອງ IFRS 15 *ລາຍຮັບຈາກສັນຍາກັບລູກຄ້າ*, IFRS 9 *ເຄື່ອງມືທາງການເງິນ* ແລະ ການແກ້ໄຂທີ່ມີຜົນສືບເນື່ອງເຖິງ IFRS 7 *ເຄື່ອງມືທາງດ້ານການເງິນ: ການເປີດເຜີຍ* ເຊິ່ງມີຜົນຕໍ່ເປັນໄລຍະເວລາໜຶ່ງປີໂດຍເລີ່ມຈາກ ຫຼື ພາຍຫຼັງ ວັນທີ 1 ມັງກອນ 2018. ລັກສະນະ ແລະ ຜົນກະທົບຂອງການນໍາການປ່ຽນແປງທີ່ມີຜົນມາຈາກການນໍາໃຊ້ມາດຕະຖານການບັນຊີໃໝ່ເຫຼົ່ານີ້ແມ່ນຖືກອະທິບາຍໄວ້ດັ່ງລຸ່ມນີ້.

ສ່ວນການປັບປຸງ ແລະ ການຕີຄວາມໝາຍອື່ນໆທີ່ໄດ້ໃຊ້ຄັ້ງທໍາອິດໃນປີ 2018 ແຕ່ບໍ່ມີຜົນກະທົບຕໍ່ເອກະສານລາຍງານການເງິນຂອງສາຂາ. ສາຂາບໍ່ໄດ້ມີການນໍາໃຊ້ກ່ອນກ່ຽວກັບມາດຕະຖານອື່ນໆ, ການຕີຄວາມໝາຍ ແລະ ການປັບປຸງທີ່ໄດ້ວາງອອກແລ້ວ ແຕ່ຍັງບໍ່ມີຜົນສັກສິດ.

#### 5.1.1 *IFRS 9 - ເຄື່ອງມືທາງດ້ານການເງິນ*

IFRS 9 ແມ່ນໃຊ້ແທນ IAS 39 ສໍາລັບໄລຍະໜຶ່ງປີໂດຍເລີ່ມຈາກ ຫຼື ພາຍຫຼັງ ວັນທີ 1 ມັງກອນ 2018.

ສາຂາແມ່ນຍັງບໍ່ໄດ້ດັດແກ້ຂໍ້ມູນທີ່ເປັນຕົວເລກສົມທຽບໃນປີ 2017 ສໍາລັບເຄື່ອງມືທາງການເງິນໃນຂອບເຂດຂອງ IFRS 9. ດັ່ງນັ້ນ, ຂໍ້ມູນທີ່ເປັນຕົວເລກສົມທຽບໃນປີ 2017 ແມ່ນຖືກລາຍງານພາຍໃຕ້ IAS 39 ແລະ ບໍ່ສາມາດສົມທຽບໄດ້ກັບຂໍ້ມູນທີ່ໄດ້ສະແດງສໍາລັບປີ 2018. ການຜິດດ່ຽງທີ່ເກີດຂຶ້ນຈາກການນໍາໃຊ້ IFRS 9 ແມ່ນຖືກຮັບຮູ້ໂດຍກົງໃນກໍາໄລສະສົມໃນວັນທີ ວັນທີ 1 ມັງກອນ 2018 ແລະ ຖືກເປີດເຜີຍໃນບົດອະທິບາຍເລກທີ 8.

##### 5.1.1.1 *ການປ່ຽນແປງໃນການຈັດປະເພດ ແລະ ການຕີມູນຄ່າ*

ເພື່ອກໍານົດໝວດຂອງການຈັດປະເພດ ແລະ ການຕີມູນຄ່າ, IFRS 9 ແມ່ນກໍານົດໃຫ້ຊັບສິນທາງການເງິນທັງໝົດ ຍົກເວັ້ນການສານທຶນ ແລະ ກາສານອະນຸພັນ ຕ້ອງໄດ້ຖືກປະເມີນໂດຍອີງໃສ່ການລວມເອົາຕົວແບບທຸລະກິດສໍາລັບການບໍລິຫານຊັບສິນ ແລະ ລັກສະນະເຄື່ອງມືຂອງກະແສເງິນສົດຕາມສັນຍາ.

IAS 39 ການຕີມູນຄ່າຂອງໝວດຊັບສິນທາງການເງິນ (ມູນຄ່າຍຸດຕິທໍາຜ່ານກໍາໄລຂາດທຶນ (FVTPL), ປະເພດມີໄວ້ເພື່ອຂາຍ (AFS), ຖືຄອງເພື່ອຄົບກໍານົດ (HTM) ແລະ ຕົ້ນທຶນຄ່າເສື່ອມ) ແມ່ນຖືກປ່ຽນແທນດ້ວຍ:

- ກາສານໜີ້ຕາມຕົ້ນທຶນຄ່າເສື່ອມມູນຄ່າ
- ກາສານໜີ້ໃນມູນຄ່າຍຸດຕິທໍາໂດຍຜ່ານລາຍຮັບອື່ນໆນອກການທຸລະກິດ (FVOCI), ໂດຍມີການໝູນໃຊ້ຄືນກໍາໄລ ຫຼື ຂາດທຶນໃນໃບລາຍງານຜົນໄດ້ຮັບ ຈາກການຢຸດຮັບຮູ້
- ກາສານທຶນໃນມູນຄ່າຍຸດຕິທໍາໂດຍຜ່ານລາຍຮັບອື່ນນອກການທຸລະກິດ (FVOCI), ໂດຍບໍ່ມີການໝູນໃຊ້ຄືນ ກໍາໄລ ຫຼື ຂາດທຶນ ໃນໃບລາຍງານຜົນການດໍາເນີນງານຈາກການຢຸດຮັບຮູ້
- ຊັບສິນທາງການເງິນໃນມູນຄ່າຍຸດຕິທໍາຜ່ານກໍາໄລຂາດທຶນ (FVTPL)

## 5. ການປ່ຽນແປງໃນນະໂຍບາຍການບັນຊີ ແລະ ການເປີດເຜີຍ (ຕໍ່)

### 5.1 *ມາດຕະຖານໃໝ່ ແລະ ໄດ້ຮັບການປັບປຸງ ແລະ ການຕີຄວາມໝາຍ* (ຕໍ່)

### 5.1.1 *IFRS 9 - ເຄື່ອງມືທາງດ້ານການເງິນ* (ຕໍ່)

#### 5.1.1.1 *ການປ່ຽນແປງໃນການຈັດປະເພດ ແລະ ການຕີມູນຄ່າ* (ຕໍ່)

ການບັນຊີສຳລັບໜີ້ສິນທາງການເງິນໂດຍສ່ວນຫຼາຍແມ່ນຍັງເປັນຄືເກົ່າ ພາຍໃຕ້ IAS 39, ຍົກເວັ້ນສຳລັບການປະຕິບັດຕໍ່ກຳໄລ ຫຼື ຂາດທຶນທີ່ມາຈາກ ຄວາມສ່ຽງດ້ານສິນເຊື່ອຂອງທຸລະກິດທີ່ກ່ຽວຂ້ອງກັບໜີ້ສິນທີ່ໄດ້ລະບຸໃນ ມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ (FVTPL). ການເຄື່ອນໄຫວດັ່ງກ່າວນັ້ນແມ່ນຖືກນຳສະເໜີໃຫ້ເຫັນໃນລາຍຮັບອື່ນໆນອກການທຸລະກິດ ("OCI") ໂດຍທີ່ບໍ່ມີການຈັດປະເພດຄືນໃໝ່ໃນພາຍຫຼັງໃນໃບລາຍງານຜົນການດຳເນີນງານ.

ການຈັດປະເພດຊັບສິນ ແລະ ໜີ້ສິນທາງການເງິນຂອງສາຂາ ແມ່ນຖືກອະທິບາຍເພີ່ມເຕີມໃນ ບົດອະທິບາຍອະທິບາຍ ເລກທີ 6.7 ແລະ 6.9. ຜົນກະທົບທາງດ້ານປະລິມານຂອງການນຳໃຊ້ IFRS 9 ນະວັນທີ 1 ມັງກອນ 2018 ແມ່ນຖືກສະແດງໃນ ບົດອະທິບາຍເລກທີ 8.

#### 5.1.1.2 *ການປ່ຽນແປງໃນການຄິດໄລ່ຄ່າເສື່ອມມູນຄ່າ*

ການນຳໃຊ້ IFRS 9 ໄດ້ປ່ຽນແປງຖານບັນຊີຂອງສາຂາໂດຍພື້ນຖານສຳລັບຄ່າເສື່ອມມູນຄ່າຈາກໜີ້ເສຍໂດຍການປ່ຽນແທນວິທີການຄິດໄລ່ກ່ຽວກັບໜີ້ເສຍໃນ IAS 39 ດ້ວຍວິທີການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ("ECL"). IFRS 9 ກຳນົດໃຫ້ສາຂາບັນທຶກເງິນແຮຂອງ ECL ສຳລັບ ເງິນກູ້ ແລະ ຊັບສິນທາງການເງິນອື່ນໆທັງໝົດທີ່ບໍ່ໄດ້ຖືຄອງໃນມູນຄ່າຍຸດຕິທຳໂດຍຜ່ານກຳໄລຂາດທຶນ, ພ້ອມກັບພາລະຜູກພັນຂອງເງິນກູ້ ແລະ ສັນຍາຄໍ້າປະກັນທາງດ້ານການເງິນ. ເງິນແຮຂອງ ECL ແມ່ນອີງໃສ່ກັບຄວາມເປັນໄປໄດ້ຂອງການຜິດນັດຊຳລະທີ່ຈະເກີດຂຶ້ນໃນອີກ 12 ເດືອນຕໍ່ໄປ ຍົກເວັ້ນຖ້າຫາກ ມີການເພີ່ມຂຶ້ນຢ່າງມີໃນສຳຄັນຂອງຄວາມສ່ຽງດ້ານສິນເຊື່ອຕັ້ງແຕ່ທຳອິດ. ຖ້າຫາກວ່າຊັບສິນທາງການເງິນມີເງື່ອນໄຂຕາມນິຍາມຂອງຄ່າເສື່ອມມູນຄ່າສິນເຊື່ອຕັ້ງແຕ່ທຳອິດ ຫຼື ໄດ້ຊື້ ("POCI"), ເງິນແຮ ແມ່ນຖືກຄິດໄລ່ໂດຍອີງໃສ່ສ່ວນປ່ຽນແປງໃນໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ (ECLs) ຕະຫຼອດໄລຍະອາຍຸຂອງຊັບສິນ.

ລາຍລະອຽດຂອງວິທີການຄິດໄລ່ຄ່າເສື່ອມມູນຄ່າຂອງສາຂາແມ່ນຖືກສະແດງໃນບົດອະທິບາຍທີ 6.10. ຜົນກະທົບທາງດ້ານປະລິມານຂອງການນຳໃຊ້ IFRS 9 ນະວັນທີ 1 ມັງກອນ 2018 ແມ່ນຖືກສະແດງໃນ ບົດອະທິບາຍທີ 8.

### 5.1.2 *IFRS 7R*

ເພື່ອສະທ້ອນໃຫ້ເຫັນເຖິງສ່ວນແຕກຕ່າງລະຫວ່າງ IFRS 9 ແລະ IAS 39, IFRS 7 *ເຄື່ອງມືທາງດ້ານການເງິນ: ການເປີດເຜີຍ* ແມ່ນຖືກປັບປຸງ ແລະ ສາຂາໄດ້ນຳໃຊ້ ພ້ອມກັບ IFRS 9 ສຳລັບປີທີ່ເລີ່ມຈາກ ຫຼື ພາຍຫຼັງ ວັນທີ 1 ມັງກອນ 2018. ສ່ວນປ່ຽນແປງແມ່ນປະກອບດ້ວຍ:

- ການເປີດເຜີຍກ່ຽວກັບການປ່ຽນແປງແມ່ນໄດ້ສະແດງໃນບົດອະທິບາຍເລກທີ 8;
- ຂໍ້ມູນທາງດ້ານຄຸນະພາບໂດຍລະອຽດກ່ຽວກັບການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ (ECL) ເຊັ່ນວ່າ ການສົມມຸດຖານ ແລະ ຂໍ້ມູນທີ່ປ້ອນເຂົ້າທີ່ໃຊ້ເຊິ່ງຖືກລະບຸໃນບົດອະທິບາຍເລກທີ 30

ສາຂາແມ່ນຍັງບໍ່ທັນໄດ້ດັດແກ້ຂໍ້ມູນສົມທຽບສຳລັບເຄື່ອງມືທາງການເງິນທີ່ຢູ່ພາຍໃຕ້ IFRS 9 ແລະ IAS 39. ຂໍ້ມູນທີ່ເປັນຕົວເລກສົມທຽບສຳລັບປີ 2017 ແມ່ນຖືກລາຍງານພາຍໃຕ້ IAS 39 ແລະ ບໍ່ສາມາດປຽບທຽບກັບຂໍ້ມູນທີ່ໄດ້ສະແດງໃນປີ 2018. ຄວາມແຕກຕ່າງທີ່ເກີດຂຶ້ນຈາກການນຳໃຊ້ຂອງ IFRS 9 ແມ່ນຖືກຮັບຮູ້ໂດຍກົງໃນກຳໄລສະສົມໃນວັນທີ ວັນທີ 1 ມັງກອນ 2018 ແລະ ຖືກເປີດເຜີຍໃນບົດອະທິບາຍທີ 8.

ສາຂາໄດ້ສະຫຼຸບການປະເມີນໂດຍອີງໃສ່ຂໍ້ເທັດຈິງ ແລະ ສະພາບການທີ່ເກີດຂຶ້ນຈິງນະວັນທີການນຳໃຊ້ທຳອິດເຊິ່ງນັ້ນກໍຄື ນະວັນທີ 1 ມັງກອນ 2018 ດັ່ງລຸ່ມນີ້:

## 5. ການປ່ຽນແປງໃນນະໂຍບາຍການບັນຊີ ແລະ ການເປີດເຜີຍ (ຕໍ່)

### 5.1 *ມາດຕະຖານໃໝ່ ແລະ ໄດ້ຮັບການປັບປຸງ ແລະ ການຕີຄວາມໝາຍ* (ຕໍ່)

### 5.1.2 *IFRS 7R* (ຕໍ່)

- ຕົວແບບທຸລະກິດພາຍໃຕ້ທີ່ສາຂາທີ່ຖືຄອງ ແລະ ບໍລິຫານຊັບສິນທາງດ້ານການເງິນຂອງສາຂາ
- ການສືບຕໍ່ ຫຼື ການເພີກຖອນການລະບຸຊັບສິນ ແລະ ໜີ້ສິນທາງດ້ານການເງິນກ່ອນໜ້ານີ້ທີ່ຖືກຕີມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ (FVTPL)
- ສຳລັບໜີ້ສິນທາງດ້ານການເງິນທີ່ສືບຕໍ່ ຫຼື ລະບຸເປັນ ມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ (FVTPL) ສາມາດຈະນາສະເໜີຜົນກະທົບຂອງການປ່ຽນແປງຄວາມສ່ຽງທາງດ້ານສິນເຊື່ອຂອງຊັບສິນດັ່ງກ່າວໃນ ລາຍຮັບອື່ນໆນອກການທຸລະກິດ (OCI) ຫຼື ຂະຫຍາຍການບັນຊີກ່ຽວກັບລາຍການທີ່ບໍ່ສາມາດຈັດເຂົ້າກັນໄດ້ໃນໃບລາຍງານຜົນໄດ້ຮັບ
- ການຄັດເລືອກທີ່ຈະຈັດປະເພດກາສານທຶນທີ່ບໍ່ໄດ້ຖືຄອງເພື່ອຄ້າເປັນ ມູນຄ່າຍຸດຕິທຳຜ່ານລາຍຮັບອື່ນນອກການທຸລະກິດ (FVOCI) ຫຼື ບໍ່

### 5.1.3 *IFRS 15 ລາຍຮັບຈາກສັນຍາກັບລູກຄ້າ*

ໃນເດືອນ ພຶດສະພາ 2014, IASB ໄດ້ອອກ IFRS 15 ລາຍຮັບຈາກສັນຍາກັບລູກຄ້າ ເຊິ່ງໄດ້ນຳໃຊ້ແທນ ເງື່ອນໄຂກ່ຽວກັບລາຍຮັບ ແລະ ການຕີຄວາມໝາຍທີ່ກ່ຽວຂ້ອງທີ່ມີຢູ່ທັງໝົດ ແລະ ມີຜົນຕໍ່ເປັນໄລຍະໜຶ່ງປີໂດຍເລີ່ມຈາກ ຫຼື ພາຍຫຼັງ ວັນທີ 1 ມັງກອນ 2018. IFRS 15 ໄດ້ໃຫ້ນິຍາມຄືນກ່ຽວກັບຫຼັກການສຳລັບການຮັບຮູ້ເປັນລາຍຮັບ ແລະ ສາມາດທີ່ຈະນຳໃຊ້ກັບສັນຍາກັບບັນດາລູກຄ້າທັງໝົດ ນອກເໜືອຈາກ ສັນຍາທີ່ຢູ່ໃນຂອບເຂດຂອງມາດຕະຖານອື່ນໆ (ຕົວຢ່າງ ດອກເບ້ຍ ແລະ ຄ່າທຳນຽມທີ່ເປັນສ່ວນປະກອບຂອງ ເຄື່ອງມືທາງການເງິນເຊິ່ງຢູ່ໃນຂອບເຂດຂອງ IFRS 9 ແລະ ລາຍຮັບຈາກການໃຫ້ເຊົ່າ). ຂໍ້ກຳນົດທີ່ຈຳເປັນໃນ IFRS 15 ແມ່ນຍັງກ່ຽວຂ້ອງກັບການຮັບຮູ້ ແລະ ການຕີມູນຄ່າຂອງກຳໄລ ຫຼື ຂາດທຶນໃນການສະສາງຊັບສິນທີ່ບໍ່ແມ່ນທາງການເງິນເຊິ່ງບໍ່ຢູ່ໃນຂອບເຂດປົກກະຕິຂອງການດຳເນີນທຸລະກິດ.

IFRS 15 ໄດ້ສ້າງຕົວແບບ 5 ຂັ້ນຕອນໃຫ້ແກ່ບັນຊີສຳລັບລາຍຮັບທີ່ມາຈາກສັນຍາກັບລູກຄ້າ ແລະ ກຳນົດໃຫ້ລາຍຮັບຕ້ອງຖືກຮັບຮູ້ໃນຈຳນວນທີ່ສະທ້ອນໃຫ້ເຫັນເຖິງຄ່າຕອບແທນທີ່ທຸລະກິດຄາດວ່າຈະມີສິດທີ່ໄດ້ຮັບໃນການແລກປ່ຽນຈາກການສົ່ງມອບສິນຄ້າ ແລະ ບໍລິການແກ່ລູກຄ້າ.

ມາດຕະຖານກຳນົດໃຫ້ທຸລະກິດປະຕິບັດການຕັດສິນ, ພິຈາລະນາເຖິງຂໍ້ເທັດຈິງ ແລະ ສະພາບການ ທີ່ກ່ຽວຂ້ອງທັງໝົດເມື່ອຈະນຳໃຊ້ແຕ່ລະຂັ້ນຕອນຂອງຕົວແບບກັບສັນຍາກັບລູກຄ້າ. ມາດຕະຖານຍັງໄດ້ລະບຸລະອຽດກ່ຽວກັບການບັນຊີສຳລັບຕົ້ນທຶນທີ່ເພີ່ມຂຶ້ນໃນການໄດ້ມາເຊິ່ງສັນຍາ ແລະ ຕົ້ນທຶນທາງກິງທີ່ກ່ຽວຂ້ອງເຖິງການເຮັດໃຫ້ສັນຍາຄົບຖ້ວນສົມບູນ. ນອກຈາກນັ້ນ, ມາດຕະຖານຍັງກຳນົດໃຫ້ມີການເປີດເຜີຍຂໍ້ມູນຢ່າງກ້ວາງຂວາງ.

ກະແສລາຍຮັບຂອງສາຂາຫຼາຍໆອັນ (ຕົວຢ່າງ ລາຍຮັບດອກເບ້ຍ, ກຳໄລ ຫຼື ຂາດທຶນ ໃນເຄື່ອງມືທາງດ້ານການເງິນ) ແມ່ນຢູ່ນອກຂອບເຂດຂອງ IFRS 15 ແລະ, ສະນັ້ນ, ການບັນຊີສຳລັບກະແສເຫຼົ່ານັ້ນແມ່ນບໍ່ມີການປ່ຽນແປງຕາມຜົນຂອງການນຳໃຊ້ IFRS 15. ກະແສລາຍຮັບຂອງສາຂາໃນຂອບເຂດ IFRS 15 ທີ່ຕິດພັນກັບຄ່າທຳນຽມ ແລະ ຄ່າບໍລິການໄດ້ສະແດງໃນບົດອະທິບາຍເລກທີ 6.3. ສາຂາບໍ່ໄດ້ດັດແກ້ຂໍ້ມູນຕົວເລກສົມທຽບເຊິ່ງມີຜົນກະທົບຂອງການນຳໃຊ້ຍ້ອນຫຼັງບໍ່ໃຫຍ່ຫຼວງ.

### 5.2 *ການນຳສະເໜີຂອງລາຍຮັບດອກເບ້ຍສຸດທິ*

ດັ່ງທີ່ມີຜົນສັກສິດເລີ່ມຈາກ ວັນທີ 1 ມັງກອນ 2018, ວັກທີ 82(a) ຂອງ IAS 1 ກຳນົດໃຫ້ໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ (EIR) ໃນການຄິດໄລ່ລາຍຮັບດອກເບ້ຍເຊິ່ງຈະຖືກສະແດງແຍກຕ່າງຫາກຢູ່ໃນໜ້າຂອງໃບລາຍງານຜົນການດຳເນີນງານ. ນີ້ໝາຍຄວາມວ່າລາຍຮັບດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງແມ່ນຖືກຈຳແນກ ແລະ ສະແດງແຍກອອກຈາກລາຍຮັບດອກເບ້ຍທີ່ໄດ້ຄິດໄລ່ຈາກວິທີອື່ນ.

## 5. ການປ່ຽນແປງໃນນະໂຍບາຍການບັນຊີ ແລະ ການເປີດເຜີຍ (ຕໍ່)

### 5.2 *ການສະແດງລາຍຮັບດອກເບ້ຍສຸດທິ* (ຕໍ່)

ສາຂາໄດ້ເລືອກທີ່ຈະນໍາສະເໜີລາຍຈ່າຍດອກເບ້ຍຂອງສາຂາໃນວິທີທີ່ສອດຄ່ອງ ແລະ ມີເນື້ອໃນທີ່ຄ້າຍຄືກັນກັບລາຍຮັບດອກເບ້ຍ.

ນະໂຍບາຍການບັນຊີຂອງສາຂາກ່ຽວກັບລາຍຮັບ/ລາຍຈ່າຍດອກເບ້ຍ ແລະ ວິທີອັດຕາດອກເບ້ຍທີ່ແທ້ຈິງໃນບົດອະທິບາຍເລກທີ 6.2.1 ແລະ 6.2.2.

## 6. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ

### 6.1 *ການຕີມູນຄ່າທີ່ເປັນສະກຸນເງິນຕາຕ່າງປະເທດ*

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນໄດ້ບັນທຶກໂດຍນໍາໃຊ້ອັດຕາແລກປ່ຽນທັນທີນະມື້ທີ່ເຮັດທຸລະກໍາ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຄືນໃນທ້າຍປີ ຕາມອັດຕາແລກປ່ຽນໃນມື້ຂອງບົດລາຍງານ (ລາຍລະອຽດອັດຕາແລກປ່ຽນຂອງເງິນຕາຕ່າງປະເທດທຽບໃສ່ເງິນກີບນະວັນທີ 31 ທັນວາ 2018 ແລະ 31 ທັນວາ 2017 ໄດ້ສະແດງໃນບົດອະທິບາຍເລກທີ 37). ສ່ວນຜິດດ່ຽງຈາກອັດຕາແລກປ່ຽນທີ່ບໍ່ເກີດຈິງຈາກການຕີມູນຄ່າຂອງບັນດາຊັບສິນ ແລະ ໜີ້ສິນທີ່ເປັນເງິນໃນມື້ຂອງບົດລາຍງານການເງິນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານ.

### 6.2 *ການຮັບຮູ້ລາຍຮັບດອກເບ້ຍ*

#### 6.2.1 *ວິທີອັດຕາດອກເບ້ຍທີ່ແທ້ຈິງ*

ພາຍໃຕ້ທັງ IFRS 9 ແລະ IAS 39 ລາຍຮັບດອກເບ້ຍແມ່ນຖືກບັນທຶກໂດຍນໍາໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສໍາລັບການຕີມູນຄ່າຊັບສິນທາງການເງິນຕາມຕົ້ນທຶນຄ່າເສື່ອມ. ເຊັ່ນດຽວກັນກັບລາຍຈ່າຍດອກເບ້ຍກໍຖືກຄິດໄລ່ໂດຍນໍາໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສໍາລັບບັນດາທຸກໆໜີ້ສິນທາງດ້ານການເງິນທີ່ຖືຄອງຕາມຕົ້ນທຶນຄ່າເສື່ອມ. ອັດຕາດອກເບ້ຍທີ່ແທ້ຈິງແມ່ນອັດຕາສ່ວນຫຼຸດມູນຄ່າການຮັບເງິນສົດໃນອະນາຄົດທີ່ຖືກຄາດຄະເນຜ່ານອາຍຸທີ່ຄາດການໄວ້ຂອງຊັບສິນ ຫຼື ໜີ້ສິນທາງການເງິນ ຫຼື ເປັນເວລາທີ່ເໝາະສົມ ເຊິ່ງທີ່ເປັນຊ່ວງໄລຍະເວລາທີ່ສັ້ນກວ່າ ໂດຍຄິດໄລ່ກັບມູນຄ່າທີ່ມີຢູ່ຂອງຊັບສິນທາງດ້ານການເງິນນັ້ນ.

ອັດຕາດອກເບ້ຍທີ່ແທ້ຈິງ (ແລະ ຕົ້ນທຶນຄ່າເສື່ອມຂອງຊັບສິນທາງການເງິນ) ແມ່ນຖືກຄິດໄລ່ໂດຍການພິຈາລະນາເອົາຕົ້ນທຶນໃນການເຮັດທຸລະກໍາ ແລະ ທຸກໆສ່ວນຫຼຸດ ຫຼື ສ່ວນເພີ່ມ ໃນການໄດ້ມາເຊິ່ງຊັບສິນທາງດ້ານການເງິນ ພ້ອມກັນກັບ ຄ່າທໍານຽມ ແລະ ຕົ້ນທຶນຕ່າງໆ ທີ່ເປັນສ່ວນປະກອບລວມເຂົ້າໃນ ອັດຕາດອກເບ້ຍທີ່ແທ້ຈິງ. ສາຂາຮັບຮູ້ລາຍຮັບດອກເບ້ຍທີ່ໄດ້ນໍາໃຊ້ອັດຕາຜົນຕອບແທນທີ່ສະແດງໃຫ້ເຫັນເຖິງການຄາດຄະເນທີ່ດີທີ່ສຸດຂອງອັດຕາຜົນຕອບແທນຄົງທີ່ຕະຫຼອດອາຍຸທີ່ຄາດໄວ້ຂອງເງິນກູ້. ສະນັ້ນ, ການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງຍັງໄດ້ພິຈາລະນາເຖິງຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໄດ້ເຊິ່ງອາດຈະຖືເປັນຄ່າໃຊ້ຈ່າຍໃນຫຼາຍຂັ້ນຂອງອາຍຸທີ່ຄາດການໄວ້ຂອງຊັບສິນທາງດ້ານການເງິນ ແລະລັກສະນະພິເສດອື່ນໆຂອງວົງຈອນຊີວິດຂອງຜະລິດຕະພັນ (ເຊິ່ງລວມທັງ ການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າທໍານຽມປັບໃໝ).

ຖ້າຫາກວ່າການຄາດການກະແສເງິນສົດຂອງ ຊັບສິນ ຫຼື ໜີ້ສິນ ທາງດ້ານການເງິນທີ່ມີອັດຕາດອກເບ້ຍຄົງທີ່ຖືກປັບປຸງໃໝ່ໂດຍເຫດຜົນທີ່ບໍ່ແມ່ນຍ້ອນຄວາມສ່ຽງທາງດ້ານສິນເຊື່ອ ສະນັ້ນ ສ່ວນປ່ຽນແປງໃນກະແສເງິນສົດຕາມສັນຍາໃນອະນາຄົດແມ່ນຖືກຫຼຸດຄ່າທີ່ອັດຕາດອກເບ້ຍທີ່ແທ້ຈິງເດີມກັບ ການດັດແກ້ທີ່ນໍາມາພາຍຫຼັງຂອງມູນຄ່າທີ່ຖືຢູ່. ສ່ວນແຕກຕ່າງຈາກມູນຄ່າທີ່ຖືຢູ່ກ່ອນໜ້າແມ່ນຖືກບັນທຶກເປັນການດັດແກ້ທີ່ເປັນຄ່າ ບວກ ຫຼື ລົບໃຫ້ແກ່ມູນຄ່າທີ່ຖືຢູ່ຂອງ ຊັບສິນ ຫຼື ໜີ້ສິນທາງດ້ານການເງິນໃນໃບລາຍງານຖານະການເງິນພ້ອມກັບ ການເພີ່ມຂຶ້ນ ຫຼື ຫຼຸດລົງໃນ *ລາຍຮັບ/ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍນໍາໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.*

## 6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 6.2 *ການຮັບຮູ້ລາຍຮັບດອກເບ້ຍ* (ຕໍ່)

#### 6.2.1 *ວິທີອັດຕາດອກເບ້ຍທີ່ແທ້ຈິງ* (ຕໍ່)

ສຳລັບເຄື່ອງມືທາງດ້ານການເງິນທີ່ມີອັດຕາດອກເບ້ຍລອຍຕົວ, ການປະເມີນຄືນກະແສເງິນສົດເປັນໄລຍະເພື່ອທີ່ຈະສະທ້ອນໃຫ້ເຫັນເຖິງການເຄື່ອນໄຫວໃນອັດຕາດອກເບ້ຍໃນຕະຫຼາດຍັງໄດ້ປ່ຽນແປງອັດຕາດອກເບ້ຍທີ່ແທ້ຈິງ ແຕ່ວ່າເມື່ອເຄື່ອງມືຖືກຮັບຮູ້ທຳອິດໃນມູນຄ່າທີ່ເທົ່າກັບຕົ້ນທຶນ, ການປະເມີນຄືນການຈ່າຍດອກເບ້ຍໃນອະນາຄົດແມ່ນບໍ່ກະທົບຢ່າງມີໃນສຳຄັນຕໍ່ມູນຄ່າຕາມບັນຊີຂອງຊັບສິນ ຫຼື ໜີ້ສິນ.

#### 6.2.2 *ລາຍຮັບ/ລາຍຈ່າຍດອກເບ້ຍ ແລະ ຄ້າຍຄື*

ລາຍຮັບດອກເບ້ຍສຸດທິຂອງສາຂາປະກອບດ້ວຍລາຍຮັບດອກເບ້ຍ ແລະ ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ດ້ວຍວິທີອັດຕາດອກເບ້ຍທີ່ແທ້ຈິງ. ສຳລັບລາຍຮັບ ແລະ ລາຍຈ່າຍດອກເບ້ຍທັງສອງແມ່ນຖືກສະແດງແຍກຕ່າງຫາກຢູ່ໜ້າຂອງໃບລາຍງານຜົນການດຳເນີນງານເພື່ອສະໜອງຂໍ້ມູນທີ່ຄືກັນ ແລະ ສາມາດສົມທຽບກັນໄດ້.

ໃນ*ວິທີດອກເບ້ຍທີ່ແທ້ຈິງທີ່ໄດ້ນຳໃຊ້ຄິດໄລ່ລາຍຮັບ/ລາຍຈ່າຍດອກເບ້ຍ*, ສາຂາພຽງແຕ່ລວມເອົາດອກເບ້ຍຂອງບັນດາເຄື່ອງມືທາງດ້ານການເງິນເຫຼົ່ານີ້ເຊິ່ງຖືກອະທິບາຍໃນບົດອະທິບາຍເລກທີ 6.2.1 ດ້ານເທິງ.

ສາຂາຄຳນວນລາຍຮັບດອກເບ້ຍຈາກຊັບສິນທາງການເງິນຍົກເວັ້ນບັນດາຊັບສິນທາງການເງິນທີ່ໄດ້ພິຈາລະນາຫັກຄ່າເສື່ອມມູນຄ່າດ້ານສິນເຊື່ອ ໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບມູນຄ່າຕາມບັນຊີຂອງຊັບສິນທາງການເງິນ.

ເມື່ອຊັບສິນທາງການເງິນໄດ້ຖືກຫັກຄ່າເສື່ອມມູນຄ່າທາງດ້ານສິນເຊື່ອ (ດັ່ງທີ່ໄດ້ອະທິບາຍເພີ່ມເຕີມໃນ ບົດອະທິບາຍເລກທີ 6.10.1 ແລະ ດັ່ງນັ້ນແມ່ນກ່ຽວພັນກັບ 'ຂັ້ນທີ 3', ສາຂາຄຳນວນລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບລາຄາທຶນຕັດຈຳໜ່າຍສຸດທິຂອງຊັບສິນທາງດ້ານການເງິນ. ຖ້າຫາກວ່າຊັບສິນທາງດ້ານການເງິນ ໄດ້ຮັບການປັບປຸງ (ດັ່ງທີ່ໄດ້ລະບຸໃນ ບົດອະທິບາຍເລກທີ 6.10.1) ແລະ ບໍ່ມີການເສື່ອມມູນຄ່າທາງດ້ານສິນເຊື່ອອີກຕໍ່ໄປ, ສາຂາສາມາດກັບຄືນໄປຄິດໄລ່ລາຍຮັບດອກເບ້ຍຕາມພື້ນຖານຈຳນວນເຕັມໄດ້.

### 6.3 *ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ*

ສາຂາມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການທາງການເງິນຫຼາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນຈຳນວນທີ່ສະທ້ອນໃຫ້ເຫັນເຖິງຄ່າຕອບແທນທີ່ສາຂາຄາດວ່າມີສິດທີ່ຈະໄດ້ຮັບໃນການແລກປ່ຽນກັບການບໍລິການທີ່ສາຂາສະໜອງໃຫ້.

ພັນທະຜູກພັນໃນການດຳເນີນງານ ພ້ອມກັນກັບໄລຍະເວລາຂອງຄວາມເພິ່ງພໍໃຈ ແມ່ນຖືກລະບຸ ແລະ ກຳນົດໃນເວລາເລີ່ມສັນຍາ. ລາຍຮັບຂອງສາຂາຕາມສັນຍາບໍ່ໄດ້ລວມເອົາ ພັນທະຜູກພັນໃນການດຳເນີນງານຫຼາຍອັນພ້ອມກັນ ດັ່ງທີ່ໄດ້ອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 6.3.1 (ແລະ 6.3.2 ດ້ານລຸ່ມ)

ເມື່ອສາຂາສະໜອງການບໍລິການໃຫ້ແກ່ລູກຄ້າ, ການພິຈາລະນາເພື່ອອອກໃບເກັບເງິນ ແລະ ໂດຍທົ່ວໄປແມ່ນເກີດຂຶ້ນທັນທີຕາມຄວາມພຶງພໍໃຈໃນການໃຫ້ບໍລິການນະເວລານັ້ນ ຫຼື ສິ້ນສຸດຂອງໄລຍະສັນຍາໃນການໃຫ້ບໍລິການດັ່ງກ່າວ (ຍົກເວັ້ນກໍລະນີສະເພາະທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 6.3.1 (ແລະ 6.3.2 ລຸ່ມນີ້)

ໂດຍທົ່ວໄປສາຂາຈະສະຫຼຸບວ່າເປັນຕົ້ນທຶນໃນສັນຍາລາຍຮັບເນື່ອງຈາກວ່າມັນເປັນການຄວບຄຸມການບໍລິການຢ່າງເປັນຮູບແບບກ່ອນການສົ່ງມອບການບໍລິການດັ່ງກ່າວໃຫ້ກັບລູກຄ້າ.

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.3 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ* (ຕໍ່)

*6.3.1 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ດຳເນີນດ້ານຂໍ້ຜູກພັນທີ່ໄດ້ສຳເລັດໃນຊ່ວງຂອງເວລາ*

ການດຳເນີນດ້ານຂໍ້ຜູກພັນທີ່ໄດ້ສຳເລັດໃນຊ່ວງຂອງເວລາ ລວມມີການບໍລິການທີ່ລູກຄ້າໄດ້ຮັບ ແລະ ນຳໃຊ້ຜົນປະໂຫຍດທີ່ໄດ້ຮັບການສະໜອງຈາກການດຳເນີນງານຂອງສາຂາໄປພ້ອມໆກັນ.

*6.3.2 ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຈາກການບໍລິການທີ່ດຳເນີນດ້ານຂໍ້ຜູກພັນທີ່ໄດ້ສຳເລັດນະເວລາໃດໜຶ່ງ*

ການດຳເນີນດ້ານຂໍ້ຜູກພັນທີ່ໄດ້ສຳເລັດນະເວລາໃດໜຶ່ງແມ່ນຖືກຮັບຮູ້ເມື່ອການຄວບຄຸມຂອງການບໍລິການຖືກສົ່ງມອບແກ່ລູກຄ້າ. ເຊິ່ງໂດຍທົ່ວໄປແມ່ນຢູ່ໃນການສິ້ນສຸດຂອງ ທຸລະກຳ ຫຼື ການບໍລິການ ຫຼື, ຄ່າທຳນຽມ ຫຼື ສ່ວນປະກອບຂອງຄ່າທຳນຽມທີ່ໄດ້ເຊື່ອມຕໍ່ເຖິງ ການດຳເນີນງານອັນແນ່ນອນ ຫຼັງຈາກການສະໜອງຕາມເງື່ອນໄຂການປະຕິບັດງານທີ່ກ່ຽວຂ້ອງ. ສິ່ງເຫຼົ່ານີ້ໄດ້ລວມເອົາ ຄ່າທຳນຽມ ແລະ ຄ່າບໍລິການທີ່ມາຈາກ ການເຈລະຈາ ຫຼື ການເຂົ້າຮ່ວມການເຈລະຈາຂອງທຸລະກຳສຳລັບບຸກຄົນທີສາມ ເຊັ່ນ ການຈັດການ/ການເຂົ້າຮ່ວມ ຫຼື ການເຈລະຈາຂອງການຊື້ຂາຍຮຸ້ນ ຫຼື ຫຼັກຊັບອື່ນໆ ຫຼື ການຊື້ຂາຍທຸລະກິດ, ຄ່ານາຍໜ້າ, ແລະ ຄ່າທຳນຽມໃນການຄ້ຳປະກັນ.

ໂດຍທົ່ວໄປສາຂາມີຂໍ້ຜູກພັນດຽວໃນການດຳເນີນງານເຊິ່ງກ່ຽວຂ້ອງກັບການບໍລິການເຫຼົ່ານີ້ເຊິ່ງແມ່ນການເຮັດໃຫ້ສຳເລັດຂອງທຸລະກຳດັ່ງທີ່ຖືກລະບຸໃນສັນຍາ.

*6.3.3 ຍອດເຫຼືອຂອງສັນຍາ*

ຂໍ້ມູນດັ່ງລຸ່ມນີ້ແມ່ນຖືກຮັບຮູ້ໃນໃບລາຍງານຖານະທາງການເງິນທີ່ເກີດຈາກລາຍຮັບຈາກສັນຍາກັບລູກຄ້າ:

- 'ໜີ້ຕ້ອງຮັບຄ່າທຳນຽມ ແລະ ຄ່າບໍລິການ' ທີ່ລວມເຂົ້າເປັນ 'ຊັບສິນອື່ນໆ' ເຊິ່ງສະແດງໃຫ້ເຫັນເຖິງສິດຂອງສາຂາໃນການພິຈາລະນາຕໍ່ຈຳນວນທີ່ບໍ່ມີເງື່ອນໄຂ (ຕົວຢ່າງ ມີພຽງການເວລາທີ່ເປັນໂຕກຳນົດກ່ອນການຊຳລະເມື່ອການພິຈາລະນາໄດ້ເກີດຂຶ້ນ). ໜີ້ຕ້ອງຮັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວຖືກຕີມູນຄ່າຕາມຕົ້ນທຶນຄ່າເສື່ອມ ແລະ ຈະຖືກຫັກເງິນແຮຄ່າເສື່ອມມູນຄ່າຂອງ IFRS 9.
- 'ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຮັບລ່ວງໜ້າ' ທີ່ລວມເຂົ້າເປັນ 'ໜີ້ສິນອື່ນໆ' ເຊິ່ງສະແດງເປັນຂໍ້ຜູກພັນຂອງສາຂາທີ່ຈະຕ້ອງສົ່ງມອບການບໍລິການໃຫ້ແກ່ລູກຄ້າ ເຊິ່ງສາຂາໄດ້ຮັບການພິຈາລະນາ (ຫຼື ຈຳນວນຂອງການພິຈາລະນາໄດ້ເກີດຂຶ້ນ) ຈາກລູກຄ້າແລ້ວ. ໜີ້ສິນສຳລັບ ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຮັບລ່ວງໜ້າແມ່ນຖືກຮັບຮູ້ເມື່ອມີການປະຕິບັດການຊຳລະ ຫຼື ການຊຳລະໄດ້ເກີດຂຶ້ນ (ໄວກວ່າກຳນົດ). ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຮັບລ່ວງໜ້າຖືກຮັບຮູ້ເປັນລາຍຮັບເມື່ອສາຂາດຳເນີນການ.

*6.4 ຂາດທຶນສຸດທິໃນການຢຸດຮັບຮູ້ຊັບສິນທາງດ້ານການເງິນທີ່ໄດ້ຕີມູນຄ່າຕາມຕົ້ນທຶນຄ່າເສື່ອມ*

ຂາດທຶນສຸດທິໃນການຢຸດຮັບຮູ້ຊັບສິນທາງດ້ານການເງິນທີ່ໄດ້ຕີມູນຄ່າຕາມຕົ້ນທຶນຄ່າເສື່ອມລວມເອົາ ຂາດທຶນ (ຫຼື ລາຍຮັບ) ທີ່ຮັບຮູ້ໃນຍອດຂາຍ ຫຼື ການຢຸດຮັບຮູ້ຊັບສິນທາງດ້ານການເງິນທີ່ໄດ້ຕີມູນຄ່າຕາມຕົ້ນທຶນຄ່າເສື່ອມທີ່ໄດ້ຄຳນວນຕາມສ່ວນປ່ຽນແປງລະຫວ່າງມູນຄ່າຕາມບັນຊີ (ລວມເອົາຄ່າເສື່ອມມູນຄ່າ) ແລະ ຈຳນວນເງິນທີ່ໄດ້ຮັບ.

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.5 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ*

*6.5.1 ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ໃຫ້ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ສາຂາກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ກຳນົດໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີຂອງລູກຄ້າຮຽບຮ້ອຍແລ້ວ. ສາຂາຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອສາຂາໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

*6.5.2 ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບເງື່ອນໄຂສັນຍາ ແລະ ຕົວແບບທຸລະກິດສຳລັບການບໍລິຫານເຄື່ອງມື ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 6.7.1.1 ແລະ 6.7.1.2 ເຄື່ອງມືທາງດ້ານການເງິນແມ່ນຖືກຕີມູນຄ່າເບື້ອງຕົ້ນໃນມູນຄ່າຍຸດຕິທຳ (ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 6.6) ບວກກັບ ຫຼື ລົບອອກຕົ້ນທຶນທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນຖືກບັນທຶກໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ. ໜີ້ຕ້ອງຮັບທາງດ້ານການເງິນແມ່ນຖືກຕີມູນຄ່າໃນລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ. ເມື່ອມູນຄ່າຍຸດຕິທຳຂອງເຄື່ອງມືທາງດ້ານການເງິນໃນການຮັບຮູ້ເບື້ອງຕົ້ນແຕກຕ່າງຈາກລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ, ສາຂາຮັບຜິດຊອບສຳລັບກຳໄລ ຫຼື ຂາດທຶນ ມື້ທີ 1 ດັ່ງທີ່ໄດ້ສະແດງຢູ່ດ້ານລຸ່ມ.

*6.5.3 ກຳໄລ ຫຼື ຂາດທຶນໃນ ມື້ທີ 1*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສຳຫຼວດໃນຕະຫຼາດ, ສາຂາຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳໃນລາຍຮັບສຸດທິຈາກການຄ້າ. ໃນກໍລະນີທີ່ມູນຄ່າຍຸດຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳແມ່ນຖືກເລື່ອນໄປ ແລະ ຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນຖືກສະສາງ.

*6.5.4 ປະເພດການຕີມູນຄ່າຂອງຊັບສິນ ແລະ ໜີ້ສິນທາງດ້ານການເງິນ*

ນັບຈາກ ວັນທີ 1 ມັງກອນ 2018, ສາຂາຈັດປະເພດຊັບສິນທາງດ້ານການເງິນທັງໝົດອີງຕາມແບບຈຳລອງທຸລະກິດສຳລັບການບໍລິຫານຊັບສິນ ແລະ ເງື່ອນໄຂສັນຍາຂອງຊັບສິນ, ເຊິ່ງຕີມູນຄ່າດັ່ງລຸ່ມນີ້:

- ຕົ້ນທຶນຄ່າເສື່ອມ, ດັ່ງທີ່ອະທິບາຍໃນບົດອະທິບາຍຊ້ອນທ້າຍທີ 6.7.1

ກ່ອນວັນທີ 1 ມັງກອນ 2018, ສາຂາໄດ້ຈັດປະເພດຊັບສິນທາງດ້ານການເງິນເປັນ ເງິນກູ້ ແລະ ໜີ້ຕ້ອງຮັບ (ຕົ້ນທຶນຄ່າເສື່ອມ), ຫຼື ຖືຄອງຈົນຄົບກຳໜົດ (ຕົ້ນທຶນຄ່າເສື່ອມ) ດັ່ງທີ່ອະທິບາຍໃນບົດອະທິບາຍທີ 6.7.1.

ໜີ້ສິນທາງດ້ານການເງິນຂອງສາຂາລວມເອົາບັນດາໜີ້ສິນທາງການເງິນທີ່ໄດ້ຕີມູນຄ່າຕາມຕົ້ນທຶນຄ່າເສື່ອມ.

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.6 ການກຳນົດມູນຄ່າຍຸດຕິທຳ*

ສາຂານຳໃຊ້ເຕັກນິກການຕີມູນຄ່າທີ່ຖືກນຳໃຊ້ໂດຍທົ່ວໄປຂອງຜູ້ເຂົ້າຮ່ວມໃນຕະຫຼາດ ເພື່ອກຳນົດລາຄາເຄື່ອງມືທາງການເງິນ ແລະ ເຕັກນິກຕ່າງໆທີ່ໄດ້ສະແດງເຖິງການສະໜອງການຄາດຄະເນລາຄາທີ່ເຊື່ອຖືໄດ້ຂອງລາຄາທີ່ໄດ້ມາຈາກທຸລະກຳຕະຫຼາດຕົວຈິງ. ເພື່ອສະແດງໃຫ້ເຫັນວ່າມູນຄ່າຍຸດຕິທຳນັ້ນມີທີ່ມາແນວໃດ, ເຄື່ອງມືທາງດ້ານການເງິນແມ່ນຖືກຈັດປະເພດໂດຍອີງໃສ່ເຕັກນິກການຈັດລຳດັບຂັ້ນຂອງການປະເມີນມູນຄ່າ, ດັ່ງສະຫຼຸບລຸ່ມນີ້:

- ເຄື່ອງມືທາງດ້ານການເງິນໃນ ລະດັບທີ 1 - ບັນດາເຄື່ອງມືທາງດ້ານການເງິນເຫຼົ່ານີ້ແມ່ນ ຂໍ້ມູນທີ່ຖືກໃຊ້ໃນການຕີມູນຄ່າແມ່ນ ລາຄາສະເໜີ ຊື້-ຂາຍທີ່ບໍ່ໄດ້ດັດແກ້ຈາກຕະຫຼາດຊື້ຂາຍຄ່ອງສຳລັບຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງທີ່ສາຂາມີ ນະວັນທີ ການຕີມູນຄ່າ. ສາຂາຈະພິຈາລະນາວ່າຕະຫຼາດນັ້ນເປັນຕະຫຼາດຊື້ຂາຍຄ່ອງ ຖ້າຫາກວ່າມີກິດຈະກຳການຄ້າທີ່ພຽງພໍເຊິ່ງກ່ຽວພັນກັບບໍລິມາດ ແລະ ສະພາບຄ່ອງຂອງ ຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ແລະ ເມື່ອມີການຜູກມັດ ແລະ ມີລາຄາທີ່ສາມາດໃຊ້ສິດ ແຈ້ງວ່າ ສາມາດທີ່ຈະນຳໃຊ້ໄດ້ ນະວັນທີທີ່ລາຍງານ.

- ເຄື່ອງມືທາງດ້ານການເງິນໃນ ລະດັບທີ 2 - ບັນດາເຄື່ອງມືທາງດ້ານການເງິນເຫຼົ່ານີ້ແມ່ນ ຂໍ້ມູນທີ່ຖືກໃຊ້ສຳລັບການຕີມູນຄ່າ ແລະ ມີຄວາມສຳຄັນ ເຊິ່ງມາຈາກຂໍ້ມູນຕະຫຼາດທີ່ໄດ້ສັງເກດ ໂດຍກົງ ຫຼື ທາງອ້ອມ ຕະຫຼອດໄລຍະຂອງອາຍຸຂອງເຄື່ອງມື. ຂໍ້ມູນດັ່ງກ່າວນັ້ນແມ່ນປະກອບດ້ວຍ ລາຄາສະເໜີຊື້-ຂາຍສຳລັບ ຊັບສິນ ຫຼື ໜີ້ສິນທີ່ຄ້າຍຄືກັນໃນຕະຫຼາດຊື້ຂາຍຄ່ອງ, ລາຄາສະເໜີຊື້-ຂາຍສຳລັບ ຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ໃນຕະຫຼາດທີ່ບໍ່ແມ່ນຕະຫຼາດຊື້ຂາຍຄ່ອງ, ແລະ ຂໍ້ມູນທີ່ສາມາດສັງເກດໄດ້ນອກຈາກ ລາຄາສະເໜີຊື້-ຂາຍ ເຊັ່ນວ່າ ອັດຕາດອກເບ້ຍ ແລະ ເສັ້ນອັດຕາຜົນຕອບແທນ, ຄວາມເໜັງຕີງ, ແລະ ການແຜ່ຂະຫຍາຍຂອງສິນເຊື່ອ. ນອກຈາກນີ້, ການດັດແກ້ແມ່ນອາດຈະຕ້ອງການ ສຳລັບເງື່ອນໄຂ ຫຼື ຖານະ ຂອງຊັບສິນ ຫຼື ສ່ວນຂະຫຍາຍ ທີ່ກ່ຽວຂ້ອງກັບລາຍການທີ່ສາມາດປຽບທຽບໄດ້ໃນເຄື່ອງມືທີ່ມີລາຄາ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າການດັດແກ້ນັ້ນແມ່ນຖືກອີງໃສ່ຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີໃນສຳຄັນຕໍ່ການຕີມູນຄ່າທັງໝົດ, ສາຂາຈະຈັດປະເພດເຄື່ອງມືນັ້ນເປັນ ລະດັບທີ 3.

- ເຄື່ອງມືທາງດ້ານການເງິນໃນ ລະດັບທີ 3 - ບັນດາເຄື່ອງມືທາງດ້ານການເງິນເຫຼົ່ານີ້ແມ່ນລວມຢູ່ໃນ ໜຶ່ງ ຫຼື ຫຼາຍຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີໃນສຳຄັນຕໍ່ການຕີມູນຄ່າໂດຍທັງໝົດ.

ສາຂາປະເມີນການຈັດລະດັບໃນແຕ່ລະໄລຍະການລາຍງານເທື່ອລະເຄື່ອງມື ແລະ ຈັດປະເພດເຄື່ອງມືຄືນເມື່ອຈຳເປັນໂດຍອີງຕາມຂໍ້ເທັດຈິງໃນທ້າຍໄລຍະການລາຍງານ.

*6.7 ຊັບສິນ ແລະ ໜີ້ສິນທາງດ້ານການເງິນ*

*6.7.1 ເງິນຝາກຢູ່ທະນາຄານອື່ນ, ເງິນກູ້ຢືມໃຫ້ແກ່ລູກຄ້າ ແລະ ການລົງທຶນທາງດ້ານການເງິນໃນຕົ້ນທຶນຄ່າເສື່ອມ*

ກ່ອນໜ້າວັນທີ 1 ມັງກອນ 2018, ເງິນຝາກຢູ່ທະນາຄານອື່ນ ແລະ ເງິນກູ້ຢືມໃຫ້ແກ່ລູກຄ້າ ລວມທັງຊັບສິນທາງການເງິນທີ່ບໍ່ແມ່ນກາສານອະນຸພັນທີ່ມີການຈ່າຍແບບຄົງທີ່ ຫຼື ແບບທີ່ສາມາດກຳນົດໄດ້ເຊິ່ງບໍ່ໄດ້ຖືກແຈ້ງຢູ່ໃນຕະຫຼາດຊື້ຂາຍຄ່ອງ ແມ່ນຍົກເວັ້ນບັນດາເຫຼົ່ານີ້:

- ທີ່ສາຂາຕັ້ງໃຈທີ່ຈະຂາຍທັນທີ ຫຼື ໃນໄລຍະອັນໃກ້ນີ້
- ທີ່ສາຂາ ໂດຍມີການຮັບຮູ້ເບື້ອງຕົ້ນ, ລະບຸໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ (FVTPL) ຫຼື ເພື່ອຂາຍ
- ສຳລັບທີ່ສາຂາອາດຈະບໍ່ຟື້ນຟູການລົງທຶນເບື້ອງຕົ້ນໂດຍທັງໝົດ ຍົກເວັ້ນຍ້ອນວ່າການເສື່ອມລົງຂອງສິນເຊື່ອ ເຊິ່ງຖືກລະບຸໃນ ຫຼັກຊັບເພື່ອຂາຍ.

ຕັ້ງແຕ່ວັນທີ 1 ມັງກອນ 2018, ສາຂາສາມາດຕີມູນຄ່າພຽງແຕ່ ເງິນຝາກຢູ່ທະນາຄານອື່ນ, ເງິນກູ້ຢືມໃຫ້ແກ່ບັນດາລູກຄ້າ ແລະ ການລົງທຶນທາງດ້ານການເງິນອື່ນໆໃນຕົ້ນທຶນຄ່າເສື່ອມ ຖ້າຫາກວ່າ ເປັນໄປຕາມທັງສອງເງື່ອນໄຂດັ່ງລຸ່ມນີ້:

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.7 ຊັບສິນ ແລະ ໜີ້ສິນທາງດ້ານການເງິນ* (ຕໍ່)

*6.7.1 ເງິນຝາກຢູ່ທະນາຄານອື່ນ, ເງິນກູ້ຢືມໃຫ້ແກ່ລູກຄ້າ ແລະ ການລົງທຶນທາງດ້ານການເງິນໃນລາຄາຕົ້ນທຶນຕັດຈຳໜ່າຍ* (ຕໍ່)

- ຊັບສິນທາງດ້ານການເງິນທີ່ຖືກຖືຄອງພາຍໃນຕົວແບບທຸລະກິດພ້ອມດ້ວຍຈຸດປະສົງທີ່ຖືຄອງຊັບສິນທາງດ້ານການເງິນເພື່ອທີ່ຈະເກັບເອົາກະແສເງິນສົດຕາມສັນຍາ;
- ເງື່ອນໄຂຕາມສັນຍາຂອງຊັບສິນທາງດ້ານການເງິນກໍ່ໃຫ້ເກີດກະແສເງິນສົດທີ່ແມ່ນກະແສເງິນສົດຕາມສັນຍາໄດ້ມາຈາກເງິນຕົ້ນ ແລະ ດອກເບ້ຍເທົ່ານັ້ນ (SPPI) ໃນມູນຄ່າເງິນຕົ້ນທີ່ມີຢູ່.

ລາຍລະອຽດຂອງເງື່ອໄຂເຫຼົ່ານີ້ແມ່ນຖືກລະບຸໄວ້ລຸ່ມນີ້.

*6.7.1.1 ການປະເມີນຕົວແບບທຸລະກິດ*

ສາຂາພິຈາລະນາຕົວແບບທຸລະກິດໃນລະດັບທີ່ສະທ້ອນໄດ້ດີທີ່ສຸດເຖິງວິທີບໍລິຫານກຸ່ມຂອງຊັບສິນທາງການເງິນເພື່ອບັນລຸວັດຖຸປະສົງຂອງທຸລະກິດ. ຮູບແບບທຸລະກິດຂອງສາຂາແມ່ນບໍ່ຖືກປະເມີນບົນພື້ນຖານເຄື່ອງມືຕໍ່ເຄື່ອງມື ແຕ່ວ່າປະເມີນໃນລະດັບທີ່ສູງຂຶ້ນຂອງກຸ່ມຫຼັກຊັບ ແລະ ອີງໃສ່ປັດໃຈທີ່ສາມາດສັງເກດໄດ້ເຊັ່ນວ່າ:

- ວິທີທີ່ຜົນການດຳເນີນງານຂອງຕົວແບບທຸລະກິດ ແລະ ຊັບສິນທາງດ້ານການເງິນທີ່ຖືຄອງພາຍໃນຮູບແບບທຸລະກິດນັ້ນຖືກປະເມີນ ແລະ ລາຍງານໃຫ້ແກ່ບຸກຄົນທີ່ສຳຄັນໃນການບໍລິຫານຂອງອົງກອນ
- ຄວາມສ່ຽງທີ່ກະທົບຕໍ່ຜົນຂອງຕົວແບບທຸລະກິດ( ແລະ ຊັບສິນທາງດ້ານການເງິນທີ່ຖືຄອງພາຍໃນຮູບແບບທຸລະກິດ) ແລະ ໂດຍສະເພາະວິທີບໍລິຫານຄວາມສ່ຽງເຫຼົ່ານັ້ນ
- ວິທີການທີ່ຜູ້ບໍລິຫານຂອງທຸລະກິດນັ້ນໄດ້ຮັບຜົນຕອບແທນແນວໃດ( ຕົວຢ່າງ ຄ່າຕອບແທນແມ່ນຖືກອີງໃສ່ມູນຄ່າຍຸດຕິທຳຂອງຊັບສິນທີ່ໄດ້ບໍລິຫານ ຫຼືວ່າ ຕາມກະແສເງິນສົດຕາມສັນຍາທີ່ເກັບໄດ້)
- ຄວາມຖີ່, ມູນຄ່າ ແລະ ເວລາຂອງຍອດຂາຍ ທີ່ຄາດການໄວ້ ກໍແມ່ນອີກແງ່ມູມໜຶ່ງທີ່ສຳຄັນໃນການປະເມີນຂອງສາຂາ

ການປະເມີນຕົວແບບທຸລະກິດແມ່ນຖືກອີງໃສ່ສະຖານະການທີ່ຄາດການໄວ້ຢ່າງສົມເຫດສົມຜົນໂດຍທີ່ບໍ່ໄດ້ຄຳນຶງເຖິງສະຖານະການໃນ 'ກໍລະນີທີ່ຮ້າຍແຮງທີ່ສຸດ' ຫຼື 'ກໍລະນີທີ່ກົດດັນ'. ຖ້າຫາກວ່າກະແສເງິນສົດຫຼັງຈາກການຮັບຮູ້ໃນເບື້ອງຕົ້ນແມ່ນຖືກຮັບຮູ້ໃນທາງທີ່ແຕກຕ່າງຈາກສິ່ງທີ່ຄາດຫວັງໄວ້ດັ່ງເດີມຂອງສາຂາ, ສາຂາຈະບໍ່ປ່ຽນແປງການຈັດປະເພດຂອງຊັບສິນທາງການເງິນທີ່ເຫຼືອຢູ່ທີ່ຖືຄອງໃນຮູບແບບທຸລະກິດ ແຕ່ວ່າ ລວມຂໍ້ມູນດັ່ງກ່າວເຂົ້າກັນເມື່ອປະເມີນຊັບສິນທາງການເງິນທີ່ ໃໝ່ຫຼື ຊື້ເຂົ້າໃໝ່ໃນອະນາຄົດ.

*6.7.1.2 ການທົດສອບ SPPI*

ດັ່ງຂັ້ນຕອນທີສອງຂອງຂັ້ນຕອນການຈັດປະເພດ ສາຂາປະເມີນເງື່ອນໄຂຕາມສັນຍາຂອງຊັບສິນທາງດ້ານການເງິນເພື່ອລະບຸວ່າກົງກັບເງື່ອນໄຂຂອງການທົດສອບ SPPI ຫຼື ບໍ່.

'ເງິນຕົ້ນ' ສຳລັບຈຸດປະສົງຂອງການທົດສອບນີ້ແມ່ນຖືກລະບຸໃນມູນຄ່າຍຸດຕິທຳຂອງຊັບສິນທາງການເງິນໃນການຮັບຮູ້ເບື້ອງຕົ້ນ ແລະ ອາດຈະປ່ຽນແປງຕະຫຼອດອາຍຸຂອງຊັບສິນທາງດ້ານການເງິນ (ຕົວຢ່າງ ຖ້າຫາກວ່າມີການຊຳລະເງິນຕົ້ນ ຫຼື ຄ່າເສື່ອມມູນຄ່າຂອງ ສ່ວນເພີ່ມ/ສ່ວນຫຼຸດ).

ອົງປະກອບທີ່ສຳຄັນທີ່ສຸດຂອງດອກເບ້ຍພາຍໃຕ້ສັນຍາການປ່ອຍກູ້ໂດຍທົ່ວໄປແລ້ວແມ່ນໄດ້ຮັບການພິຈາລະນາມູນຄ່າເງິນຕາມເວລາ ແລະ ຄວາມສ່ຽງດ້ານສິນເຊື່ອ. ເພື່ອທີ່ຈະສ້າງການປະເມີນ SPPI, ສາຂາໄດ້ນຳໃຊ້ການປະເມີນ ແລະ ພິຈາລະນາປັດໃຈທີ່ກ່ຽວຂ້ອງເຊັ່ນວ່າ ສະກຸນເງິນທີ່ຊັບສິນທາງການເງິນນັ້ນຖືກຄິດເປັນ ແລະ ໄລຍະເວລາທີ່ກຳນົດອັດຕາດອກເບ້ຍ.

## 6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 6.7 *ຊັບສິນ ແລະ ໜີ້ສິນທາງດ້ານການເງິນ* (ຕໍ່)

### 6.7.1 *ເງິນຝາກຢູ່ທະນາຄານອື່ນ, ເງິນກູ້ຢືມໃຫ້ແກ່ລູກຄ້າ ແລະ ການລົງທຶນທາງດ້ານການເງິນໃນລາຄາຕົ້ນທຶນຕັດຈຳໜ່າຍ* (ຕໍ່)

### 6.7.1.2 *ການທົດສອບ SPPI* (ຕໍ່)

ໃນທາງກົງກັນຂ້າມ, ເງື່ອນໄຂຕາມສັນຍາທີ່ສະເໜີຫຼາຍກວ່າຍອດທຸລະກຳທີ່ຕໍ່າສຸດ ຕໍ່ຄວາມສ່ຽງ ແລະ ຄວາມບໍ່ແນ່ນອນ ໃນກະແສເງິນສົດຕາມສັນຍາທີ່ບໍ່ກ່ຽວຂ້ອງກັບການຈັດການສິນເຊື່ອພື້ນຖານບໍ່ກໍ່ໃຫ້ເກີດກະແສເງິນສົດຕາມສັນຍາທີ່ໄດ້ມາຈາກເງິນຕົ້ນ ແລະ ດອກເບ້ຍເທົ່ານັ້ນໃນມູນຄ່າທີ່ຄົງຄ້າງຢູ່. ໃນກໍລະນີດັ່ງກ່າວນັ້ນ, ຊັບສິນທາງດ້ານການເງິນແມ່ນຖືກຮຽກຮ້ອງໃຫ້ຕີມູນຄ່າໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ.

### 6.7.4 *ການສານໜີ້ທີ່ອອກຈຳໜ່າຍ ແລະ ກອງທຶນກູ້ຢືມອື່ນໆ*

ຫຼັງຈາກການຕີມູນຄ່າຄັ້ງທຳອິດ, ການສານໜີ້ທີ່ອອກຈຳໜ່າຍ ແລະ ກອງທຶນກູ້ຢືມອື່ນໆແມ່ນຖືກຕີມູນຄ່າພາຍຫຼັງໃນຕົ້ນທຶນຄ່າເສື່ອມ. ຕົ້ນທຶນຄ່າເສື່ອມແມ່ນຖືກຄິດໄລ່ໂດຍການພິຈາລະນາສ່ວນຫຼຸດ ຫຼື ສ່ວນເພີ່ມໃດໆ ໃນກອງທຶນທີ່ອອກຈຳໜ່າຍ ແລະ ລາຄາທຶນທີ່ລວມເອົາອັດຕາດອກເບ້ຍທີ່ແທ້ຈິງ.

### 6.7.5 *ການຄໍ້າປະກັນທາງດ້ານການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້*

ສາຂາອອກໜັງສືຄໍ້າປະກັນທາງດ້ານການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້.

ໜັງສືຄໍ້າປະກັນທາງດ້ານການເງິນແມ່ນຖືກຮັບຮູ້ເບື້ອງຕົ້ນໃນເອກະສານລາຍງານທາງດ້ານການເງິນ (ພ້ອມດ້ວຍ ເງິນແຮ)ໃນມູນຄ່າຍຸດຕິທຳ, ເຊິ່ງເປັນສ່ວນເພີ່ມທີ່ໄດ້ຮັບ. ສ່ວນເພີ່ມທີ່ໄດ້ຮັບແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນ ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ ໃນພື້ນຖານແບບເສັ້ນຊື່ຕະຫຼອດອາຍຸຂອງການຄໍ້າປະກັນນັ້ນ.

ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້ ແລະ ໜັງສືສິນເຊື່ອ ແມ່ນພັນທະຜູກພັນພາຍໃຕ້ເຊິ່ງຕະຫຼອດອາຍຸຂອງພັນທະຜູກພັນ, ສາຂາຖືກກຳນົດໃຫ້ສະໜອງເງິນກູ້ພ້ອມກັບເງື່ອນໄຂທີ່ກຳນົດໄວ້ກ່ອນໜ້າໃຫ້ແກ່ລູກຄ້າ.

ພາຍໃຕ້ IFRS 9 ທັງການຄໍ້າປະກັນທາງດ້ານການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້ແມ່ນຢູ່ໃນຂອບເຂດເງື່ອນໄຂຂອງຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດວ່າຈະເກີດຂຶ້ນ (ECL). ມູນຄ່າໃນນາມຕາມສັນຍາຂອງການຄໍ້າປະກັນທາງດ້ານການເງິນ, ໜັງສືສິນເຊື່ອ ແລະ ພັນທະຜູກພັນເງິນກູ້ທີ່ບໍ່ໄດ້ເບີກໃຊ້, ເຊິ່ງເງິນກູ້ທີ່ໄດ້ຕົກລົງກັນນັ້ນແມ່ນຢູ່ໃນເງື່ອນໄຂຕະຫຼາດ, ເຊິ່ງບໍ່ຖືກບັນທຶກໃນໃບລາຍງານຖານະທາງດ້ານການເງິນ. ມູນຄ່າໃນນາມຂອງການສານເຫຼົ່ານີ້ພ້ອມກັບຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດວ່າຈະເກີດຂຶ້ນທີ່ກ່ຽວຂ້ອງນັ້ນແມ່ນຖືກສະແດງໃນ ບົດອະທິບາຍເລກທີ 27.

### 6.7.6 *ຫຼັກຊັບຖືໄວ້ຈົນຄົບກຳນົດ (ນະໂຍບາຍມີຜົນນຳໃຊ້ກ່ອນວັນທີ 1 ມັງກອນ 2018)*

ຫຼັກຊັບຖືໄວ້ຈົນຄົບກຳນົດບໍ່ແມ່ນອະນຸພັນທາງການເງິນ ທີ່ຄົງທີ່ ຫຼື ການຊຳລະຄືນສາມາດກຳນົດໄດ້ ແລະ ມີມື້ຄົບກຳນົດທີ່ແນ່ນອນ ເຊິ່ງສາຂາມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກຳນົດ. ຫຼັງຈາກການປະເມີນໃນເບື້ອງຕົ້ນ, ຫຼັກຊັບຖືໄວ້ຈົນຄົບກຳນົດຈະຖືກປະເມີນໃນໄລຍະຕໍ່ມາຕາມຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍແທ້ຈິງ ລົບໃຫ້ຄ່າເສື່ອມ. ຕົ້ນທຶນຄ່າເສື່ອມຖືກຄິດໄລ່ໂດຍການນຳເອົາສ່ວນຫຼຸດ ຫຼື ຄ່າບໍລິການເພີ່ມເຕີມໃນຕອນຊື້ ແລະ ຄ່າທຳນຽມ ທີ່ເປັນພາກສ່ວນສຳຄັນຂອງອັດຕາດອກເບ້ຍແທ້ຈິງ. ການເສື່ອມຖືກລວມໃນລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານ. ການຂາດທຶນທີ່ເກີດຈາກການເສື່ອມຄ່າຂອງການລົງທຶນດັ່ງກ່າວຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນລາຍຈ່າຍໜີ້ເສຍ.

## 6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 6.8 *ການຈັດປະເພດຄືນຂອງຊັບສິນ ແລະ ໜີ້ສິນທາງດ້ານການເງິນ*

ນັບແຕ່ ວັນທີ 1 ມັງກອນ 2018, ສາຂາບໍ່ໄດ້ຈັດປະເພດຊັບສິນທາງການເງິນຕາມພາຍຫຼັງເປັນການຮັບຮູ້ຄັ້ງທຳອິດນອກຈາກກໍລະນີທີ່ຍົກເວັ້ນເຊິ່ງສາຂາໄດ້ມາ, ສະສາງ, ຫຼື ຍຸດຕິ ສາຍທຸລະກິດ. ໜີ້ສິນທາງດ້ານການເງິນແມ່ນຈະບໍ່ຖືກຈັດປະເພດຄືນ. ສາຂາບໍ່ໄດ້ຈັດປະເພດຊັບສິນ ຫຼື ໜີ້ສິນທາງເງິນໃດໆຄືນໃນປີ 2017.

### 6.9 *ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງດ້ານການເງິນ*

#### 6.9.1 *ການຢຸດຮັບຮູ້ຍ້ອນການດັດແກ້ຢ່າງໃຫຍ່ຫຼວງຂອງບັນດາເງື່ອນໄຂ ແລະ ຂໍ້ກຳນົດ*

ສາຂາຈະຢຸດຮັບຮູ້ຊັບສິນທາງດ້ານການເງິນເຊັ່ນວ່າ ເງິນກູ້ຢືມໃຫ້ແກ່ລູກຄ້າ, ເມື່ອບັນດາຂໍ້ກຳນົດ ແລະ ເງື່ອນໄຂໄດ້ຖືກເຈລະຈາຄືນ ເຊິ່ງຈະກາຍເປັນເງິນກູ້ໃໝ່ ພ້ອມກັບ ສ່ວນຕ່າງທີ່ຖືກຮັບຮູ້ເປັນ ການຢຸດຮັບຮູ້ກຳໄລ ຫຼື ຂາດທຶນ, ຖ້າຫາກວ່າລາຍຈ່າຍຄ່າເສື່ອມມູນຄ່າໜີ້ເສຍຍັງບໍ່ທັນໄດ້ຖືກບັນທຶກເທື່ອ. ເງິນກູ້ທີ່ຖືກຮັບຮູ້ໃໝ່ຈະຖືກຈັດປະເພດໃໝ່ ໃນຂັ້ນທີ 1 ເພື່ອຈຸດປະສົງການຕີມູນຄ່າຜົນຂາດທຶນທາງສິນເຊື່ອທີ່ຄາດໄວ້ (ECL), ຍົກເວັ້ນເງິນກູ້ໃໝ່ແມ່ນຖືກລົງຄວາມເຫັນວ່າເປັນຊັບສິນທາງດ້ານການເງິນທີ່ມີການດ້ອຍຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມທີ່ຊື້ ຫຼື ໄດ້ມາ. ເມື່ອປະເມີນວ່າຈະຢຸດຮັບຮູ້ເງິນກູ້ແກ່ລູກຄ້າ ຫຼື ບໍ່ ໂດຍພາຍໃຕ້ເງື່ອນໄຂຕ່າງໆ ສາຂາຈະພິຈາລະນາປັດໃຈດັ່ງລຸ່ມນີ້:

- ການປ່ຽນແປງໃນສະກຸນເງິນຂອງເງິນກູ້
- ການນຳສະເໜີຂອງຮູບແບບຂອງທຶນ
- ການປ່ຽນແປງໃນຄູ່ສັນຍາ
- ຖ້າຫາກວ່າການດັດແກ້ແມ່ນເປັນດັ່ງນັ້ນເຄື່ອງມືດັ່ງກ່າວຈະບໍ່ກົງກັບ SPPI ອີກຕໍ່ໄປ

ຖ້າຫາກວ່າການດັດແກ້ບໍ່ມີຜົນໃນກະແສເງິນສົດທີ່ມີສ່ວນຕ່າງຢ່າງໃຫຍ່ຫຼວງ, ການດັດແກ້ນັ້ນຈະບໍ່ມີຜົນໃນການຢຸດຮັບຮູ້. ອີງຕາມສ່ວນປ່ຽນແປງສ່ວນຫຼຸດໃນກະແສເງິນສົດໃນອັດຕາດອກເບ້ຍທີ່ແທ້ຈິງເດີມ, ສາຂາຈະບັນທຶກການດັດແກ້ກຳໄລ ຫຼື ຂາດທຶນເມື່ອຂາດທຶນຈາກຄ່າເສື່ອມມູນຄ່າຍັງບໍ່ໄດ້ຖືກບັນທຶກ.

#### 6.9.2 *ການຢຸດຮັບຮູ້ນອກຈາກສຳລັບການດັດແກ້ຢ່າງໃຫຍ່ຫຼວງ*

##### 6.9.2.1 *ຊັບສິນທາງດ້ານການເງິນ*

ຊັບສິນທາງດ້ານການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນໄດ້ໝົດອາຍຸແລ້ວ. ນອກຈາກນີ້, ສາຂາຍັງຢຸດຮັບຮູ້ເປັນຊັບສິນ ຖ້າຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ສາຂາຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ສາຂາໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ; ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຊຳລະກະແສເງິນສົດທີ່ຈະໄດ້ຮັບເຕັມຈຳນວນໂດຍປາສະຈາກການລ່າຊ້າທີ່ສຳຄັນໃຫ້ພາກສ່ວນທີສາມພາຍໃຕ້ສັນຍາ "ການສົ່ງຕໍ່".

ສັນຍາການສົ່ງຕໍ່ ເປັນການເຮັດທຸລະກຳຜ່ານສາຂາຖືເປັນລາຍການທີ່ເກີດຂຶ້ນ ເມື່ອສາຂາຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ ('ຊັບສິນເດີມ'), ແຕ່ຖືເປັນພັນທະຜູກພັນຕາມສັນຍາທີ່ຈະຕ້ອງຊຳລະກະແສເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ ('ຜູ້ຮັບສຸດທ້າຍ'), ເມື່ອຖືກຕ້ອງຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້:

- ສາຂາບໍ່ມີພັນທະຜູກພັນທີ່ຈະຈ່າຍໃຫ້ແກ່ຜູ້ໄດ້ຮັບສຸດທ້າຍ ຍົກເວັ້ນວ່າ ມີມູນຄ່າເທົ່າທຽມທີ່ເກັບໄດ້ຈາກຊັບສິນເດີມເຊິ່ງບໍ່ລວມລ່ວງໜ້າໄລຍະສັ້ນໂດຍອີງກອນພ້ອມກັບສິດເຕັມໃນການຟື້ນຟູມູນຄ່າທີ່ໃຫ້ກູ້ຢືມບວກກັບດອກເບ້ຍຄ້າງຈ່າຍໃນອັດຕາຕະຫຼາດ;

## 6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 6.9 *ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງດ້ານການເງິນ* (ຕໍ່)

### 6.9.2 *ການຢຸດຮັບຮູ້ນອກຈາກສຳລັບການດັດແກ້ຢ່າງສຳຄັນ* (ຕໍ່)

#### 6.9.2.1 *ຊັບສິນທາງດ້ານການເງິນ* (ຕໍ່)

- ສາຂາບໍ່ສາມາດຂາຍ ຫຼື ຈຳນຳຊັບສິນເດີມນອກຈາກຫຼັກຊັບໃຫ້ແກ່ຜູ້ໄດ້ຮັບສຸດທ້າຍສຳລັບພັນທະຜູກພັນທີ່ຈ່າຍກະແສເງິນສົດ; ແລະ
- ສາຂາຈະຕ້ອງສົ່ງກະແສເງິນສົດໃດໆທີ່ຮອບຮວມໃນນາມຂອງຜູ້ໄດ້ຮັບສຸດທ້າຍໂດຍປາສະຈາກຄວາມລ່າຊ້າທີ່ສຳຄັນ. ນອກຈາກນີ້, ສາຂາແມ່ນບໍ່ມີສິດທີ່ຈະລົງທຶນຄືນໃນກະແສເງິນສົດດັ່ງກ່າວ; ຍົກເວັ້ນສຳລັບການລົງທຶນໃນເງິນສົດ ຫຼື ທຽບເທົ່າເງິນສົດໃນລະຫວ່າງໄລຍະເວລາສະສາງອັນສັ້ນຈາກມື້ທີ່ຮອບຮວມເຖິງມື້ທີ່ຮຽກຮ້ອງໃຫ້ມີການມອບແກ່ຜູ້ໄດ້ຮັບສຸດທ້າຍ, ແລະ ດອກເບ້ຍທີ່ໄດ້ຮັບໃນຫຼັກຊັບດັ່ງກ່າວແມ່ນຖືກສົ່ງໃຫ້ຜູ້ໄດ້ຮັບສຸດທ້າຍ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍຕໍ່ເມື່ອ:

- ສາຂາໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ; ຫຼື
- ສາຂາບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ສາຂາຈະພິຈາລະນາວ່າ ການຄວບຄຸມຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອສາຂາໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ສາຂາຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ສາຂາຍັງຮັບຮູ້ເປັນໜີ້ສິນທີ່ຕິດພັນ. ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ສະທ້ອນເຖິງສິດ ແລະ ພັນທະຂອງສາຂາທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄໍ້າປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕໍ່າກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ສາຂາມີຄວາມສາມາດໃນການຊຳລະໜີ້.

ຖ້າຫາກວ່າການສືບຕໍ່ຂອງຮູບແບບຂອງກາສານສິດທີ່ໄດ້ຂຽນ ຫຼື ທາງເລືອກໃນການຊື້ (ຫຼື ທັງສອງ) ຕໍ່ຊັບສິນທີ່ໄດ້ໂອນ, ການສືບຕໍ່ແມ່ນຖືກຕີມູນຄ່າໃນມູນຄ່າທີ່ສາຂາຈະຕ້ອງຈ່າຍເພື່ອຊື້ຄືນ. ໃນກໍລະນີທີ່ກາສານສິດໃນການຊື້ໃນຊັບສິນທີ່ຖືກຕີມູນຄ່າເປັນມູນຄ່າຍຸດຕິທຳ, ຂອບເຂດຂອງການສືບຕໍ່ຂອງອີງກອນແມ່ນຖືກຈຳກັດໃນລະດັບຕໍ່າກວ່າມູນຄ່າຍຸດຕິທຳຂອງຊັບສິນທີ່ໄດ້ໂອນ ແລະ ກາສານສິດລາຄາທີ່ໄດ້ໃຊ້.

#### 6.9.2.2 *ໜີ້ສິນທາງດ້ານການເງິນ*

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕໍ່ກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜິດດ່ຽງຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດຳເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.10 ຄ່າເສື່ອມມູນຄ່າຂອງຊັບສິນທາງດ້ານການເງິນ (ນະໂຍບາຍມີຜົນບັງຄັບໃຊ້ຕັ້ງແຕ່ ວັນທີ 1 ມັງກອນ 2018)*

*6.10.1 ພາບລວມຂອງຫຼັກການລາຍຈ່າຍໜີ້ເສຍທີ່ຄາດໄວ້ (ECL)*

ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍທີ 5.1.1, ການນຳໃຊ້ IFRS 9 ໄດ້ປ່ຽນແປງວິທີການຄິດໄລ່ຄ່າເສື່ອມມູນຄ່າໜີ້ເສຍຂອງສາຂາໂດຍພື້ນຖານໂດຍການປ່ຽນແທນ ວິທີການຄິດໄລ່ໜີ້ເສຍທີ່ເກີດຂຶ້ນ ເປັນ ວິທີການຄາດຄະເນໜີ້ເສຍ ECL. ນັບຈາກວັນທີ 1 ມັງກອນ 2018, ສາຂາໄດ້ບັນທຶກເງິນແຮໜີ້ເສຍທີ່ຄາດວ່າຈະເກີດຂຶ້ນສຳລັບທຸກເງິນກູ້ ແລະ ຊັບສິນທີ່ເປັນໜີ້ສິນທາງດ້ານການເງິນອື່ນໆທີ່ບໍ່ໄດ້ຖືຄອງໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ (PVTPL), ພ້ອມກັບພັນທະຜູກພັນເງິນກູ້ ແລະ ສັນຍາຄ້ຳປະກັນທາງດ້ານການເງິນ, ໃນພາກສ່ວນນີ້ແມ່ນອ້າງເປັນເຄື່ອງມືທາງດ້ານການເງິນ. ສຳລັບກາສານທຶນແມ່ນບໍ່ໄດ້ມີການຫັກຄ່າເສື່ອມມູນຄ່າພາຍໃຕ້ IFRS 9.

ເງິນແຮໜີ້ເສຍທີ່ຄາດວ່າຈະເກີດ (ECL) ແມ່ນອີງຕາມການຄາດຄະເນໜີ້ເສຍຕະຫຼອດອາຍຸຂອງຊັບສິນ (ອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ), ຍົກເວັ້ນວ່າບໍ່ມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງດ້ານສິນເຊື່ອນັບແຕ່ເລີ່ມຕົ້ນ, ເຊິ່ງໃນກໍລະນີນີ້, ເງິນແຮແມ່ນອີງໃສ່ໜີ້ເສຍທີ່ຄາດວ່າຈະເກີດໃນ 12 ເດືອນ ດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 6.10.2. ນະໂຍບາຍຂອງສາຂາສຳລັບການພິຈາລະນາຖ້າມີການເພີ່ມຂຶ້ນຢ່າງມີໃນສຳຄັນໃນຄວາມສ່ຽງສິນເຊື່ອແມ່ນໄດ້ສະແດງອອກໃນ ບົດອະທິບາຍເລກທີ 31.

ECL ຂອງ 12 ເດືອນ ແມ່ນສ່ວນໜຶ່ງຂອງອາຍຸຂອງ ECL ທີ່ໄດ້ສະແດງເຖິງ ECL ທີ່ມີຜົນມາຈາກການຜິດນັດຊຳລະໃນເຄື່ອງມືທາງດ້ານການເງິນທີ່ເປັນໄປໄດ້ພາຍໃນ 12 ເດືອນຫຼັງຈາກວັນທີລາຍງານ.

ທັງ ECL ຕະຫຼອດອາຍຸ ແລະ ECL ຂອງ 12 ເດືອນ ແມ່ນຖືກຄິດໄລ່ບໍ່ວ່າຈະເປັນ ພື້ນຖານແບບດ່ຽວ ຫຼື ແບບຮວມໝູ່, ຂຶ້ນກັບລັກສະນະຂອງກຸ່ມຫຼັກຊັບຂອງເຄື່ອງມືທາງດ້ານການເງິນທີ່ນຳມາຄິດໄລ່.

ສາຂາໄດ້ສ້າງນະໂຍບາຍເພື່ອທີ່ຈະປະຕິບັດການປະເມີນ ໃນແຕ່ລະທ້າຍຂອງໄລຍະການລາຍງານ ວ່າຄວາມສ່ຽງສິນເຊື່ອຂອງເຄື່ອງມືທາງດ້ານການເງິນມີການເພີ່ມຂຶ້ນຢ່າງສຳຄັນ ຫຼື ບໍ່ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ, ໂດຍການພິຈາລະນາສ່ວນປ່ຽນແປງໃນຄວາມສ່ຽງຂອງການຜິດນັດຊຳລະທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມືທາງດ້ານການເງິນທີ່ເຫຼືອຢູ່. ເຊິ່ງໄດ້ອະທິບາຍລະອຽດເພີ່ມເຕີມໃນບົດອະທິບາຍທີ 31.

ໂດຍອີງຕາມຂັ້ນຕອນທາງເທິງ, ສາຂາໄດ້ຈັດກຸ່ມເງິນກູ້ເປັນ ຂັ້ນທີ 1, ຂັ້ນທີ 2, ຂັ້ນທີ 3 ແລະ ຊັບສິນທາງດ້ານການເງິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI), ເຊິ່ງໄດ້ອະທິບາຍດັ່ງລຸ່ມນີ້:

**6. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*6.10 ຄ່າເສື່ອມມູນຄ່າຂອງຊັບສິນທາງດ້ານການເງິນ (ນະໂຍບາຍມີຜົນນັບຕັ້ງແຕ່ ວັນທີ 1 ມັງກອນ 2018)* (ຕໍ່)

*6.10.1 ພາບລວມຂອງຫຼັກການຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດໄວ້* (ຕໍ່)

- ຂັ້ນທີ 1 ເມື່ອເງິນກູ້ຖືກຮັບຮູ້ຄັ້ງທໍາອິດ, ສາຂາຮັບຮູ້ເງິນແຮອີງໃສ່ ECL ຂອງ 12 ເດືອນ. ເງິນກູ້ຂັ້ນທີ 1 ຍັງໄດ້ລວມເອົາສິ່ງທີ່ເອື້ອອໍານວຍທີ່ຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ເງິນກູ້ໄດ້ຖືກຈັດປະເພດຄືນໃໝ່ຈາກ ຂັ້ນທີ 2
- ຂັ້ນທີ 2 ເມື່ອເງິນກູ້ໄດ້ສະແດງການເພີ່ມຂຶ້ນຢ່າງມີໃນສໍາຄັນໃນຄວາມສ່ຽງສິນເຊື່ອນັບຕັ້ງແຕ່ເລີ່ມປ່ອຍສິນເຊື່ອ, ສາຂາບັນທຶກເງິນແຮສໍາລັບ ECL ຕະຫຼອດອາຍຸ. ເງິນກູ້ ຂັ້ນທີ 2 ແມ່ນຍັງໄດ້ລວມເອົາສິ່ງທີ່ເອື້ອອໍານວຍທີ່ຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ເງິນກູ້ໄດ້ຖືກຈັດປະເພດຄືນໃໝ່ຈາກ ຂັ້ນທີ 3
- ຂັ້ນທີ 3 ເງິນກູ້ທີ່ຖືກພິຈາລະນາຄ່າເສື່ອມມູນຄ່າທາງດ້ານສິນເຊື່ອ(ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 31). ສາຂາບັນທຶກເງິນແຮສໍາລັບຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດການໄວ້ຕະຫຼອດອາຍຸ.
- POCI ຊັບສິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ ("POCI") ແມ່ນຊັບສິນທາງດ້ານການເງິນທີ່ມີຄ່າເສື່ອມສິນເຊື່ອໃນການຮັບຮູ້ຄັ້ງທໍາອິດ. ຊັບສິນ POCI ແມ່ນຖືກບັນທຶກໃນມູນຄ່າຍຸດຕິທໍາໃນການຮັບຮູ້ເດີມ ແລະ ລາຍຮັບດອກເບ້ຍແມ່ນຖືກຮັບຮູ້ພາຍຫຼັງອີງຕາມອັດຕາດອກເບ້ຍທີ່ແທ້ຈິງທີ່ໄດ້ປັບສິນເຊື່ອ. ECL ແມ່ນພຽງແຕ່ຖືກຮັບຮູ້ ຫຼື ຊໍາລະອອກເມື່ອມີສ່ວນປ່ຽນແປງພາຍຫຼັງລາຍຈ່າຍໜີ້ເສຍທີ່ຄາດວ່າຈະເກີດ.

ສໍາລັບຊັບສິນທາງດ້ານການເງິນທີ່ສາຂາບໍ່ມີການຄາດການທີ່ສົມເຫດສົມຜົນ ໃນການກູ້ຄືນບໍ່ວ່າຈະປັນມູນຄ່າຄົງຄ້າງທັງໝົດ ຫຼື ຕາມສັດສ່ວນ ສະນັ້ນ, ມູນຄ່າຕາມບັນຊີຂັ້ນຕົ້ນຂອງຊັບສິນທາງດ້ານການເງິນຈະຖືກຫຼຸດລົງ. ເຊິ່ງນີ້ເປັນການຢຸດຮັບຮູ້ຊັບສິນທາງດ້ານການເງິນ (ບາງສ່ວນ).

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.10 ຄ່າເສື່ອມມູນຄ່າຂອງຊັບສິນທາງດ້ານການເງິນ (ນະໂຍບາຍມີຜົນນັບຕັ້ງແຕ່ ວັນທີ 1 ມັງກອນ 2018)* (ຕໍ່)

*6.10.2 ການຄິດໄລ່ບັນດາລາຍຈ່າຍໜີ້ເສຍທີ່ຄາດໄວ້ (ECLs)*

ສາຂາຄຳນວນ ECL ໂດຍອີງໃສ່ສະຖານະການຄວາມອາດຈະເປັນໄປໄດ້ແບບຖ່ວງໜັກ 3 ກໍລະນີ ເພື່ອຕີມູນຄ່າການຂາດແຄນເງິນສົດທີ່ຄາດການໄວ້, ສ່ວນຫຼຸດໂດຍປະມານຕໍ່ອັດຕາດອກເບ້ຍທີ່ແທ້ຈິງ. ການຂາດແຄນເງິນສົດແມ່ນສ່ວນຕ່າງລະຫວ່າງກະແສເງິນສົດທີ່ຄົບກຳນົດຕາມສັນຍາ ແລະ ກະແສເງິນສົດທີ່ສາຂາຄາດວ່າຈະໄດ້ຮັບ. ກົນໄກຂອງການຄຳນວນ ECL ແມ່ນຖືກສະແດງຢູ່ດ້ານລຸ່ມ ແລະ ມີອົງປະກອບທີ່ສຳຄັນແມ່ນ ດັ່ງລຸ່ມນີ້:

- ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ ("PD"): ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນການຄາດຄະເນຄວາມອາດຈະເປັນໄປໄດ້ຂອງການຜິດນັດຊຳລະໃນຕະຫຼອດຊ່ວງເວລາທີ່ກຳນົດ. ການຜິດນັດຊຳລະອາດຈະເກີດຂຶ້ນໃນຊ່ວງເວລາທີ່ແນ່ນອນໃດໜຶ່ງຕະຫຼອດໄລຍະການປະເມີນ, ຖ້າຫາກວ່າຄວາມສິ່ງທີ່ເອື້ອອຳນວຍບໍ່ໄດ້ຖືກຢຸດຮັບຮູ້ໃນກ່ອນໜ້າ ແລະ ຍັງມີຢູ່ໃນກຸ່ມຫຼັກຊັບ. ແນວຄວາມຄິດຂອງຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 31.
- ຍອດໜີ້ເມື່ອຜິດນັດຊຳລະ ("EAD"): ຍອດໜີ້ເມື່ອຜິດນັດຊຳລະ ແມ່ນການປະມານການຍອດນີ້ໃນວັນທີຜິດນັດຊຳລະໃນອະນາຄົດ, ໂດຍພິຈາລະນາສ່ວນປ່ຽນແປງທີ່ຄາດການໄວ້ໃນຍອດໜີ້ຫຼັງຈາກມື້ລາຍງານ ເຊິ່ງລວມເອົາການຊຳລະຄືນທັງເງິນຕົ້ນ ແລະ ດອກເບ້ຍ, ບໍ່ວ່າຈະຕາມກຳນົດໃນສັນຍາ ຫຼື ບໍ່ກໍຕາມ, ການເບີກຖອນທີ່ຄາດການໄວ້, ແລະ ດອກເບ້ຍຄ້າງຈ່າຍຈາກການຜິດນັດຊຳລະ. EAD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 31.
- ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ ("LGD"): ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະແມ່ນການປະມານການຄວາມເສຍຫາຍທີ່ມາຈາກກໍລະນີທີ່ການຜິດນັດຊຳລະເກີດຂຶ້ນໃນເວລາທີ່ກຳນົດ. ເຊິ່ງຂຶ້ນກັບສ່ວນຕ່າງລະຫວ່າງກະແສເງິນສົດຕາມສັນຍາທີ່ຄົບກຳນົດ ແລະ ບັນດາມູນຄ່າຕ່າງໆ ທີ່ຜູ້ໃຫ້ກູ້ຢືມຄາດວ່າຈະໄດ້ຮັບ, ເຊິ່ງລວມຈາກການຮັບຮູ້ບັນດາຫຼັກຊັບຄ້ຳປະກັນຕ່າງໆ. ໂດຍປົກກະຕິ LGD ແມ່ນຖືກສະແດງເປັນອັດຕາສ່ວນຮ້ອຍຂອງ EAD. LGD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 31.

ເມື່ອມີການຄາດຄະເນ ECL, ສາຂາພິຈາລະນາ 3 ກໍລະນີ (ກໍລະນີຖານ, ເທິງ ແລະ ລຸ່ມ). ແຕ່ລະກໍລະນີເຫຼົ່ານີ້ແມ່ນກ່ຽວຂ້ອງກັບ PDs, EADs ແລະ LGDs ທີ່ແຕກຕ່າງກັນ. ເມື່ອມີການກ່ຽວຂ້ອງກັນ, ການປະເມີນຫຼາຍໆກໍລະນີແມ່ນຖືກລວມເຂົ້າກັນກັບວິທີທີ່ແຕ່ລະເງິນກູ້ທີ່ມີຄວາມສຳຄັນທີ່ຖືກຄາດວ່າຈະຖືກຟື້ນຟູ ເຊິ່ງລວມເອົາຄວາມອາດຈະເປັນໄປໄດ້ທີ່ເງິນກູ້ຈະຖືກຊຳລະຄືນຢ່າງກົງເວລາ ແລະ ມູນຄ່າຂອງຫຼັກຊັບຄ້ຳປະກັນ ຫຼື ມູນຄ່າທີ່ອາດຈະໄດ້ຮັບສຳລັບການຂາຍຊັບສິນ.

ລາຍຈ່າຍຄ່າເສື່ອມມູນຄ່າ ແລະ ການສູນເສຍຈະຖືກບັນທຶກ ແລະ ສະເໜີແຍກຕ່າງຫາກຈາກຈາກການດັດແກ້ກຳໄລ ຫຼື ຂາດທຶນທີ່ເກີດຈາກການດັດແກ້ມູນຄ່າຕາມບັນຊີລວມຂອງຊັບສິນທາງດ້ານການເງິນ.

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.10 ຄ່າເສື່ອມມູນຄ່າຂອງຊັບສິນທາງດ້ານການເງິນ (ນະໂຍບາຍມີຜົນບັງຄັບແຕ່ ວັນທີ 1 ມັງກອນ 2018)* (ຕໍ່)

*6.10.2 ການຄິດໄລ່ບັນດາລາຍຈ່າຍໜີ້ເສຍທີ່ຄາດໄວ້ (ECLs)*

ກົນໄກຂອງວິທີຂອງ ECL ແມ່ນຖືກສະຫຼຸບດັ່ງລຸ່ມນີ້:

- ຂັ້ນທີ 1 — ECL 12 ເດືອນແມ່ນຖືກຄິດໄລ່ເປັນສ່ວນໜຶ່ງຂອງ ECLs ຕະຫຼອດອາຍຸຂອງຊັບສິນທີ່ສະແດງເຖິງ ECLs ທີ່ມີຜົນມາຈາກເຫດການການຜິດນັດຊຳລະໃນເຄື່ອງມືທາງດ້ານການເງິນທີ່ເປັນໄປໄດ້ໃນ 12 ເດືອນຫຼັງຈາກມື້ລາຍງານ. ສາຂາຄຳນວນເງິນແຮ ECL 12 ເດືອນໂດຍອີງໃສ່ການຄາດການການຜິດນັດຊຳລະທີ່ເກີດຂຶ້ນໃນ 12 ເດືອນຫຼັງຈາກມື້ລາຍງານ. ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ 12 ເດືອນທີ່ຄາດການໄວ້ນີ້ແມ່ນຖືກນຳໃຊ້ເພື່ອຄາດຄະເນ EAD ແລະ ຄູນກັບ LGD ທີ່ຄາດການໄວ້ ແລະ ຫຼຸດໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ. ການຄຳນວນນີ້ແມ່ນຖືກສ້າງຂຶ້ນສຳລັບແຕ່ລະກໍລະນີ ທັງ 3 ກໍລະນີດັ່ງທີ່ໄດ້ອະທິບາຍຂ້າງເທິງ.
- ຂັ້ນທີ 2 — ເມື່ອເງິນກູ້ໄດ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມສ່ຽງສິນເຊື່ອຢ່າງມີຄວາມສຳຄັນຕັ້ງແຕ່ເລີ່ມຕົ້ນ , ສາຂາບັນທຶກເງິນແຮ ECLs ຕະຫຼອດອາຍຸຂອງຊັບສິນ. ກົນໄກນີ້ແມ່ນຄ້າຍຄືກັບທີ່ໄດ້ອະທິບາຍຂ້າງເທິງທີ່ລວມເຖິງການນຳໃຊ້ຫຼາຍກໍລະນີ ແຕ່ວ່າ PDs ແລະ LGDs ແມ່ນຖືກຄາດຄະເນຕະຫຼອດອາຍຸຂອງເຄື່ອງມື. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດຄ່າໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ.
- ຂັ້ນທີ 3 — ສຳລັບເງິນກູ້ທີ່ພິຈາລະນາວ່າມີການເສື່ອມມູນຄ່າສິນເຊື່ອ, ສາຂາຮັບຮູ້ລາຍຈ່າຍໜີ້ເສຍທີ່ຄາດການໄວ້ຕະຫຼອດອາຍຸສຳລັບເງິນກູ້ເຫຼົ່ານີ້. ວິທີນີ້ແມ່ນຄ້າຍຄືກັບ ຂັ້ນທີ 2 ພ້ອມກັບ PD ທີ່ຕັ້ງໄວ້ທີ່ 100%.
- POCI — ຊັບສິນ POCI ແມ່ນຊັບສິນທາງດ້ານການເງິນທີ່ການຮັບຮູ້ເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ທຳອິດ. ສາຂາພຽງແຕ່ຮັບຮູ້ສ່ວນປ່ຽນແປງສະສົມໃນ ECLs ຕະຫຼອດອາຍຸຂອງຊັບສິນຕັ້ງແຕ່ການຮັບຮູ້ຄັ້ງທຳອິດ ໂດຍອີງໃສ່ຄວາມອາດຈະເປັນໄປໄດ້ແບບຖ່ວງໜັກຂອງ 3 ກໍລະນີ, ທີ່ມີສ່ວນຫຼຸດໂດຍອັດຕາດອກເບ້ຍທີ່ແທ້ຈິງຂອງສິນເຊື່ອທີ່ຖືກດັດແກ້.
- ຂໍ້ຜູກພັນເງິນກູ້ ແລະ ໜັງສືສິນເຊື່ອ — ເມື່ອການຄາດຄະເນ ECLs ຕະຫຼອດອາຍຸຂອງຊັບສິນສຳລັບຂໍ້ຜູກພັນເງິນກູ້ທີ່ບໍ່ໄດ້ເບີກຈ່າຍ, ສາຂາຈະຄາດຄະເນສັດສ່ວນຂອງຂໍ້ຜູກພັນເງິນກູ້ທີ່ຈະຖືກເບີກຈ່າຍໃນໄລຍະອາຍຸທີ່ຄາດການໄວ້. ຫຼັງຈາກນັ້ນ ECL ຈະອີງໃສ່ມູນຄ່າປັດຈຸບັນຂອງການຂາດແຄນກະແສເງິນສົດທີ່ຄາດການໄວ້ຖ້າຫາກວ່າເງິນກູ້ຖືກເບີກຈ່າຍ, ໂດຍອີງໃສ່ຄວາມອາດຈະເປັນໄປໄດ້ແບບຖ່ວງໜັກໃນ 3 ກໍລະນີ. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດຄ່າທີ່ອັດຕາດອກດອກເບ້ຍທີ່ແທ້ຈິງທີ່ຄາດການໄວ້ຂອງເງິນກູ້ໂດຍປະມານການ.

  ສຳລັບຂໍ້ຜູກພັນເງິນກູ້ ແລະ ໜັງສືສິນເຊື່ອ, ECL ຖືກຮັບຮູ້ພາຍໃນ*ເງິນແຮຄ່າເສື່ອມມູນຄ່າສຳລັບຂໍ້ຜູກພັນນອກໃບລາຍງານຖານະການເງິນພາຍໃຕ້ "ໜີ້ສິນອື່ນໆ"*.
- ສັນຍາຄ້ຳປະກັນທາງດ້ານການເງິນ — ໜີ້ສິນຂອງສາຂາພາຍໃຕ້ແຕ່ລະການຄ້ຳປະກັນແມ່ນຖືກຕີມູນຄ່າໃນມູນຄ່າທີ່ສູງກວ່າໃນການຮັບຮູ້ຄັ້ງທຳອິດ ລົບກັບຄ່າເສື່ອມມູນຄ່າສະສົມທີ່ຮັບຮູ້ໃນໃບລາຍງານຜົນການດຳເນີນງານ, ແລະ ເງິນແຮ ECL. ສຳລັບຈຸດປະສົງນີ້, ສາຂາປະເມີນ ECLs ໂດຍອີງໃສ່ມູນຄ່າປັດຈຸບັນຂອງການຊຳລະທີ່ຄາດການໄວ້ໃນການຊຳລະຄືນໃຫ້ແກ່ຜູ້ຖືສຳລັບລາຍຈ່າຍໜີ້ເສຍທີ່ເກີດຂຶ້ນ. ສ່ວນທີ່ເຫຼືອຈະຖືກຫຼຸດມູນຄ່າໂດຍດອກເບ້ຍທີ່ດັດປັບຄວາມສ່ຽງທີ່ກ່ຽວກັບຍອດເງິນກູ້ທີ່ເຫຼືອ. ການຄຳນວນແມ່ນນຳໃຊ້ຄວາມອາດຈະເປັນແບບຖ່ວງໜັກໃນ 3 ກໍລະນີ. ECLs ກ່ຽວຂ້ອງກັບສັນຍາຄ້ຳປະກັນທາງດ້ານການເງິນພ້ອມກັບ*ເງິນແຮສຳລັບຂໍ້ຜູກພັນນອກໃບລາຍງານຖານະການເງິນພາຍໃຕ້ "ໜີ້ສິນອື່ນໆ"*.

**6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*6.10 ຄ່າເສື່ອມມູນຄ່າຂອງຊັບສິນທາງດ້ານການເງິນ (ນະໂຍບາຍມີຜົນບັງຄັບໃຊ້ແຕ່ ວັນທີ 1 ມັງກອນ 2018)* (ຕໍ່)

*6.10.3 ຊັບສິນທາງດ້ານການເງິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI)*

ສຳລັບຊັບສິນທາງດ້ານການເງິນທີ່ມີຄ່າເສື່ອມມູນຄ່າທາງສິນເຊື່ອຕັ້ງແຕ່ເມື່ອເລີ່ມຊື້ ຫຼື ໄດ້ມາ (POCI), ສາຂາພຽງແຕ່ຮັບຮູ້ສ່ວນປ່ຽນແປງສະສົມໃນຜົນກຳໄລຂາດທຶນທີ່ຄາດການໄວ້ຕະຫຼອດອາຍຸຊັບສິນນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດໃນຄ່າໃຊ້ຈ່າຍເງິນແຮ.

*6.10.4 ຂໍ້ມູນທີ່ເປັນການຄາດການລ່ວງໜ້າ*

ໃນຕົວແບບຂອງຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດການໄວ້ (ECL), ສາຂາໄດ້ນຳໃຊ້ຂໍ້ມູນທີ່ເປັນການຄາດການລ່ວງໜ້າເປັນຂໍ້ມູນທາງເສດຖະກິດເຊັ່ນ:

- ການເຕີບໂຕຂອງ GDP
- ອັດຕາການວ່າງງານ
- ເງິນເຟີ້
- ດັດສະນີລາຄາທີ່ຢູ່ອາໄສ

ຂໍ້ມູນ ແລະ ຮູບແບບທີ່ໄດ້ນຳໃຊ້ໃນການຄຳນວນ ECLs ບໍ່ອາດຈະກຳໄດ້ລັກສະນະພິເສດທັງໝົດຂອງຕະຫຼາດໃນວັນທີຂອງເອກະສານລາຍງານທາງດ້ານການເງິນໄດ້ຕະຫຼອດ. ເພື່ອທີ່ຈະສະທ້ອນໃຫ້ເຫັນສິ່ງເຫຼົ່ານີ້, ຈຶ່ງມີການດັດແກ້ແບບຄຸນະພາບ ຫຼື ການທັບຊ້ອນ ເຊິ່ງເປັນການດັດແກ້ຊົ່ວຄາວເມື່ອສ່ວນຕ່າງເຫຼົ່ານັ້ນຖືວ່າມີຜົນຢ່າງສຳຄັນ.

*6.11 ການປັບປຸງສິນເຊື່ອ: ການຕີມູນຄ່າຫຼັກຊັບຄ້ຳປະກັນ ແລະ ການຄ້ຳປະກັນທາງດ້ານການເງິນ*

ເພື່ອທີ່ຈະຫຼຸດຜ່ອນຄວາມສ່ຽງທາງດ້ານສິນເຊື່ອໃນຊັບສິນທາງການເງິນ, ສາຂາຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ້ຳປະກັນ, ຖ້າເປັນໄປໄດ້. ຫຼັກຊັບຄ້ຳປະກັນອາດເປັນໄດ້ຫຼາຍຮູບແບບ ເຊັ່ນ ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືຄ້ຳປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ນະໂຍບາຍທາງການບັນຊີຂອງສາຂາສຳລັບຫຼັກຊັບຄ້ຳປະກັນທີ່ໄດ້ກຳນົດຜ່ານການຈັດການການໃຫ້ກູ້ຢືມພາຍໃຕ້ IFRS 9 ແມ່ນຄືກັນກັບພາຍໃຕ້ IAS 39. ຫຼັກຊັບຄ້ຳປະກັນ, ຍົກເວັ້ນຖືກຍຶດຄືນ, ຈະບໍ່ຖືກບັນທຶກໃນໃບສະແດງຖານະທາງການເງິນຂອງສາຂາ. ເຖິງຢ່າງໃດກໍຕາມ, ມູນຄ່າຍຸດຕິທຳຂອງຫຼັກຊັບຄ້ຳປະກັນມີຜົນກະທົບຕໍ່ການຄຳນວນຜົນຂາດທຶນທາງສິນເຊື່ອທີ່ຄາດການໄວ້. ໂດຍທົ່ວໄປແລ້ວຈະມີການປະເມີນຢ່າງໜ້ອຍທີ່ສຸດໃນຕອນເລີ່ມຕົ້ນ ແລະ ມີການປະເມີນຄືນໃໝ່ໃນແຕ່ລະໄຕມາດ. ເຖິງຢ່າງໃດກໍຕາມ, ຫຼັກຊັບຄ້ຳປະກັນບາງອັນ, ຕົວຢ່າງເຊັ່ນ, ເງິນສົດ ຫຼື ຫຼັກຊັບທີ່ກ່ຽວພັນກັບເງື່ອນໄຂຜົນກຳໄລ ແມ່ນຖືກຕີມູນຄ່າທຸກໆມື້.

ລາຍລະອຽດຂອງຜົນກະທົບການປັບປຸງສິນເຊື່ອຕ່າງໆຂອງສາຂາແມ່ນສະແດງໃນບົດອະທິບາຍເລກທີ 31.

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ສາຂາໄດ້ນຳໃຊ້ຂໍ້ມູນໃນຕະຫຼາດຊື້ຂາຍຄ່ອງສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫຼັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ້ຳປະກັນທີ່ບໍ່ແມ່ນທາງການເງິນ, ເຊັ່ນ ອະສັງຫາລິມະຊັບຈະຖືກປະເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ ເຊັ່ນ ນາຍໜ້າ, ຫຼື ດັດສະນີ ລາຄາທີ່ພັກອາໄສ.

ຖ້າຫາກວ່າເງິນກູ້ເປັນສ່ວນໜຶ່ງຂອງເງື່ອນໄຂຕາມສັນຍາຖືກຄ້ຳປະກັນໂດຍບຸກຄົນທີສາມ, ສາຂາຄາດຄະເນ ECLs ທີ່ກ່ຽວຂ້ອງໂດຍອີງໃສ່ຄວາມສ່ຽງສິນເຊື່ອລວມຂອງຜູ້ຄ້ຳປະກັນ ແລະ ພາກສ່ວນຜູ້ຖືກຄ້ຳປະກັນ, ໂດຍການສະທ້ອນໃຫ້ເຫັນເຖິງການຄ້ຳປະກັນໃນການຕີມູນຄ່າຂອງ ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດຊຳລະ (LGD). ສາຂາພິຈາລະນາການຄ້ຳປະກັນທາງດ້ານການເງິນຮວມກັບເງິນກູ້ທີ່ໄດ້ຮັບການຄ້ຳປະກັນຕາມເງື່ອນໄຂຂອງສັນຍາ ເມື່ອການຄ້ຳປະກັນຖືກນຳເຂົ້າໃນເວລາດຽວກັນ ຫຼື ພາຍໃນໄລຍະຫຼັງຈາກເງິນກູ້ຖືກເບີກຈ່າຍລ່ວງໜ້າ.

## 6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *6.12 ຫຼັກຊັບຄ້ຳປະກັນທີ່ຖືກຍຶດ*

ນະໂຍບາຍການບັນຊີຂອງພາຍໃຕ້ IFRS 9 ແມ່ນຍັງຄືເກົ່າກັບພາຍໃຕ້ IAS 39. ນະໂຍບາຍຂອງສາຂາກຳນົດວ່າ ຊັບສິນທີ່ຍຶດມາສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງສາຂາ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງ ເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ້ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍໃນມູນຄ່າຍຸດຕິທຳ (ຖ້າຫາກວ່າເປັນຊັບສິນທາງດ້ານການເງິນ) ແລະ ມູນຄ່າຍຸດຕິທຳຫັກຕົ້ນທຶນໃນການຂາຍສຳລັບຊັບສິນທີ່ບໍ່ແມ່ນທາງດ້ານການເງິນໃນມື້ທີ່ຍຶດມາໂດຍສອດຄ່ອງກັບນະໂຍບາຍຂອງສາຂາ.

### *6.13 ການສະສາງອອກ*

ໂດຍຍົກເວັ້ນການສະສາງແບບພາກສ່ວນແລ້ວ, ນະໂຍບາຍການບັນຊີຂອງສາຂາພາຍໃຕ້ IFRS 9 ແມ່ນຍັງຄືເກົ່າກັບພາຍໃຕ້ IAS 39. ຊັບສິນທາງດ້ານການເງິນຈະຖືກສະສາງອອກວ່າຈະເປັນແບບພາກສ່ວນ ຫຼື ທັງໝົດ ເມື່ອສາຂາບໍ່ມີການຄາດການການຟື້ນຟູຊັບສິນທາງດ້ານການເງິນທີ່ສິນເຫດສິນຜົນທັງແບບພາກສ່ວນ ແລະ ທັງໝົດ. ຖ້າຫາກວ່າມູນຄ່າທີ່ຈະຖືກຊຳລະສະສາງອອກນັ້ນຫຼາຍກວ່າລາຍຈ່າຍໜີ້ເສຍສະສົມ, ສ່ວນຕ່າງແມ່ນຖືກຈັດສັນເປັນສ່ວນເພີ່ມເຕີມໃນລາຍຈ່າຍໜີ້ເສຍ ທີ່ນຳໃຊ້ຕໍ່ມູນຄ່າຕາມບັນຊີ. ການຟື້ນຟູໃດໆໃນຕໍ່ມາແມ່ນຖືກບັນທຶກໃນລາຍຈ່າຍໜີ້ເສຍ.

### *6.14 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ນະໂຍບາຍມີຜົນກ່ອນ ວັນທີ 1 ມັງກອນ 2018)*

ສາຂາປະເມີນໃນມື້ເຮັດເອກະສານລາຍງານວ່າມີຫຼັກຖານລະບຸທີ່ສະແດງໃຫ້ເຫັນວ່າຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນມີການເສື່ອມມູນຄ່າ ຫລື ບໍ່. ຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນ ຈະຖືວ່າເສື່ອມມູນຄ່າ ຖ້າພຽງແຕ່ວ່າມີຫຼັກຖານລະບຸຄວາມເສຍຫາຍຈາກຜົນຂອງໜຶ່ງ ຫລື ຫຼາຍເຫດການທີ່ປະກົດຂຶ້ນຫລັງຈາກມີການຮັບຮູ້ຊັບສິນຄັ້ງທຳອິດ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫຼາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນກະແສເງິນສົດໃນອະນາຄົດຂອງຊັບສິນການເງິນ ຫລື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ ຢ່າງໜ້າເຊື່ອຖື.

ຫລັກຖານຂອງການເສື່ອມມູນຄ່າອາດລວມມີສິ່ງທີ່ບົ່ງຊີ້ເຖິງການປະສົບຄວາມຫຍຸ້ງຍາກຢ່າງມີໃນສຳຄັນດ້ານການເງິນ ຂອງຜູ້ຢືມ ຫລື ກຸ່ມຂອງຜູ້ຢືມ, ການຜິດສັນຍາ ຫລື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າພວກເຂົາຈະລົ້ມລະລາຍ ຫລື ການປັບປຸງລະບົບການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດຫລຸດລົງ, ເຊັ່ນການປ່ຽນແປງໜີ້ເກີນກຳນົດ ຫລື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

#### *6.14.1 ຊັບສິນທາງການເງິນຕາມມູນຄ່າຕົ້ນທຶນຄ່າເສື່ອມ*

*ຄ່າເສື່ອມມູນຄ່າສະເພາະ*

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມມູນຄ່າຕົ້ນທຶນຄ່າເສື່ອມ (ເຊັ່ນ: ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ), ສາຂາຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫລັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫລື ເພື່ອການພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫລັກຖານວ່າຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບສິນ ແລະ ຍອດເຫລືອປະຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາລາຍຈ່າຍໜີ້ເສຍທີ່ຄາດຫວັງທີ່ຍັງບໍ່ທັນເກີດ). ຍອດຍົກມາຂອງຊັບ ສິນແມ່ນຫລຸດລົງ ຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຈຳນວນຄ່າເສື່ອມທີ່ລາຍງານໃນລາຍຈ່າຍໜີ້ເສຍໃນໃບລາຍງານຜົນການດຳເນີນງານ. ລາຍຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫລຸດລົງ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເສື່ອມ. ລາຍຮັບດອກ ເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ".

**6. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*6.14.1 ຊັບສິນທາງການເງິນຕາມມູນຄ່າຕາມຕົ້ນທຶນຄ່າເສື່ອມ* (ຕໍ່)

ເງິນກູ້ພ້ອມກັບເງິນແຮ ທີ່ຕິດພັນຖືກສະສາງອອກ ເມື່ອສາຂາໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອຫຼັກຊັບຄໍ້າປະກັນຖືກໂອນໃຫ້ສາຂາ. ຖ້າໃນປີຕໍ່ມາ, ຄ່າເສື່ອມມູນຄ່າຈະເພີ່ມຂຶ້ນ ຫຼື ຫຼຸດລົງຍ້ອນວ່າມີເຫດການເກີດຂຶ້ນຫຼັງຈາກມູນຄ່າທີ່ໄດ້ຖືກຮັບຮູ້, ຄ່າເສື່ອມມູນຄ່າທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫຼຸດລົງໂດຍການດັດແກ້ ໃນບັນຊີລາຍຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີເປັນລາຍຮັບ.

ມູນຄ່າປະຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປະຈຸບັນຕາມອັດຕາດອກເບ້ຍຕົວຈິງຂອງຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສໍາລັບການຕີມູນຄ່າຂອງ ຄ່າເສື່ອມມູນຄ່າແມ່ນອັດຕາດອກເບ້ຍຕົວຈິງໃນປະຈຸບັນ. ຖ້າສາຂາໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນ ຫລຸດສໍາລັບຄິດໄລ່ຄ່າເສື່ອມແມ່ນ ຕ້ອງນໍາໃຊ້ອັດຕາດອກເບ້ຍຕົວຈິງນະມື້ທີ່ມີການຈັດປະເພດຄືນໃໝ່.

ການຄິດໄລ່ມູນຄ່າປະຈຸບັນຂອງກະແສ ເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫລັກຊັບຄໍ້າປະກັນ ມີຜົນກະທົບຕໍ່ກະແສເງິນສົດ ຊຶ່ງອາດເປັນຜົນມາຈາກຫລັກ ຊັບຄໍ້າປະກັນທີ່ຍຶດມາໄດ້ລົບໃຫ້ຕົ້ນທຶນຂອງຫລັກຊັບຄໍ້າປະກັນທີ່ໄດ້ຮັບ ແລະ ຂາຍບໍ່ວ່າການຍຶດຫລັກຊັບຈະເປັນໄປໄດ້ ຫລື ບໍ່ກໍ່ຕາມ.

*ຕົວແບບການເສື່ອມມູນຄ່າເປັນກຸ່ມ*

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມ ຕາມລັກສະນະຄວາມສ່ຽງດ້ານສິນເຊື່ອທີ່ຄ້າຍຄືກັນ ຊຶ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຊໍາລະເງິນຈໍານວນທັງໝົດອັນເນື່ອງມາຈາກສັນຍາ (ຕົວຢ່າງ ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກປະເພດຊັບສິນ, ປະເພດອຸດສາຫະກໍາ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄໍ້າປະກັນ, ສະຖານະພາບທີ່ຜ່ານມາ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງ).

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ບົນພື້ນຖານຂໍ້ມູນທີ່ມີໃນປະຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປະຈຸບັນ ເຊິ່ງການເສື່ອມຄ່າຜ່ານມາແມ່ນເປັນບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສິ່ງ ຜົນກະທົບໃນປະຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບ ການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊໍາລະ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສໍາຄັນຂອງການ ຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນໍາໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫຼຸດສ່ວນຜິດດ່ຽງລະຫວ່າງລາຍຈ່າຍທີ່ຄາດຄະເນ ແລະ ລາຍຈ່າຍຕົວຈິງ.

*6.15 ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນຄັງ, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານ ເຊິ່ງເປັນປະເພດກະແສລາຍວັນ, ກໍານົດ 3 ເດືອນຫຼື ຕໍ່າກວ່ານັ້ນ.

**6. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*6.16 ການເຊົ່າ*

ການກໍານົດວ່າຂໍ້ຕົກລົງເປັນສັນຍາເຊົ່າ ຫຼື ມີການເຊົ່າຢູ່ໃນນັ້ນ ຫຼືບໍ່ນັ້ນແມ່ນຂຶ້ນຢູ່ກັບເນື້ອໃນຂອງຂໍ້ຕົກລົງ ແລະ ຕ້ອງມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນແມ່ນຂຶ້ນຢູ່ກັບການນໍາໃຊ້ຂອງຊັບສິນສະເພາະ ຫຼື ຊັບສິນທີ່ຂໍ້ຕົກລົງລະບຸເຖິງສິດໃນການຊັບສິນ.

*ສາຂາໃນຖານະເປັນຜູ້ເຊົ່າ*

ການເຊົ່າທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ອາດຈະເກີດຂຶ້ນແກ່ເຈົ້າຂອງທັງໝົດໃຫ້ແກ່ສາຂາຂອງລາຍການທີ່ໃຫ້ເຊົ່າແມ່ນຄ່າເຊົ່າໃນການດໍາເນີນງານ. ການຊໍາລະການປະຕິບັດການເຊົ່າແມ່ນຖືກຮັບຮູ້ເປັນລາຍຈ່າຍໃນໃບລາຍງານຜົນການດໍາເນີນງານໃນຮູບແບບເສັ້ນຊື່ຕະຫຼອດເງື່ອນໄຂການເຊົ່າ. ໜີ້ຕ້ອງສົ່ງຄ່າເຊົ່າແບບບັງເອີນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

*6.17 ຊັບສິນບັດ ແລະ ອຸປະກອນ*

ຊັບສິນບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນໍາໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີ ການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼຸ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼຸ້ຍຫ້ຽນແບບສະເໝີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນໍາໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

| | |
|---|---|
| ອາຄານ ແລະ ການປັບປຸງອາຄານ | 5% |
| ເຟີນິເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 20% |
| ພາຫະນະ | 20% |

ຊັບສິນບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນໍາໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກໍາໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດໍາເນີນງານອື່ນໆ" ໃນໃບລາຍງານຜົນການດໍາເນີນງານຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

*6.18 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ສາຂາປະເມີນນະມື້ເຮັດເອກະສານລາຍງານວ່າ ມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈໍາປີຕາມທີ່ໄດ້ກໍານົດສາຂາປະເມີນຈໍານວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈໍານວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກມູນຄ່າທີ່ສູງກວ່າລະຫວ່າງມູນຄ່າຍຸດຕິທໍາຂອງຊັບສິນ ຫຼື ມູນຄ່າຍຸດຕິທໍາຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນໍາໃຊ້. ເມື່ອຍອດຍົກມາຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເຊື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

## 6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *6.18 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ* (ຕໍ່)

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫລຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ຕົວແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ສາຂາຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນມີການປ່ຽນແປງໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປີ້ນຄືນແມ່ນຖືກກຳນົດຂຶ້ນ. ສະນັ້ນ, ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດ ລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າ ເສື່ອມຂອງຊັບສິນໃນປີຜ່ານມາ. ການປີ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

### *6.19 ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫຼັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບຳນານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ ແຕ່ຈຳນວນເງິນດັ່ງກ່າວແມ່ນຈະບໍ່ເກີນ 270,000 ກີບຕໍ່ຄົນຕໍ່ເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

*ຜົນປະໂຫຍດຈາກການຢຸດຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງອົງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກສອງກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກເລີກຈ້າງໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2018, ບໍ່ມີພະນັກງານສາຂາຖືກເລີກຈ້າງຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງສາຂາ.

## 6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *6.20 ເງິນແຮ*

ເງິນແຮຈະຖືກຮັບຮູ້ກໍ່ຕໍ່ເມື່ອສາຂາມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕົກລົງ) ເນື່ອງມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊໍາລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ສາຂາກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດຳເນີນງານ ພາຍຫຼັງໄດ້ຮັບເງິນຄືນ.

### *6.21 ອາກອນກຳໄລ*

*ອາກອນພາຍໃນປີ*

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີ ສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ເຮັດບົດລາຍງານ ພາຍໃນປະເທດທີ່ສາຂາດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີຂອງຜູ້ຖືຮຸ້ນ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

*ອາກອນເຍື້ອນຊໍາລະ*

ອາກອນເຍື້ອນຊໍາລະແມ່ນຖືກຄິດໄລ່ຈາກສ່ວນຜິດດ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສົ່ງອາກອນເຍື້ອນຊໍາລະແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນເຍື້ອນຊໍາລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການ ສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຕ້ອງເສຍອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫລຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊໍາລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ສ້າງບົດລາຍງານ.

ອາກອນພາຍໃນປີ ແລະ ອາກອນເຍື້ອນຊໍາລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ລາຍຈ່າຍໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດດ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ເຊິ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນເຍື້ອນຊໍາລະ. ສາຂາຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊໍາລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນ ທີ່ຖືກຈັດປະເພດເປັນທຶນຕົນເອງ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊໍາລະແມ່ນໄດ້ຖືກຫັກລ້າງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ເພື່ອຫັກລ້າງຊັບສິນອາກອນ ແລະ ໜີ້ສິນອາກອນ ແລະ ສາຂາມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

## 6. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *6.22 ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກບົດລາຍງານການເງິນຂອງສາຂາ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ສາຂາຈະຮັບຮອງເອົາມາດຕະຖານເຫລົ່ານີ້, ຖ້າສາມາດນໍາໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

*IFRS 16 ສັນຍາເຊົ່າ*

IFRS 16 ໄດ້ວາງອອກໃນເດືອນມັງກອນ 2016 ແລະ ແທນທີ່ IAS 17 *ສັນຍາເຊົ່າ*, IFRIC 4 *ການພິຈາລະນາວ່າດ້ວຍຂໍ້ຕົກລົງທີ່ມີເນື້ອໃນການເຊົ່າ*, SIC-15 *ສັນຍາເຊົ່າໃນການດຳເນີນງານ - ສິ່ງດຶງດູດ* ແລະ SIC-27 *ການປະເມີນເນື້ອໃນຂອງທຸລະກຳທີ່ກ່ຽວຂ້ອງກັບ ຮູບແບບທາງກົດໝາຍຂອງສັນຍາເຊົ່າ*. IFRS 16 ໄດ້ວາງຫຼັກການສໍາລັບການຮັບຮູ້, ການຕີມູນຄ່າ, ການສະເໜີ ແລະ ການເປີດເຜີຍຂອງສັນຍາເຊົ່າ ແລະ ຮຽກຮ້ອງໃຫ້ຜູ້ເຊົ່າຮັບຜິດຊອບສໍາລັບທຸກໆການເຊົ່າພາຍໃຕ້ຮູບແບບໃບລາຍງານຖານະການເງິນດ່ຽວທີ່ຄ້າຍຄືກັບການບັນຊີສໍາລັບການເຊົ່າທາງດ້ານການເງິນພາຍໃຕ້ IAS 17. ມາດຕະຖານລວມເອົາການຍົກເວັ້ນການຮັບຮູ້ 2 ຢ່າງສໍາລັບຜູ້ເຊົ່າ ແລະ ຜູ້ໃຫ້ເຊົ່າ ໃນຊັບສິນທີ່ມີມູນຄ່າຕໍ່າ (ຕົວຢ່າງ ຄອມພິວເຕີສ່ວນບຸກຄົນ) ແລະ ການໃຫ້ເຊົ່າໄລຍະສັ້ນ (ຕົວຢ່າງ ສັນຍາເຊົ່າພ້ອມດ້ວຍເງື່ອນໄຂການເຊົ່າ 12 ເດືອນ ຫຼື ໜ້ອຍກວ່າ).

ນະວັນທີ່ເລີ່ມຕົ້ນຂອງການເຊົ່າ, ຜູ້ເຊົ່າຈະຮັບຮູ້ໜີ້ສິນໃນການຊໍາລະຄ່າເຊົ່າ (ຕົວຢ່າງ ໜີ້ສິນໃນການເຊົ່າ) ແລະ ຊັບສິນທີ່ສະແດງເຖິງສິດໃນການນໍາໃຊ້ຊັບສິນທີ່ໄດ້ລະບຸໄວ້ຕະຫຼອດໄລຍະການເຊົ່າ (ຕົວຢ່າງ ສິດໃນການນໍາໃຊ້ຊັບສິນ). ຜູ້ເຊົ່າຈະຕ້ອງຮັບຮູ້ລາຍຮັບດອກເບ້ຍຢ່າງແຍກໃນໜີ້ສິນການເຊົ່າ ແລະ ລາຍຈ່າຍຄ່າຫຼູ້ຍຫ້ຽນໃນສິດໃນການໃຊ້ຊັບສິນ ເຊິ່ງຈະນໍາໄປສູ່ການບັນທຶກຄ່າໃຊ້ຈ່າຍທີ່ສູງຂຶ້ນໃນໃບລາຍງານຜົນການດໍາເນີນງານທີ່ສົມທຽບກັບ IAS 17. ຜູ້ເຊົ່າຕ້ອງໄດ້ຕີມູນຄ່າຄືນໜີ້ສິນການເຊົ່າສໍາລັບເຫດການໃດໜຶ່ງທີ່ເກີດຂຶ້ນ (ຕົວຢ່າງ ການປ່ຽນແປງໃນເງື່ອນໄຂການເຊົ່າ, ການປ່ຽນແປງການຊໍາລະການເຊົ່າໃນອະນາຄົດ ທີ່ມີຜົນມາຈາກການປ່ຽນແປງດັດສະນີ ຫຼື ອັດຕາທີ່ໃຊ້ໃນການພິຈາລະນາການຊໍາລະເຫຼົ່ານັ້ນ). ຜູ້ເຊົ່າຈະຮັບຮູ້ມູນຄ່າການຕີມູນຄ່າຄືນຂອງໜີ້ສິນຈາກການເຊົ່າເປັນການດັດແກ້ໃຫ້ແກ່ສິດໃນການນໍາໃຊ້ຊັບສິນ.

IFRS 16 ມີຜົນບັງຄັບໃຊ້ສໍາລັບປີທີ່ເລີ່ມຕົ້ນນະວັນທີ ຫຼື ຫຼັງວັນທີ 1 ມັງກອນ 2019. ມາດຕະຖານລາຍຮັບໃຫມ່ດັ່ງກ່າວສາມາດນໍາໃຊ້ລ່ວງໜ້າໄດ້, IFRS 15, ໄດ້ຖືກນໍາໃຊ້ໃນວັນດຽວກັນ. ຜູ້ເຊົ່າຈະຕ້ອງນໍາໃຊ້ IFRS 16 ໂດຍນໍາໃຊ້ຍ້ອນຫຼັງກັບຄືນແບບເຕັມ ຫຼື ແບ່ງສ່ວນ.

ສາຂາບໍ່ໄດ້ນໍາໃຊ້ IFRS 16 ລ່ວງຫນ້າ ແລະ ຂະນະນີ້ແມ່ນກໍາລັງປະເມີນຜົນກະທົບຢູ່.

*IFRIC ການຕີຄວາມໝາຍ 23 ຄວາມບໍ່ແນ່ນອນກ່ຽວກັບການປະຕິບັດດ້ານອາກອນລາຍໄດ້*

ການຕີຄວາມໝາຍໄດ້ລະບຸການບັນຊີສໍາລັບອາກອນລາຍໄດ້ເມື່ອການປະຕິບັດອາກອນກ່ຽວຂ້ອງກັບຄວາມບໍ່ແນ່ນອນທີ່ກະທົບເຖິງການນໍາໃຊ້ IAS 12 ແລະ ບໍ່ໄດ້ນໍາໃຊ້ກັບອາກອນ ຫຼື ການເກັບອາກອນທີ່ຢູ່ນອກຂອບເຂດຂອງ IAS 12, ແລະ ບໍ່ລວມເຖິງ ຂໍ້ກໍານົດທີ່ກ່ຽວຂ້ອງກັບດອກເບ້ຍ ແລະ ຄ່າປັບໃໝທີ່ກ່ຽວຂ້ອງກັບການປະຕິບັດອາກອນທີ່ບໍ່ແນ່ນອນ. ການຕີຄວາມໝາຍໄດ້ລະບຸຂໍ້ກໍານົດສະເພາະດັ່ງຕໍ່ໄປນີ:

- ບໍ່ວ່າກິດຈະການຈະພິຈາລະນາການປະຕິບັດອາກອນທີ່ບໍ່ແນ່ນອນແຍກຕ່າງຫາກ ຫຼື ບໍ່,
- ຂໍ້ສົມມຸດຖານທີ່ກິດຈະການເຮັດກ່ຽວກັບການກວດສອບການປະຕິບັດດ້ານອາກອນໂດຍໜ່ວຍງານດ້ານອາກອນ,
- ວິທີທີ່ກິດຈະການພິຈາລະນາກໍາໄລທີ່ຕ້ອງຈ່າຍອາກອນ (ການຂາດທຶນທາງດ້ານອາກອນ), ຖານອາກອນ, ການຂາດທຶນທາງອາກອນທີ່ບໍ່ໄດ້ນໍາໃຊ້, ສິນເຊື່ອອາກອນທີ່ບໍ່ໄດ້ນໍາໃຊ້ ແລະ ອັດຕາອາກອນ, ແລະ
- ວິທີທີ່ກິດຈະການພິຈາລະນາສ່ວນປ່ຽນແປງໃນຂໍ້ເທັດຈິງ ແລະ ສະຖານະການ.

## 6. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 6.22 *ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້* (ຕໍ່)

ກິດຈະການຕ້ອງພິຈາລະນາວ່າຈະພິຈາລະນາແຕ່ລະການປະຕິບັດອາກອນທີ່ບໍ່ແນ່ນອນແຍກຕ່າງຫາກ ຫຼື ຮວມກັບໜຶ່ງ ຫຼື ຫຼາຍການປະຕິບັດອາກອນທີ່ບໍ່ແນ່ນອນ ຫຼື ບໍ່. ວິທີທີ່ດີທີ່ສຸດໃນການຄາດການຜົນຂອງຄວາມບໍ່ແນ່ນອນທີ່ຈະຕ້ອງຕິດຕາມ. ການຕີຄວາມໝາຍແມ່ນມີຜົນສຳລັບໄລຍະການລາຍງານປະຈຳປີໂດຍເລີ່ມ ຫຼື ຫຼັງຈາກ ວັນທີ 1 ມັງກອນ 2019, ແຕ່ວ່າການປ່ຽນແປງແມ່ນກຳລັງດຳເນີນຢູ່. ສາຂາຈະນຳໃຊ້ການຕີຄວາມໝາຍຈາກວັນທີມີຜົນ ແລະ ຂະນະນີ້ແມ່ນກຳລັງປະເມີນຜົນກະທົບຢູ່.

*ການແກ້ໄຂ IAS 12 ອາກອນລາຍໄດ້*

ການແກ້ໄຂໄດ້ຊີ້ແຈງວ່າຜົນກະທົບອາກອນລາຍໄດ້ຂອງເງິນປັນຜົນແມ່ນຖືກເຊື່ອມໂຍງໂດຍກົງກັບທຸລະກຳ ຫຼື ເຫດການໃນອະດີດ ທີ່ສ້າງຜົນກຳໄລທີ່ແຈກຢາຍໄດ້ ຫຼາຍກວ່າການແຈກຢາຍໃຫ້ແກ່ເຈົ້າຂອງ. ສະນັ້ນ, ກິດຈະການຮັບຮູ້ຜົນກະທົບອາກອນລາຍໄດ້ຂອງເງິນປັນຜົນໃນກຳໄລ ຫຼື ຂາດທຶນ, ລາຍຮັບອື່ນໆນອກການທຸລະກິດ ຫຼື ທຶນສ່ວນເຈົ້າຂອງອີງຕາມທີ່ກິດຈະການຮັບຮູ້ທຳອິດຂອງທຸລະກຳ ຫຼື ເຫດການໃນອະດີດ. ກິດຈະການນຳໃຊ້ບັນດາການແກ້ໄຂເຫຼົ່ານັ້ນສຳລັບໄລຍະການລາຍງານປະຈຳປີໂດຍເລີ່ມຈາກ ຫຼື ນັບຕັ້ງແຕ່ວັນທີ 1 ມັງກອນ 2019, ໂດຍອະນຸຍາດໃຫ້ນາໃຊ້ກ່ອນໄດ້. ເມື່ອກິດຈະການໄດ້ນຳໃຊ້ການດັດແກ້ເຫຼົ່ານັ້ນຄັ້ງທຳອິດ, ຈະນຳໃຊ້ໃຊ້ໃນຜົນກະທົບອາກອນລາຍໄດ້ຂອງເງິນປັນຜົນທີ່ຮັບຮູ້ໃນ ຫຼື ຫຼັງຈາກເລີ່ມຕົ້ນຂອງໄລຍະສົມທຽບທີ່ໄວທີ່ສຸດ. ສາຂາຈະນຳໃຊ້ການແກ້ໄຂຈາກວັນທີ່ມີຜົນ ແລະ ຂະນະນີ້ແມ່ນກຳລັງປະເມີນຜົນກະທົບຢູ່.

## 7. **ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ**

ໃນການສ້າງເອກະສານລາຍງານການເງິນຂອງສາຂາ, ກຳນົດໃຫ້ຄະນະບໍລິຫານຕ້ອງມີການຄາດຄະເນ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີການກຳນົດດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງສາຂາ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫຼາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນປີການບັນຊີໃນຕໍ່ໜ້າ. ສາຂາໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກສ້າງຂຶ້ນ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫຼາດ ຫຼື ສະພາບການທີ່ຄວບຄຸມສາຂາ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

## 7. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

### 7.1 *ການຂາດທຶນຈາກຄ່າເສື່ອມມູນຄ່າຂອງຊັບສິນທາງດ້ານການເງິນ (ນະໂຍບາຍມີຜົນບັງຄັບໃຊ້ ວັນທີ 1 ມັງກອນ 2018)*

ການຕີມູນຄ່າຂອງຄ່າເສື່ອມໜີ້ເສຍທັງພາຍໃຕ້ IFRS 9 ແລະ IAS 39 ໃນທຸກໆປະເພດຂອງຊັບສິນທາງດ້ານການເງິນໃນຂອບເຂດທີ່ຕ້ອງໃຊ້ການພິຈາລະນາ ໂດຍສະເພາະການຄາດຄະເນມູນຄ່າ ແລະ ເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນເມື່ອພິຈາລະນາຄ່າເສື່ອມມູນຄ່າໜີ້ເສຍ ແລະ ປະເມີນການທີ່ເພີ່ມຢ່າງມີຄວາມສຳຄັນໃນຄວາມສ່ຽງດ້ານສິນເຊື່ອ. ການຄາດຄະເນເຫຼົ່ານີ້ແມ່ນຂັບເຄື່ອນມາຈາກບັນດາປັດໄຈ, ສ່ວນປ່ຽນແປງທີ່ສາມາດມີຜົນເຮັດໃຫ້ມີຄວາມແຕກຕ່າງໃນແຕ່ລະລະດັບຂອງຄ່າໃຊ້ຈ່າຍ. ການຄຳນວນ ECL ຂອງສາຂາແມ່ນຜົນມາຈາກຮູບແບບທີ່ຊັບຊ້ອນກັບບັນດາຂໍ້ສົມມຸດຖານທີ່ກ່ຽວຂ້ອງກັບທາງເລືອກຂອງຕົວປ່ຽນຂໍ້ມູນທີ່ປ້ອນເຂົ້າ ແລະ ທັງສອງລວມກັນ. ອົງປະກອບຂອງຕົວແບບ ECL ທີ່ພິຈາລະນາບັນດາຂໍ້ພິຈາລະນາ ແລະ ການຄາດຄະເນທາງບັນຊີດັ່ງນີ້:

- ຕົວແບບການໃຫ້ຄະແນນສິນເຊື່ອພາຍໃນຂອງສາຂາ, ເຊິ່ງລະບຸບັນດາຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ (PDs) ໃນແຕ່ລະຄະແນນ
- ເງື່ອນໄຂສຳລັບການປະເມີນຂອງສາຂາວ່າມີການເພີ່ມຂຶ້ນທີ່ສຳຄັນໃນຄວາມສ່ຽງສິນເຊື່ອ ຫຼື ບໍ່ ແລະ ດັ່ງນັ້ນ ເງິນແຮສຳລັບຊັບສິນທາງດ້ານການເງິນຄວນຈະຖືກຕີມູນຄ່າບົນພື້ນຖານ LTECL ແລະ ການປະເມີນທາງດ້ານຄຸນະພາບ
- ການແບ່ງສ່ວນຊັບສິນທາງດ້ານການເງິນເມື່ອ ECL ຖືກປະເມີນແບບຮ່ວມໝູ່
- ການພັດທະນາຮູບແບບ ECL, ເຊິ່ງລວມເອົາບັນດາສູດຄິດໄລ່ ແລະ ຕົວເລືອກຂອງຂໍ້ມູນທີ່ປ້ອນເຂົ້າ
- ການກຳນົດຄວາມສຳພັນລະຫວ່າງສະຖານະການເສດຖະສາດມະຫາພາກ ແລະ, ຂໍ້ມູນທາງເສດຖະສາດທີ່ປ້ອນເຂົ້າ, ເຊັ່ນວ່າລະດັບການວ່າງງານ ແລະ ມູນຄ່າຫຼັກຊັບຄ້ຳປະກັນ, ແລະ ຜົນກະທົບໃນ PDs, EADs ແລະ LGDs
- ການເລືອກສະຖານະການເສດຖະສາດມະຫາພາກທີ່ຄາດການລ່ວງໜ້າ ແລະ ຄວາມອາດຈະເປັນໄປໄດ້ແບບຖ່ວງໜັກເພື່ອເປັນຂໍ້ມູນທາງເສດຖະສາດທີ່ປ້ອນເຂົ້າໃນຮູບແບບ ECL

ສາຂາມີນະໂຍບາຍທີ່ຈະຕ້ອງກວດສອບຄືນບັນດາຕົວແບບໃນແຕ່ລະບໍລິບົດຂອງປະສົບການຂາດທຶນທີ່ເກີດຂຶ້ນຈິງ ແລະ ດັດແກ້ຮູບແບບເມື່ອຈຳເປັນ.

### 7.2 *ຂາດທຶນຈາກຄ່າເສື່ອມມູນຄ່າຂອງຊັບສິນທາງການເງິນ (ນະໂຍບາຍມີຜົນກ່ອນ ວັນທີ 1 ມັງກອນ 2018)*

ສາຂາໄດ້ມີການທົບທວນເງິນຊັບສິນທາງການເງິນທີ່ສຳຄັນແບບດ່ຽວຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າລາຍຈ່າຍຈາກຄ່າເສື່ອມມູນຄ່າ ຄວນຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມມູນຄ່າຂອງຊັບສິນທີ່ມີຍອດຍົກມາຕາມຕົ້ນທຶນຄ່າເສື່ອມ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ຂາດທຶນຈາກຄ່າເສື່ອມມູນຄ່າສະເພາະ;
- ຄ່າເສື່ອມມູນຄ່າເປັນກຸ່ມ

ທຸກໝວດປະກອບດ້ວຍການຕັດສິນໃຈຂອງຄະນະບໍລິຫານ, ໂດຍສະເພາະແລ້ວຈະມີການຄາດຄະເນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີລາຍຈ່າຍຈາກຄ່າເສື່ອມມູນຄ່າ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

### 7.3 *ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະບໍລິຫານຂອງສາຂາໄດ້ປະເມີນຄວາມອາດສາມາດຂອງສາຂາ ກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າສາຂາມີແຫລ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງສາຂາ ເພື່ອສືບຕໍ່ດຳເນີນງານກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນ ຍັງສືບຕໍ່ສ້າງຂຶ້ນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

## 7. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

### 7.4 *ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ*

ມູນຄ່າຍຸດຕິທຳຂອງບັນດາເຄື່ອງມືດ້ານການເງິນແມ່ນລາຄາທີ່ຄວນຈະໄດ້ຮັບຈາກການຂາຍຊັບສິນ ຫຼື ໄດ້ຈ່າຍສຳລັບການໂອນໜີ້ສິນ ຕາມລາຍການເຄື່ອນໄຫວຢູ່ໃນຫຼັກການ (ຫຼື ຜົນປະໂຫຍດສູງສຸດ) ໃນຕະຫຼາດນະເວລາທີວັດແທກພາຍໃຕ້ເງື່ອນໄຂຕະຫຼາດໃນປະຈຸບັນ (ລາຄາຈິງ) ໂດຍບໍ່ຄຳນຶງເຖິງວ່າເປັນລາຄາຈາກການສັງເກດການຕົວຈິງ ຫຼື ຈາກການຄາດຄະເນຈາກການນຳໃຊ້ເຕັກນິກການຕີມູນຄ່າອື່ນ. ໃນເວລາທີ່ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນຖືກບັນທຶກໃນໃບລາຍງານຖານະການເງິນແລ້ວ ແມ່ນບໍ່ສາມາດປ່ຽນໄປຕາມການເຄື່ອນໄຫວຂອງຕະຫຼາດ, ເຊິ່ງໄດ້ກຳນົດວິທີເຕັກນິກການຕີມູນຄ່າລວມເຖິງຮູບແບບການຕີມູນຄ່າ. ປັດໄຈຂອງຮູບແບບເຫຼົ່ານີ້ໄດ້ມາຈາກການສັງເກດການຄວາມເປັນໄປໄດ້ໃນຕະຫຼາດ, ແຕ່ວ່າຖ້າຫາກບໍ່ມີຄວາມເປັນໄປໄດ້, ການຄາດຄະແນແມ່ນມາຈາກການສ້າງມູນຄ່າຍຸດຕິທຳ. ການຕັດສິນໃຈ ແລະ ການຄາດຄະເນ ລວມເຖິງການພິຈາລະນາດ້ານສະພາບຄ່ອງ ແລະ ຮູບແບບຂອງປັດໄຈທີ່ກ່ຽວຂ້ອງກັບລາຍການຄວາມສ່ຽງດ້ານໜີ້ສິນ (ທັງສ່ວນເຈົ້າຂອງ ແລະ ພາກສ່ວນທີ່ກ່ຽວຂ້ອງ), ການດັດແກ້ມູນຄ່າທຶນ, ຄວາມສຳພັນກັນ ແລະ ການເໜັງຕີງ. ສຳລັບລາຍລະອຽດອື່ນໆກ່ຽວກັບການກຳນົດມູນຄ່າຍຸດຕິທຳ ກະລຸນາເບິ່ງບົດອະທິບາຍເລກທີ 6.6 ແລະ 36.

### 7.5 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງຂອງສາຂາ, ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 6.2.1, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຂອງເງິນທີ່ໄດ້ຮັບຄືນຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

## 8. ການເປີດເຜີຍການປ່ຽນແປງ

*ຫົວໜ່ວຍ: ລ້ານກີບ*

| | *ການຕີມູນຄ່າຂອງ IAS 39* | | | *ການຕີມູນຄ່າຄືນ* | | *IFRS 9* | |
|---|---|---|---|---|---|---|---|
| | *ໝວດ* | *ມູນຄ່າ* | *ການຈັດປະເພດຄືນໃໝ່* | *ຜົນກະທົບ ECL ຕໍ່ RE* | *ອື່ນໆ* | *ມູນຄ່າ* | *ໝວດ* |
| ເງິນສົດ ແລະ ເງິນຝາກຢູ່ ທຫລ | ເງິນກູ້ຢືມ ແລະ ໜີ້ຕ້ອງຮັບ | 428,487 | - | (114) | - | 428,373 | ຕົ້ນທຶນຄ່າເສື່ອມມູນຄ່າ |
| ເງິນຝາກຢູ່ທະນາຄານອື່ນ | ເງິນກູ້ຢືມ ແລະ ໜີ້ຕ້ອງຮັບ | 869,290 | - | (179) | - | 869,111 | ຕົ້ນທຶນຄ່າເສື່ອມມູນຄ່າ |
| ເງິນກູ້ຢືມແກ່ລູກຄ້າ | ເງິນກູ້ຢືມ ແລະ ໜີ້ຕ້ອງຮັບ | 407,499 | - | 879 | - | 408,378 | ຕົ້ນທຶນຄ່າເສື່ອມມູນຄ່າ |
| ການສານໜີ້ໃນຕົ້ນທຶນຄ່າເສື່ອມມູນຄ່າ | | - | 835,197 | (224) | - | 834,973 | ຕົ້ນທຶນຄ່າເສື່ອມມູນຄ່າ |
| *ຈາກ: ການລົງທຶນທາງດ້ານການເງິນ - HTM* | | | *835,197* | | | | |
| | **ເງິນກູ້ຢືມ ແລະ ໜີ້ຕ້ອງຮັບ** | **1,705,276** | **835,197** | **362** | **-** | **2,540,835** | **ຕົ້ນທຶນຄ່າເສື່ອມມູນຄ່າ** |
| ການລົງທຶນທາງດ້ານການເງິນ – HTM | HTM | 835,197 | (835,197) | - | - | - | N/A |
| *ເຖິງ: ການສານໜີ້ໃນຕົ້ນທຶນຄ່າເສື່ອມມູນຄ່າ* | | | *(835,197)* | | | | |
| | **HTM** | **835,197** | **(835,197)** | **-** | **-** | **-** | **N/A** |
| **ຊັບສິນທັງໝົດ** | | **2,540,473** | **-** | **362** | **-** | **2,540,835** | |
| **ໜີ້ສິນທີ່ບໍ່ແມ່ນທາງດ້ານການເງິນ** | | | | | | | |
| ເງິນແຮສຳລັບພັນທະຜູກພັນນອກໃບລາຍງານຖານະການເງິນ | N/A | - | - | 382 | - | 382 | N/A |
| **ໜີ້ສິນທັງໝົດ** | | **-** | **-** | **382** | **-** | **382** | |

8. **ການເປີດເຜີຍການປ່ຽນແປງ** (ຕໍ່)

ຜົນກະທົບຂອງການປ່ຽນແປງສູ່ IFRS 9 ໃນຄັງສຳຮອງ ແລະ ກຳໄລສະສົມແມ່ນດັ່ງລຸ່ມນີ້

| | *ກຳໄລສະສົມ*<br>*ລ້ານກີບ* |
|---|---|
| ຍອດເຫຼືອທ້າຍພາຍໃຕ້ IAS 39 ນະວັນທີ 31 ທັນວາ 2017 | 24,632 |
| ການຮັບຮູ້ຂອງ IFRS 9 ECLs (ອ້າງອີງຂ້າງລຸ່ມ) | (20) |
| **ຍອດຍົກມາພາຍໃຕ້ IFRS 9 ນະວັນທີ 1 ມັງກອນ 2018** | **24,612** |

ຕາຕະລາງລຸ່ມນີ້ເປັນການສົມທຽບ ຍອດຍົກມາຂອງການຫັກເງິນແຮໜີ້ເສຍພາຍໃຕ້ IAS 39 ການຫັກເງິນແຮຂອງຜົນຂາດທຶນທາງດ້ານສິນເຊື່ອທີ່ຄາດການໄວ້ (ECL) ພາຍໃຕ້ IFRS 9.

| *ຄ່າເສື່ອມມູນຄ່າທີ່ໄດ້ຫັກສຳລັບ* | *ເງິນແຮໜີ້ເສຍ*<br>*ພາຍໃຕ້ IAS 39*<br>*ນະ ວັນທີ 31 ທັນວາ 2017*<br>*ລ້ານກີບ* | *ການຕີມູນຄ່າຄືນ*<br>*ລ້ານກີບ* | *ECL*<br>*ພາຍໃຕ້ IFRS 9*<br>*ນະວັນທີ 1 ມັງກອນ 2018*<br>*ລ້ານກີບ* |
|---|---|---|---|
| ເງິນສົດ ແລະ ເງິນຝາກຢູ່ ທຫລ (IAS 39)/ເງິນສົດ ແລະ ເງິນຝາກຢູ່ ທຫລ (IFRS 9) | - | 114 | 114 |
| ເງິນຝາກຢູ່ທະນາຄານອື່ນ (IAS 39)/ເງິນຝາກຢູ່ທະນາຄານອື່ນ (IFRS 9) | - | 179 | 179 |
| ເງິນກູ້ຢືມແກ່ລູກຄ້າ (IAS 39)/ກາສານໜີ້ໃນລາຄາທຶນຕັດຈຳໜ່າຍ (IFRS 9) | 3,224 | (879) | 2,345 |
| ຫຼັກຊັບ HTM (IAS 39)/ກາສານໜີ້ໃນລາຄາທຶນຕັດຈຳໜ່າຍ (IFRS 9) | - | 224 | 224 |
| ເງິນແຮສຳລັບຂໍ້ຜູກພັນນອກໃບລາຍງານຖານະການເງິນ (IAS 39)/<br>ເງິນແຮສຳລັບຂໍ້ຜູກພັນນອກໃບລາຍງານຖານະການເງິນ (IFRS 9) | - | 382 | 382 |
| | **3,224** | **20** | **3,244** |

## 9. ລາຍຮັບດອກເບ້ຍ ແລະ ຄ່າຍຄືດອກເບ້ຍ

| | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|
| *ລາຍຮັບດອກເບ້ຍທີ່ຄິດໄລ່ໂດຍວິທີອັດຕາດອກເບ້ຍທີ່ແທ້ຈິງ* | | |
| ເງິນຝາກຢູ່ທະນາຄານອື່ນ | 37,098 | 16,266 |
| ກິດຈະກຳການໃຫ້ເງິນກູ້ | 47,233 | 24,738 |
| ພັນທະບັດ | 56,159 | 36,863 |
| | **140,490** | **77,867** |
| *ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍວິທີອັດຕາດອກເບ້ຍທີ່ແທ້ຈິງ* | | |
| ເງິນຝາກຂອງທະນາຄານອື່ນ | (2,869) | (4,016) |
| ເງິນຝາກຂອງລູກຄ້າ | (22,104) | (6,734) |
| | **(24,973)** | **(10,750)** |
| **ລາຍຮັບດອກເບ້ຍ ແລະ ຄ່າຍຄືດອກເບ້ຍສຸດທິ** | **115,517** | **67,117** |

## 10. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

| | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ** | | |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກການໃຫ້ບໍລິການທາງການເງິນນະເວລານັ້ນ: | | |
| - ຄ່າບໍລິການຊຳລະສະສາງ | 3,369 | 1,266 |
| - ຄ່າບໍລິການສິນເຊື່ອ | 1,204 | 1,318 |
| - ກິດຈະກຳອື່ນໆ | 1,037 | 853 |
| | **5,610** | **3,437** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ** | | |
| - ຄ່າທຳນຽມທາງການເງິນຂອງວິສາຫະກິດ | (236) | (214) |
| - ຄ່າທຳນຽມຊຳລະສະສາງໃຫ້ທະນາຄານກາງ | (6) | (13) |
| - ຄ່າສະມາຊິກ | (31) | (54) |
| | **(273)** | **(281)** |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ** | **5,337** | **3,156** |

## 11. ກໍາໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *2018* *ລ້ານກີບ* | *2017* *ລ້ານກີບ* |
|---|---|---|
| ກໍາໄລຈາກສ່ວນຕ່າງການແລກປ່ຽນເງິນຕາຕ່າງປະເທດ ອັດຕາແລກປ່ຽນທັນທີ | 10,169 | 6,580 |
| ກໍາໄລຈາກການຕີມູນຄ່າຄືນຂອງລາຍການທີ່ເປັນເງິນ | 3,148 | 1,287 |
| | **13,317** | **7,867** |

## 12. ລາຍຈ່າຍໜີ້ເສຍຈາກການໃຫ້ສິນເຊື່ອໃນຊັບສິນທາງດ້ານການເງິນ

ຕາຕະລາງລຸ່ມນີ້ສະແດງ ລາຍຈ່າຍ ECL ໃນເຄື່ອງມືທາງດ້ານການເງິນພາຍໃຕ້ IFRS 9 ສໍາລັບປີບັນຊີສິ້ນສຸດ ວັນທີ 31 ທັນວາ 2018:

| | *ບົດອະທິບາຍ ເລກທີ* | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| ເງິນສົດ ແລະ ເງິນຝາກ ກັບ ທຫລ | 15 | 122 | 122 |
| ເງິນຝາກຢູ່ທະນາຄານອື່ນ | 16 | (62) | (62) |
| ການສານໜີ້ ຕີມູນຄ່າໃນຕົ້ນທຶນຄ່າເສື່ອມ | 17 | (10) | (10) |
| ເງິນກູ້ໃຫ້ກັບລູກຄ້າ | 18 | 5,304 | 5,304 |
| ລາຍການນອກໃບລາຍງານຖານະການເງິນ | 24 | (28) | (28) |
| | | **5,326** | **5,326** |

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄ່າເສື່ອມມູນຄ່າທີ່ໄດ້ບັນທຶກໃນໃບລາຍງານຜົນໄດ້ຮັບພາຍໃຕ້ IAS 39 ໃນປີ 2017:

| | *ບົດອະທິບາຍ ເລກທີ* | *ຄ່າເສື່ອມມູນຄ່າຮ່ວມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| ເງິນສົດ ແລະ ເງິນຝາກ ກັບ ທຫລ | | - | - |
| ເງິນຝາກຢູ່ທະນາຄານອື່ນ | | - | - |
| ຫຼັກຊັບຖືຄອງເພື່ອຄົບກໍານົດ | | - | - |
| ເງິນກູ້ໃຫ້ກັບລູກຄ້າ | 18 | 2,872 | 2,872 |
| ລາຍການນອກໃບລາຍງານຖານະການເງິນ | | - | - |
| | | **2,872** | **2,872** |

## 13. ລາຍຈ່າຍເງິນເດືອນ

| | 2018<br>*ລ້ານກີບ* | 2017<br>*ລ້ານກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 14,699 | 15,630 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 1,282 | 643 |
| | **15,981** | **16,273** |

## 14. ລາຍຈ່າຍອື່ນໆໃນການດຳເນີນງານ

| | 2018<br>*ລ້ານກີບ* | 2017<br>*ລ້ານກີບ* |
|---|---|---|
| ຄ່າເຊົ່າ | 2,185 | 2,285 |
| ຄ່າບໍລິການຈາກທາງນອກ | 338 | 560 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 410 | 362 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 165 | 18 |
| ຄ່າໂທລະຄົມມະນາຄົມ | 1,120 | 801 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 1,912 | 2,070 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 909 | 784 |
| ຄ່າທຳນຽມການປະກັນໄພສຳລັບກອງທຶນຄຸ້ມຄອງຜູ້ຝາກເງິນ | 1,022 | 628 |
| ອື່ນໆ | 1,349 | 1,403 |
| | **9,410** | **8,911** |

## 15. ເງິນສົດ ແລະ ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ເງິນສົດໃນຄັງທີ່ເປັນເງິນກີບ | 8,384 | 2,448 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 17,602 | 18,694 |
| ເງິນຝາກຢູ່ ທຫລ | 939,368 | 407,345 |
| - *ເງິນຝາກກະແສລາຍວັນ* | *326,331* | *199,680* |
| - *ເງິນຝາກມີກຳນົດ (i)* | *430,235* | - |
| - *ເງິນຝາກພາກບັງຄັບ (ii)* | *182,797* | *207,660* |
| - *ເງິນຝາກຄ້ຳປະກັນທຶນຈົດທະບຽນ (iii)* | 5 | 5 |
| *ເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງ* | (236) | - |
| | **965,118** | **428,487** |

(i) ເງິນຝາກປະຈຳກັບ ທຫລ ໄລຍະ 5 ປີ ແລະ ມີອັດຕາດອກເບ້ຍ 4.30% + Libor 6 ເດືອນຕໍ່ປີ.

(ii) ຕາມຂໍ້ກຳນົດຂອງ ທຫລ, ສາຂາຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ ໃນອັດຕາ 5.00% ສຳລັບເງິນກີບ ແລະ 10.00% ສຳລັບສະກຸນເງິນຕາຕ່າງປະເທດ, ເດືອນໜຶ່ງສອງຄັ້ງ, (2017: 5% ແລະ 10%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

**15. ເງິນສົດ ແລະ ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")** (ຕໍ່)

(iii) ອີງຕາມດຳລັດເລກທີ 02/ນຍ ຂອງ ທຫລ, ສາຂາຂອງທະນາຄານຕ່າງປະເທດແມ່ນຖືກກຳນົດໃຫ້ຮັກສາເງິນຝາກພິເສດໄວ້ກັບ ທຫລ ເທົ່າກັບ 25% ຂອງທຶນຈົດທະບຽນທີ່ຖອກແລ້ວ ເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ສາຂາຖືກອະນຸຍາດໂດຍ ທຫລ ໂດຍໜັງສືທາງການເລກທີ 194/ກຄທ ລົງວັນທີ 18 ພຶດສະພາ 2016, ເລກທີ 239/ກຄທ ລົງວັນທີ 18 ມິຖຸນາ 2016 ແລະ 334/ກຄທ ລົງວັນທີ 19 ສິງຫາ 2017 ໃຫ້ຖອນເງິນຈາກບັນຊີເງິນຝາກເພື່ອເປັນທຶນໃນການດຳເນີນງານ. ນະວັນທີ 31 ທັນວາ 2018 ຍອດເຫຼືອເງິນຝາກພິເສດຂອງສາຂາມີ 5 ລ້ານກີບ.

ເງິນຝາກກະແສລາຍວັນ, ເງິນຝາກພາກບັງຄັບ ແລະ ເງິນຝາກຄ້ຳປະກັນທຶນຈົດທະບຽນກັບ ທຫລ ແມ່ນບໍ່ມີດອກເບ້ຍ.

***15.1 ເງິນແຮຄ່າເສື່ອມມູນຄ່າສຳລັບຍອດເງິນຝາກຢູ່ ທຫລ ພາຍໃຕ້ IFRS 9***

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນະພາບສິນເຊື່ອ ແລະ ຍອດທຸລະກຳສູງສຸດ ແກ່ຄວາມສ່ຽງຂອງສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮຄ່າເສື່ອມມູນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍທີ 31.

| | *31 ທັນວາ 2018* | | | | *1 ມັງກອນ 2018* |
|---|---|---|---|---|---|
| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* | *ຂັ້ນທີ 2 ແບບດ່ຽວ ລ້ານກີບ* | *ຂັ້ນທີ 3 ລ້ານກີບ* | *ທັງໝົດ ລ້ານກີບ* | *ທັງໝົດ ລ້ານກີບ* |
| ເກີດດອກອອກຜົນ | 939,368 | - | - | 939,368 | 407,345 |
| *ເຊິ່ງໃນນັ້ນ:* | | | | | |
| - *ບໍ່ໄດ້ຈັດອັນດັບໂດຍລວມ* | *939,368* | - | - | *939,368* | *407,345* |
| ບໍ່ເກີດດອກອອກຜົນ | - | - | - | - | - |
| | **939,368** | **-** | **-** | **939,368** | **407,345** |

ການວິເຄາະສ່ວນປ່ຽນແປງຂອງຍອດຍົກມາໃນມູນຄ່າຕາມບັນຊີມີດັ່ງລຸ່ມນີ້:

| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* |
|---|---|
| **ຍອດຍົກມາຂອງມູນຄ່າທີ່ຕາມບັນຊີນະວັນທີ 1 ມັງກອນ 2018** | **407,345** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 556,886 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (24,863) |
| ຈຳນວນທີ່ສະສາງ | - |
| **ນະວັນທີ 31 ທັນວາ 2018** | **939,368** |

**15. ເງິນສົດ ແລະ ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ** (ຕໍ່)

***15.1 ເງິນແຮຄ່າເສື່ອມມູນຄ່າສຳລັບຍອດເງິນຝາກຢູ່ ທຫລ ພາຍໃຕ້ IFRS 9*** (ຕໍ່)

ການວິເຄາະສ່ວນປ່ຽນແປງໃນ ການສູນເສຍສິນເຊື່ອທີ່ຄາດການໄວ້ (ECL) ທີ່ກ່ຽວຂ້ອງແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ແບບດ່ຽວ*<br>*ລ້ານກີບ* |
|---|---|
| **ເງິນແຮ ECL ນະວັນທີ 1 ມັງກອນ 2018** | **114** |
| ຊັບສິນທີ່ໄດ້ຊື້ເຂົ້າມາໃໝ່ ຫຼື ໄດ້ມາ | 140 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (7) |
| ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ ECL | (11) |
| ຈຳນວນທີ່ສະສາງ | - |
| **ນະວັນທີ 31 ທັນວາ 2018** | **236** |

***15.2 ເງິນແຮຄ່າເສື່ອມມູນຄ່າສຳລັບຍອດເງິນຝາກຢູ່ ທຫລ ພາຍໃຕ້ IAS 39***

ຍອດລວມເງິນຝາກຢູ່ ທຫລ ນະວັນທີ 31 ທັນວາ 2017 ແມ່ນ 407,345 ລ້ານກີບ ທີ່ບໍ່ເກີນກຳນົດ ແລະ ບໍ່ຖືກຫັກຄ່າເສື່ອມມູນຄ່າ ແລະ ເງິນແຮຄ່າເສື່ອມມູນຄ່າສຳລັບລາຍຈ່າຍໜີ້ເສຍພາຍໃນປີ 2017 ພາຍໃຕ້ IAS 39 ແມ່ນສູນ.

**16. ເງິນຝາກຢູ່ກັບທະນາຄານອື່ນ**

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ:** | **10,474** | **2,141** |
| - ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ຈຳກັດ , ສາຂານະຄອນຫຼວງວຽງຈັນ | 10,474 | 2,141 |
| **ເງິນກະແສລາຍວັນກັບທະນາຄານຕ່າງປະເທດ:** | **525,562** | **305,909** |
| - ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ,ໜ່ວຍແລກປ່ຽນເງິນຕາ RMB | 114,484 | 8,779 |
| - ທະນາຄານແຫ່ງປະເທດຈີນ, ສາຂາຮົງກົງ | 20,418 | 1,972 |
| - ທະນາຄານແຫ່ງປະເທດຈີນ, ສາຂາໄທ | 2,220 | 7,360 |
| - ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 225,132 | 58,201 |
| - ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | 163,245 | 229,533 |
| - ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ | 63 | 64 |
| **ເງິນຝາກປະຈຳກັບທະນາຄານຕ່າງປະເທດ:** | **447,009** | **561,240** |
| - ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | 331,915 |
| - ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ, ໜ່ວຍແລກປ່ຽນເງິນຕາ RMB | 447,009 | 229,325 |
| **ເງິນແຮການສູນເສຍສິນເຊື່ອທີ່ຄາດການໄວ້** | **(117)** | **-** |
| | **982,928** | **869,290** |

## 16. ເງິນຝາກຢູ່ກັບທະນາຄານອື່ນ (ຕໍ່)

ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ, ໜ່ວຍແລກປ່ຽນເງິນຕາ RMB ມີກຳນົດໜ້ອຍກວ່າ 3 ເດືອນ ແລະ ມີອັດຕາດອກເບ້ຍ 2.45% - 3.45% ຕໍ່ປີ.

### *16.1 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນຝາກຢູ່ກັບທະນາຄານອື່ນພາຍໃຕ້ IFRS 9*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນະພາບສິນເຊື່ອ ແລະ ຍອດທຸລະກຳສູງສຸດ ແກ່ຄວາມສ່ຽງທາງດ້ານສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮຄ່າເສື່ອມມູນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 31.

| | *31 ທັນວາ 2018* | | | | *1 ມັງກອນ 2018* |
|---|---|---|---|---|---|
| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* | *ຂັ້ນທີ 2 ແບບດ່ຽວ ລ້ານກີບ* | *ຂັ້ນທີ 3 ລ້ານກີບ* | *ລວມ ລ້ານກີບ* | *ລວມ ລ້ານກີບ* |
| ເກີດດອກອອກຜົນ | 983,045 | - | - | 983,045 | 869,290 |
| ເຊິ່ງໃນນັ້ນ: | | | | | |
| - *ບໍ່ໄດ້ຈັດອັນດັບໂດຍລວມ* | *983,045* | - | - | *983,045* | *869,290* |
| ບໍ່ເກີດດອກອອກຜົນ | - | - | - | - | - |
| | **983,045** | **-** | **-** | **983,045** | **869,290** |

ການວິເຄາະສ່ວນປ່ຽນແປງໃນມູນຄ່າຕາມບັນຊີແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* |
|---|---|
| **ຍອດຍົກມາຂອງມູນຄ່າຕາມບັນຊີນະວັນທີ 1 ມັງກອນ 2018** | **869,290** |
| ຊັບສິນທີ່ໄດ້ຊື້ເຂົ້າມາໃໝ່ ຫຼື ໄດ້ມາໃໝ່ | 517,099 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (403,344) |
| ຈຳນວນທີ່ສະສາງ | - |
| **ນະວັນທີ 31 ທັນວາ 2018** | **983,045** |

## 16. ເງິນຝາກຢູ່ກັບທະນາຄານອື່ນ (ຕໍ່)

### *16.1 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນຝາກຢູ່ກັບທະນາຄານອື່ນພາຍໃຕ້ IFRS 9* (ຕໍ່)

ການວິເຄາະສ່ວນປ່ຽນແປງໃນ ການສູນເສຍສິນເຊື່ອທີ່ຄາດການໄວ້ (ECL) ທີ່ກ່ຽວຂ້ອງພາຍໃນປີ 2018 ມີດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ແບບດ່ຽວ*<br>*ລ້ານກີບ* |
|---|---|
| **ເງິນແຮ ECLນະວັນທີ 1 ມັງກອນ 2018** | **179** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 130 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (83) |
| ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ ECL | (109) |
| ຈຳນວນສະສາງ | - |
| **ນະວັນທີ 31 ທັນວາ 2018** | **117** |

### *16.2 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນຝາກຢູ່ກັບທະນາຄານອື່ນພາຍໃຕ້ IAS 39*

ຍອດລວມເງິນຝາກຢູ່ ກັບທະນາຄານອື່ນ ນະວັນທີ 31 ທັນວາ 2017 ແມ່ນ 869,290 ລ້ານກີບທີ່ ບໍ່ເກີນກຳນົດ ແລະ ບໍ່ຖືກຫັກຄ່າເສື່ອມມູນຄ່າ ແລະ ເງິນແຮຄ່າເສື່ອມມູນຄ່າສຳລັບລາຍຈ່າຍໜີ້ເສຍພາຍໃນປີ 2017 ພາຍໃຕ້ IAS 39 ແມ່ນເທົ່າສູນ.

## 17. ຫຼັກຊັບທາງດ້ານການເງິນອື່ນໆນອກຈາກບັນດາຫຼັກຊັບທີ່ໄດ້ຖືກຕີມູນຄ່າໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ

### *17.1 ຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ*

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ພັນທະບັດທີ່ອອກໃຫ້ໂດຍ ທຫລ | - | 835,197 |
| ເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງ | - | - |
| | **-** | **835,197** |

ຍອດລວມຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ ນະວັນທີ 31 ທັນວາ 2017 ແມ່ນ 835,197 ລ້ານກີບທີ່ບໍ່ເກີນກຳນົດ ແລະ ບໍ່ຖືກຫັກຄ່າເສື່ອມມູນຄ່າ ແລະ ເງິນແຮຄ່າເສື່ອມມູນຄ່າສຳລັບລາຍຈ່າຍໜີ້ເສຍພາຍໃນປີ 2017 ພາຍໃຕ້ IAS 39 ແມ່ນສູນ.

### *17.2 ການສານໜີ້ໃນເຕັ້ມທຶນຄ່າເສື່ອມ*

| | *31 ທັນວາ 2018*<br>*ລ້ານກີບ* | *31 ທັນວາ 2017*<br>*ລ້ານກີບ* |
|---|---|---|
| ພັນທະບັດທີ່ອອກໃຫ້ໂດຍ ທຫລ | 860,343 | - |
| ເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງ | (214) | - |
| | **860,129** | **-** |

**17. ຫຼັກຊັບທາງດ້ານການເງິນອື່ນໆນອກຈາກບັນດາຫຼັກຊັບທີ່ໄດ້ຖືກຕີມູນຄ່າໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ** (ຕໍ່)

***17.2 ການສານໜີ້ໃນຕົ້ນທຶນຄ່າເສື່ອມ*** (ຕໍ່)

ພັນທະບັດທີ່ອອກໃຫ້ໂດຍ ທຫລ ນະວັນທີ 31 ທັນວາ 2018 ປະກອບດ້ວຍ:

| *ໄລຍະເວລາ* | *ມື້ທີ່ຊື້* | *ມື້ຄົບກຳນົດ* | *ມູນຄ່າໜ້າບັດ ໂດລາ* | *ອັດຕາດອກເບ້ຍ % ຕໍ່ປີ* |
|---|---|---|---|---|
| 5 ປີ | 21 ຕຸລາ 2015 | 25 ຕຸລາ 2020 | 50,000,000 | 4,30% + Libor 6 ເດືອນ |
| 5 ປີ | 16 ມິຖຸນາ 2017 | 16 ມິຖຸນາ 2022 | 50,000,000 | 4,30% + Libor 6 ເດືອນ |
| | | | **100,000,000** | |

***ເງິນແຮຄ່າເສື່ອມມູນຄ່າສຳລັບການສານໜີ້ໃນຕົ້ນທຶນຄ່າເສື່ອມພາຍໃຕ້ IFRS 9***

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນະພາບສິນເຊື່ອ ແລະ ຍອດທຸລະກຳສູງສຸດ ແກ່ຄວາມສ່ຽງຂອງສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮຄ່າເສື່ອມມູນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 31.

| | *31 ທັນວາ 2018* | | | | *1 ມັງກອນ 2018* |
|---|---|---|---|---|---|
| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* | *ຂັ້ນທີ 2 ແບບດ່ຽວ ລ້ານກີບ* | *ຂັ້ນທີ 3 ລ້ານກີບ* | *ລວມ ລ້ານກີບ* | *ລວມ ລ້ານກີບ* |
| ເກີດດອກອອກຜົນ | 860,343 | - | - | 860,343 | 835,197 |
| *ເຊິ່ງໃນນັ້ນ:* | | | | | |
| - *ບໍ່ໄດ້ຈັດອັນດັບ ໂດຍລວມ* | *983,045* | - | - | *983,045* | *869,290* |
| ບໍ່ເກີດດອກອອກຜົນ | - | - | - | - | - |
| | **860,343** | **-** | **-** | **860,343** | **835,197** |

ການວິເຄາະສ່ວນປ່ຽນແປງໃນມູນຄ່າຕາມບັນຊີແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* |
|---|---|
| **ມູນຄ່າຍອດຍົກມາຕາມບັນຊີນະວັນທີ 1 ມັງກອນ 2018** | **835,197** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 1,277 |
| ການດັດແກ້ລາຍການເງິນຕາຕ່າງປະເທດ | 23,869 |
| **ນະວັນທີ 31 ທັນວາ 2018** | **860,343** |

**17. ຫຼັກຊັບທາງດ້ານການເງິນອື່ນໆນອກຈາກບັນດາຫຼັກຊັບທີ່ໄດ້ຖືກຕີມູນຄ່າໃນມູນຄ່າຍຸດຕິທຳຜ່ານກຳໄລຂາດທຶນ** (ຕໍ່)

***17.2 ການລົງທຶນໃນລາຄາຕົ້ນທຶນຕັດຈຳໜ່າຍ*** (ຕໍ່)

ການວິເຄາະສ່ວນປ່ຽນແປງເງິນແຮຂອງ ECL ທີ່ກ່ຽວຂ້ອງແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* |
|---|---|
| **ຄ່າໃຊ້ຈ່າຍ ECLນະວັນທີ 1 ມັງກອນ 2018** | **224** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 1 |
| ການດັດແກ້ລາຍການເງິນຕາຕ່າງປະເທດ | 6 |
| ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ ECL | (17) |
| **ນະວັນທີ 31 ທັນວາ 2018** | **214** |

**18. ເງິນກູ້ໃຫ້ລູກຄ້າ**

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ລູກຄ້າທັງໝົດ | 576,273 | 411,602 |
| ລົບ: ເງິນແຮສຳລັບຄ່າເສື່ອມມູນຄ່າ *(ບົດອະທິບາຍເລກທີ 18.1)* | (8,551) | (4,103) |
| | **567,722** | **407,499** |

ອັດຕາດອກເບ້ຍສຳລັບເງິນກູ້ໃຫ້ລູກຄ້າພາຍໃນປີມີດັ່ງນີ້:

| | *2018 % ຕໍ່ປີ* | *2017 % ຕໍ່ປີ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 8.00 - 11.00% | 8.00 - 11.00% |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 6.95 - 9.03% | 7.75% |
| ເງິນກູ້ທີ່ເປັນສະກຸນເງິນຢວນ | 5.50 - 6.50% | N/A |

***ການວິເຄາະຂອງເງິນກູ້ໃຫ້ລູກຄ້າ***

*ການວິເຄາະຕາມສະກຸນເງິນ*

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 356,501 | 357,527 |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 82,118 | 54,075 |
| ເງິນກູ້ທີ່ເປັນສະກຸນເງິນຢວນ | 137,654 | - |
| | **576,273** | **411,602** |

## 18. ເງິນກູ້ໃຫ້ລູກຄ້າ (ຕໍ່)

*ວິເຄາະຕາມໄລຍະເດີມ*

| | 31 ທັນວາ 2018<br>ລ້ານກີບ | 31 ທັນວາ 2017<br>ລ້ານກີບ |
|---|---|---|
| ເງິນກູ້ໄລຍະສັ້ນ | 142,630 | 12,988 |
| ເງິນກູ້ໄລຍະກາງ | 132,799 | 97,666 |
| ເງິນກູ້ໄລຍະຍາວ | 300,844 | 300,948 |
| | **576,273** | **411,602** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | 31 ທັນວາ 2018<br>ລ້ານກີບ | 31 ທັນວາ 2017<br>ລ້ານກີບ |
|---|---|---|
| ບໍລິສັດອຸດສາຫະກຳບໍລິການ | 366,617 | 349,702 |
| ບໍລິສັດກໍ່ສ້າງ | 146,280 | - |
| ບໍລິສັດກະສິກຳ | 51,324 | 49,915 |
| ບໍລິສັດການຄ້າ | 12,052 | 11,985 |
| | **576,273** | **411,602** |

### *18.1 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ລູກຄ້າພາຍໃຕ້ IFRS 9*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນະພາບສິນເຊື່ອ ແລະ ຍອດທຸລະກຳສູງສຸດ ແກ່ຄວາມສ່ຽງຂອງສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮຄ່າເສື່ອມມູນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 31.

| | 31 ທັນວາ 2018 | | | | 1 ມັງກອນ 2018 |
|---|---|---|---|---|---|
| | *ຂັ້ນທີ 1<br>ແບບຄ່ຽວ<br>ລ້ານກີບ* | *ຂັ້ນທີ 2<br>ແບບຄ່ຽວ<br>ລ້ານກີບ* | *ຂັ້ນທີ 3<br>ລ້ານກີບ* | *ທັງໝົດ<br>ລ້ານກີບ* | *ທັງໝົດ<br>ລ້ານກີບ* |
| ເກີດດອກອອກຜົນ | 576,273 | - | - | 576,273 | 411,602 |
| *ເຊິ່ງໃນນັ້ນ:* | | | | | |
| - *ຄວາມສ່ຽງ ກຸ່ມ 3* | *420,294* | - | - | *420,294* | *300,000* |
| - *ຄວາມສ່ຽງ ກຸ່ມ 4* | *51,198* | - | - | *51,198* | *98,502* |
| - *ຄວາມສ່ຽງ ກຸ່ມ 5* | *97,658* | - | - | *97,658* | - |
| - *ຄວາມສ່ຽງ ກຸ່ມ 6* | *7,123* | - | - | *7,123* | *13,100* |
| ບໍ່ເກີດດອກອອກຜົນ | - | - | - | - | - |
| | **576,273** | **-** | **-** | **576,273** | **411,602** |

**18. ເງິນກູ້ໃຫ້ລູກຄ້າ** (ຕໍ່)

***18.1 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ລູກຄ້າພາຍໃຕ້ IFRS 9*** (ຕໍ່)

ການວິເຄາະສ່ວນປ່ຽນແປງຂອງຍອດຍົກມາໃນມູນຄ່າຕາມບັນຊີມີດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ແບບດ່ຽວ*<br>*ລ້ານກີບ* |
|---|---|
| **ຍອດຍົກມາຂອງມູນຄ່າທີ່ຕາມບັນຊີນະວັນທີ 1 ມັງກອນ 2018** | **411,602** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 230,656 |
| ການປຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (65,985) |
| **ນະວັນທີ 31 ທັນວາ 2018** | **576,273** |

ການວິເຄາະສ່ວນປ່ຽນແປງໃນ ECL ທີ່ກ່ຽວຂ້ອງແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1*<br>*ແບບດ່ຽວ*<br>*ລ້ານກີບ* |
|---|---|
| **ເງິນແຮຂອງ ECL ນະວັນທີ 1 ມັງກອນ 2018** | **3,224** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 3,423 |
| ການປຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (517) |
| ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ ECL | 2,421 |
| ຈຳນວນທີ່ຊຳລະສະສາງ | - |
| **ນະວັນທີ 31 ທັນວາ 2018** | **8,551** |

***18.2 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ລູກຄ້າພາຍໃຕ້ IAS 39***

ການວິເຄາະເງິນແຮສຳລັບຄ່າເສື່ອມມູນຄ່າໜີ້ເສຍພາຍໃຕ້ IAS 39 ສຳລັບເງິນກູ້ໃຫ້ລູກຄ້າສຳລັບປີເຖິງ ວັນທີ 31 ທັນວາ 2017 ແມ່ນດັ່ງຕາຕະລາງລຸ່ມນີ້:

| | *ບໍ່ເກີນກຳນົດ ແລະ ບໍ່ຖືກຫັກ ຄ່າເສື່ອມມູນຄ່າ*<br>*ລ້ານກີບ* | *ຄ່າເສື່ອມມູນຄ່າ ແບບກຸ່ມ*<br>*ລ້ານກີບ* | *ຄ່າເສື່ອມມູນຄ່າ ແບບດ່ຽວ*<br>*ລ້ານກີບ* | *ທັງໝົດ*<br>*ລ້ານກີບ* |
|---|---|---|---|---|
| ຍອດເງິນແຮຄ່າເສື່ອມມູນຄ່າ | | | | |
| ຍອດຍົກມາ | - | 1,224 | - | 1,224 |
| ລາຍຈ່າຍໜີ້ເສຍ | - | 2,872 | - | 2,872 |
| ຜົດດ່ຽງຈາກເງິນຕາຕ່າງປະເທດ | - | 7 | - | 7 |
| **ຍອດເຫຼືອທ້າຍ** | **-** | **4,103** | **-** | **4,103** |

## 19. ຊັບສິນບັດ ແລະ ອຸປະກອນ

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕົບແຕ່ງ ລ້ານກີບ* | *ອຸປະກອນ ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2018 | 7,448 | 2,742 | 4,759 | 1,607 | 16,556 |
| ຮັບເຂົ້າເພີ່ມພາຍໃນປີ | - | 12 | 1,133 | - | 1,145 |
| ນະວັນທີ 31 ທັນວາ 2018 | 7,448 | 2,754 | 5,892 | 1,607 | 17,701 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2018 | 4,098 | 1,464 | 2,989 | 540 | 9,091 |
| ຄ່າຫຼຸ້ຍຫ້ຽນຫັກພາຍໃນປີ | 1,488 | 535 | 750 | 260 | 3,033 |
| ນະວັນທີ 31 ທັນວາ 2018 | 5,586 | 1,999 | 3,739 | 800 | 12,124 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2018 | 3,350 | 1,278 | 1,770 | 1,067 | 7,465 |
| ນະວັນທີ 31 ທັນວາ 2018 | 1,862 | 755 | 2,153 | 807 | 5,577 |

## 20. ຊັບສິນອື່ນໆ

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າ | 13,263 | 15,579 |
| ອື່ນໆ | 111 | - |
| | **13,374** | **15,579** |

## 21. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

| | 31 ທັນວາ 2018<br>ລ້ານກີບ | 31 ທັນວາ 2017<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຈາກທະນາຄານອື່ນ** | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | 166,617 | 52,913 |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 2,064 | 6,527 |
| ທະນາຄານແຫ່ງປະເທດຈີນ | 19,603 | 13,387 |
| **ເງິນຝາກປະຈຳຈາກທະນາຄານອື່ນ** | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | - | 66,417 |
| ທະນາຄານ ແຄນນາເດຍ ລາວ ຈຳກັດ | 30,377 | - |
| ໜີ້ຕ້ອງສົ່ງອື່ນໆໃຫ້ສະຖາບັນການເງິນ | 5,865 | 559 |
| | **224,526** | **139,803** |

ເງິນຝາກປະຈຳຈາກ ທະນາຄານ ແຄນນາເດຍ ລາວ ຈຳກັດມີກຳນົດ 6 ເດືອນ ແລະ ມີອັດຕາດອກເບ້ຍ 3.95% ຕໍ່ປີ.

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | 31 ທັນວາ 2018<br>ລ້ານກີບ | 31 ທັນວາ 2017<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **1,753,074** | **1,718,143** |
| - ເປັນເງິນກີບ | 101,163 | 143,731 |
| - ເປັນເງິນຕາຕ່າງປະເທດ | 1,651,911 | 1,574,412 |
| **ເງິນຝາກປະຢັດ** | **193,314** | **113,692** |
| - ເປັນເງິນກີບ | 17,115 | 11,924 |
| - ເປັນເງິນຕາຕ່າງປະເທດ | 176,199 | 101,768 |
| **ເງິນຝາກປະຈຳ** | **702,147** | **148,357** |
| - ເປັນເງິນກີບ | 4,585 | 2,701 |
| - ເປັນເງິນຕາຕ່າງປະເທດ | 697,562 | 145,656 |
| | **2,648,535** | **1,980,192** |

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍຂອງໜີ້ຕ້ອງສົ່ງໃຫ້ລູກຄ້າມີດັ່ງນີ້:

| | *2018 ອັດຕາດອກເບ້ຍ* | *2017 ອັດຕາດອກເບ້ຍ* |
|---|---|---|
| ເງິນຝາກກະແສລາຍວັນ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນກີບ | 1.00% | 1.00% |
| ເງິນຝາກປະຢັດເປັນໂດລາ | 1.25% | 1.25% |
| ເງິນຝາກປະຢັດເປັນບາດ | 0.50% | 0.50% |
| ເງິນຝາກປະຈຳເປັນກີບ | 3.00% - 9.00% | 3.00% - 6.50% |
| ເງິນຝາກປະຈຳເປັນໂດລາ | 2.00% - 6.25% | 2.00% - 6.25% |
| ເງິນຝາກປະຈຳເປັນບາດ | 0.75% - 4.50% | 0.75% - 4.50% |

## 23. ໜີ້ສິນອື່ນໆ

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ໜີ້ຕ້ອງສົ່ງໃຫ້ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 950 | 812 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 4,457 | 6,686 |
| ອື່ນໆ | 250 | 490 |
| | **5,657** | **7,988** |

## 24. ເງິນແຮ

ການເຄື່ອນໄຫວຂອງເງິນແຮພາຍໃນປີ 2018 ແລະ ປີ 2017 ມີດັ່ງລຸ່ມນີ້:

| | *ເງິນແຮສຳລັບຂໍ້ຜູກພັນທາງການເງິນ* | |
|---|---|---|
| | *2018 ລ້ານກີບ* | *2017 ລ້ານກີບ* |
| ຍອດຍົກມາ | 382 | - |
| ສ່ວນປ່ຽນແປງສຸດທິລະຫວ່າງປີ | (28) | - |
| ຈຳນວນສະສາງ | - | - |
| **ຍອດເຫຼືອທ້າຍ** | **354** | **-** |

ເພື່ອຕອບສະໜອງຄວາມຕ້ອງການທາງການເງິນຂອງລູກຄ້າ, ທະນາຄານມີຂໍ້ຜູກພັນທາງການເງິນທີ່ຍົກເລີກບໍ່ໄດ້ ແລະ ໜີ້ສິນທີ່ອາດຈະເກີດຂຶ້ນ. ຂໍ້ຜູກພັນເຫຼົ່ານີ້ປະກອບດ້ວຍໜັງສືຄ້ຳປະກັນທາງການເງິນ ແລະ ໜັງສືສິນເຊື່ອ. ເຖິງແມ່ນວ່າພັນທະຜູກພັນເຫຼົ່ານີ້ອາດຈະບໍ່ຖືກຮັບຮູ້ໃນໃບລາຍງານຖານະທາງການເງິນແຕ່ກໍມີຄວາມສ່ຽງດ້ານສິນເຊື່ອ ແລະ ດັ່ງນັ້ນຈຶ່ງເປັນສ່ວນໜຶ່ງຂອງຄວາມສ່ຽງໂດຍລວມຂອງທະນາຄານ.

ໜັງສືສິນເຊື່ອ ແລະ ໜັງສືຄ້ຳປະກັນເຮັດໃຫ້ທະນາຄານປະຕິບັດການຊຳລະໃນນາມຂອງລູກຄ້າໃນກໍລະນີທີ່ສະເພາະເຈາະຈົງ ເຊິ່ງໂດຍທົ່ວໄປຈະກ່ຽວຂ້ອງກັບການນຳເຂົ້າ ຫຼື ສົ່ງອອກສິນຄ້າ. ການຄ້ຳປະກັນ ແລະ ໜັງສືສິນເຊື່ອ ມີຄວາມສ່ຽງດ້ານສິນເຊື່ອທີ່ຄ້າຍຄືກັບເງິນກູ້. ມູນຄ່າໃນນາມຂອງບັນດາພັນທະຜູກພັນເຫຼົ່ານັ້ນແມ່ນສະແດງດັ່ງຕໍ່ໄປນີ້:

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ໜັງສືສິນເຊື່ອ | - | 3,500 |
| ການຄ້ຳປະກັນທາງການເງິນ | 2,525,781 | 2,665,385 |
| | **2,525,781** | **2,668,885** |

### *24.1 ເງິນແຮຄ່າເສື່ອມມູນຄ່າສຳລັບເງິນກູ້ໃຫ້ລູກຄ້າພາຍໃຕ້ IFRS 9*

ຕາຕະລາງລຸ່ມນີ້ສະແດງໃຫ້ເຫັນເຖິງຄຸນະພາບສິນເຊື່ອ ແລະ ຍອດທຸລະກຳສູງສຸດ ແກ່ຄວາມສ່ຽງຂອງສິນເຊື່ອອີງຕາມລະບົບການຈັດອັນດັບສິນເຊື່ອພາຍໃນ ແລະ ການຈັດລຳດັບຂັ້ນຂອງສາຂາ. ຕົວເລກທີ່ສະແດງໃຫ້ເຫັນລຸ່ມນີ້ແມ່ນຍອດຂອງເງິນແຮຄ່າເສື່ອມມູນຄ່າທັງໝົດ. ສຳລັບລາຍລະອຽດຂອງລະບົບການໃຫ້ຄະແນນຂອງພາຍໃນສາຂາແມ່ນສະແດງຢູ່ບົດອະທິບາຍເລກທີ 31.

**24. ເງິນແຮ** (ຕໍ່)

***24.1 ເງິນແຮຄ່າເສື່ອມມູນຄ່າສຳລັບພັນທະຜູກພັນທາງການເງິນພາຍໃຕ້ IFRS 9*** (ຕໍ່)

| | *31 ທັນວາ 2018* | | | | *1 ມັງກອນ 2018* |
|---|---|---|---|---|---|
| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* | *ຂັ້ນທີ 2 ແບບດ່ຽວ ລ້ານກີບ* | *ຂັ້ນທີ 3 ລ້ານກີບ* | *ລວມ ລ້ານກີບ* | *ລວມ ລ້ານກີບ* |
| ເກີດດອກອອກຜົນ | 2,525,781 | - | - | 2,525,781 | 2,668,885 |
| *ເຊິ່ງໃນນັ້ນ:* | | | | | |
| - *ບໍ່ໄດ້ຈັດອັນດັບ ໂດຍລວມ* | *2,525,781* | - | - | *2,525,781* | *2,668,885* |
| ບໍ່ເກີດດອກອອກຜົນ | - | - | - | - | - |
| | **2,525,781** | **-** | **-** | **2,525,781** | **2,668,885** |

ການວິເຄາະສ່ວນປ່ຽນແປງຂອງຍອດຍົກມາໃນມູນຄ່າຕາມບັນຊີມີດັ່ງລຸ່ມນີ້:

| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* |
|---|---|
| **ຍອດຍົກມາຂອງມູນຄ່າຕາມບັນຊີນະວັນທີ 1 ມັງກອນ 2018** | **2,668,885** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 313,920 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (457,024) |
| | - |
| **ນະວັນທີ 31 ທັນວາ 2018** | **2,525,781** |

ການວິເຄາະສ່ວນປ່ຽນແປງໃນ ECL ທີ່ກ່ຽວຂ້ອງແມ່ນດັ່ງລຸ່ມນີ້:

| | *ຂັ້ນທີ 1 ແບບດ່ຽວ ລ້ານກີບ* |
|---|---|
| **ເງິນແຮຂອງ ECL ນະວັນທີ 1 ມັງກອນ 2018** | **382** |
| ຊັບສິນທີ່ໄດ້ມາໃໝ່ ຫຼື ຊື້ໃໝ່ | 39 |
| ການຢຸດຮັບຮູ້ ຫຼື ຈ່າຍຄືນ (ບໍ່ລວມການສະສາງ) | (64) |
| ສ່ວນປ່ຽນແປງທີ່ປ້ອນເຂົ້າທີ່ໃຊ້ສຳລັບຄິດໄລ່ ECL | (3) |
| ຈຳນວນທີ່ຊຳລະສະສາງ | - |
| **ນະວັນທີ 31 ທັນວາ 2018** | **354** |

***24.2 ເງິນແຮຄ່າເສື່ອມມູນຄ່າສຳລັບພັນທະຜູກພັນທາງການເງິນພາຍໃຕ້ IAS 39***

ຍອດລວມພັນທະຜູກພັນທາງການເງິນ ນະວັນທີ 31 ທັນວາ 2017 ແມ່ນ 2,668,885 ລ້ານກີບທີ່ບໍ່ເກີນກຳນົດ ແລະ ບໍ່ຖືກຫັກຄ່າເສື່ອມມູນຄ່າ ແລະ ເງິນແຮຄ່າເສື່ອມມູນຄ່າສຳລັບລາຍຈ່າຍໜີ້ເສຍພາຍໃນປີ 2017 ພາຍໃຕ້ IAS 39 ແມ່ນເທົ່າສູນ.

**25. ອາກອນ**

*ອາກອນກຳໄລ ("ອກລ")*

ເງິນແຮໄດ້ຖືກຫັກໄວ້ສຳລັບອາກອນກຳໄລພາຍໃນປີ ໂດຍອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນກຳໄລອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2016 ເຊິ່ງມີຜົນບັງຄັບໃຊ້ວັນທີ 24 ພຶດສະພາ 2017.

| | *2018*<br>*ລ້ານກີບ* | *2017*<br>*ລ້ານກີບ* |
|---|---|---|
| ກຳໄລກ່ອນອາກອນພາຍໃຕ້ IFRS | 100,421 | 46,757 |
| ສ່ວນຕ່າງລະຫວ່າງ IFRS ແລະ ລະບົບບັນຊີລາວ | | |
| *ເຊິ່ງ:* | | |
| *ລາຍຈ່າຍເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງສຳລັບເງິນຝາກຢູ່ທະນາຄານອື່ນ* | 60 | - |
| *ລາຍຈ່າຍເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງສຳລັບເງິນກູ້ຢືມແກ່ລູກຄ້າ* | 6,557 | - |
| *ລາຍຈ່າຍເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງສຳລັບຫຼັກຊັບທີ່ຖືຈົນຄົບກຳນົດ* | (10) | - |
| *ລາຍຈ່າຍເງິນແຮສຳລັບລາຍຈ່າຍໜີ້ເສຍທີ່ຄາດຫວັງສຳລັບພັນທະຜູກພັນນອກໃບລາຍງານຖານະການເງິນ* | (28) | - |
| *ລາຍຈ່າຍຄ່າຫຼຸ້ຍຫ້ຽນສຳລັບຕົ້ນທຶນເລີ່ມຕົ້ນທຸລະກິດ* | - | (248) |
| **ກຳໄລກ່ອນອາກອນພາຍໃຕ້ລະບົບບັນຊີລາວ** | **107,000** | **46,509** |
| ລາຍຈ່າຍທີ່ບໍ່ອະນຸຍາດໃຫ້ຫັກ | 269 | 1,726 |
| ປຽບທຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | 135 | 224 |
| ຂາດທຶນຍົກມາຈາກປີຜ່ານມາ | - | (8,679) |
| **ລາຍຮັບສຳລັບຫັກອາກອນພາຍໃຕ້ລະບົບບັນຊີລາວ** | **107,404** | **39,780** |
| **ລາຍຈ່າຍອາກອນກຳໄລ, ຕາມອັດຕາກົດໝາຍ 24%** | **25,777** | **9,547** |
| ອາກອນກຳໄລຄ້າງຊຳລະນະຕົ້ນປີ | 3,065 | - |
| ອາກອນກຳໄລທີ່ໄດ້ຊຳລະພາຍໃນປີ | (20,288) | 6,482 |
| **ອາກອນກຳໄລຄ້າງຊຳລະໃນທ້າຍປີ** | **8,554** | **3,065** |

ລາຍການເສຍອາກອນຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 25. ອາກອນ (ຕໍ່)

***ຂາດທຶນຍົກໄປຫັກຕໍ່***

ອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ເລກທີ 70/ສພຊ ລົງວັນທີ 15 ທັນວາ 2016, ມາດຕາ 40, ຂາດທຶນພາຍໃນປີທີ່ໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຮັບຮູ້ໂດຍເຈົ້າໜ້າທີ່ສ່ວນສາອາກອນແມ່ນສາມາດຍົກຍອດຂາດທຶນດັ່ງກ່າວມາຫັກລ້າງກຳໄລໃນປີຕໍ່ມາໄດ້ສາມປີ. ເມື່ອຜ່ານຊ່ວງສາມປີແລ້ວຍອດຂາດທຶນທີ່ເຫຼືອບໍ່ອະນຸຍາດໃຫ້ນຳມາຫັກລົບອີກ.

ລາຍລະອຽດຂອງການຫັກລົບມີດັ່ງນີ້:

| *ປີ* | *ຂາດທຶນເພີ່ມເຕີມທີ່ເກີດຂຶ້ນສຳລັບປີ ລ້ານກີບ* | *ໃຊ້ຈິນຮອດທ້າຍປີ ລ້ານກີບ* | *ຈຳນວນເງິນທີ່ບໍ່ໄດ້ໃຊ້ ແຕ່ສາມາດໃຊ້ໄດ້ໃນປີໜ້າ ລ້ານກີບ* | *ການຂາດທຶນຈາກອາກອນໃນທ້າຍປີ ລ້ານກີບ* |
|---|---|---|---|---|
| 2015 | 13,360 | - | - | 13,360 |
| 2016 | - | (4,681) | - | (8,679) |
| 2017 | - | (8,679) | - | - |

## 26. ທຶນຈົດທະບຽນທີ່ຖອກແລ້ວ

ບໍ່ມີການປ່ຽນແປງສຳລັບທຶນຈົດທະບຽນທີ່ຖອກແລ້ວໃນປີ 2018.

## 27. ຂໍ້ມູນເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດລວມຢູ່ໃນໃນລາຍງານກະແສເງິນສົດມີດັ່ງນີ້:

| | *31 ທັນວາ 2018 ລ້ານກີບ* | *31 ທັນວາ 2017 ລ້ານກີບ* |
|---|---|---|
| ເງິນສົດໃນຄັງ | 25,986 | 21,142 |
| ເງິນຝາກກະແສລາຍວັນຢູ່ ທຫລ | 326,331 | 199,680 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ | 536,036 | 308,050 |
| ເງິນຝາກປະຈຳຢູ່ທະນາຄານອື່ນທີ່ມີກຳນົດ 90 ວັນ ຫຼື ໜ້ອຍກວ່າ | 446,400 | 560,680 |
| | 1,334,753 | 1,089,552 |

## 28. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີສຳນັກງານໃຫຍ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນຳກັນກັບສາຂາເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ສຳນັກງານໃຫຍ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຂ);

(ຈ) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ສາຂາ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2018 ມີດັ່ງຕໍ່ໄປນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2018 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2017 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ສຳນັກງານໃຫຍ່ | ເງິນຝາກກະແສລາຍວັນຢູ່ | 225,132 | 58,201 |
| | | ໜີ້ຕ້ອງສົ່ງອື່ນໆ | (950) | (812) |
| | | ເງິນຝາກປະຈຳ | - | 331,915 |
| ທະນາຄານແຫ່ງປະເທດຈີນ, ສາຂາຊາງໄຮ, Shanghai RMB Trading Unit | ບໍລິສັດໃນເຄືອ | ເງິນຝາກກະແສລາວວັນ | 114,484 | 8,779 |
| | | ເງິນຝາກປະຈຳ | 447,009 | 229,325 |
| ທະນາຄານແຫ່ງປະເທດຈີນ, ສາຂາຮົງກົງ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 20,418 | 1,972 |
| ທະນາຄານແຫ່ງປະເທດຈີນ, ສາຂາໄທ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 2,220 | 7,360 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 163,245 | 229,533 |
| ທະນາຄານແຫ່ງປະເທດຈີນ, ສາຂາຊາງໄຮ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 63 | 64 |

## 28. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ທຸລະກຳທີ່ມີໃນສຳຄັນກັບບັນດາພາກສ່ວນທີ່ກ່ຽວຂ້ອງລະຫວ່າງປີມີດັ່ງລຸ່ມນີ້:

| | *2018* *ລ້ານກີບ* | *2017* *ລ້ານກີບ* |
|---|---|---|
| ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນຝາກຢູ່ສາຂາອື່ນຂອງທະນາຄານແຫ່ງປະເທດຈີນ: | | |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 166,931 | 40,771 |
| - ເງິນຝາກມີກຳນົດຢູ່ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | (331,720) | (245,520) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນຈຳກັດ, ໜ່ວຍແລກປ່ຽນເງິນຕາຊາງໄຮ RMB | 105,705 | (44,957) |
| - ເງິນຝາກມີກຳນົດຢູ່ທະນາຄານແຫ່ງປະເທດຈີນຈຳກັດ, ໜ່ວຍແລກປ່ຽນເງິນຕາຊາງໄຮ RMB | 217,440 | 228,960 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນຈຳກັດ, ສາຂາ ຮົງກົງ | 18,446 | 1,734 |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນມະຫາຊົນຈຳກັດ, ສາຂາໄທ | (5,140) | (7,329) |
| - ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງປະເທດຈີນຈຳກັດ, ສາຂານິວຢອກ | (66,288) | 151,012 |
| ຫຼຸດລົງໃນການກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | 409,200 |
| ລາຍຮັບດອກເບ້ຍຈາກເງິນເງິນຝາກຢູ່ສາຂາອື່ນຂອງທະນາຄານແຫ່ງປະເທດຈີນ | 18,662 | 16,266 |
| ລາຍຈ່າຍດອກເບ້ຍຈາກການກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | - | (3,086) |

***ການເຄື່ອນໄຫວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະບໍລິຫານມີດັ່ງນີ້:

| | *2018* *ລ້ານກີບ* | *2017* *ລ້ານກີບ* |
|---|---|---|
| ເງິນເດືອນ ແລະ ເງິນໂບນັດ | 2,805 | 2,802 |
| | **2,805** | **2,802** |

## 29. ວິເຄາະການຄົບກຳນົດຂອງຊັບສິນ ແລະ ໜີ້ສິນ

ຕາຕະລາງດ້ານລຸ່ມນີ້ສະແດງການວິເຄາະຊັບສິນ ແລະ ໜີ້ສິນທີ່ໄດ້ວິເຄາະຕາມເວລາທີ່ຄາດວ່າຈະຖືກຟື້ນຟູ ຫຼື ຊຳລະ. ຊັບສິນ ແລະ ໜີ້ສິນເພື່ອຄ້າຖືກຈັດປະເພດໃຫ້ຄົບກຳນົດ ແລະ/ຫຼື ຖືກຊຳລະຄືນພາຍໃນ 12 ເດືອນ, ໂດຍບໍ່ຄຳນຶງເຖິງການຄົບກຳນົດທີ່ແທ້ຈິງຕາມສັນຍາຂອງກາສານ. ໃນສ່ວນຂອງສິນເຊື່ອ ແລະ ເງິນລ່ວງໜ້າໃຫ້ກັບລູກຄ້າ, ທະນາຄານນຳໃຊ້ພື້ນຖານດຽວກັນກັບພຶດຕິກຳການຊຳລະຄືນທີ່ຄາດຫວັງທີ່ຖືກນຳໃຊ້ສຳລັບການຄາດຄະເນອັດຕາດອກເບ້ຍເບ້ຍທີ່ແທ້ຈິງ. ກາສານໜີ້ທີ່ອອກຈະສະທ້ອນເຖິງຄ່າເສື່ອມມູນຄ່າໜ້າບັດຕາມສັນຍາ.

**29. ວິເຄາະການຄົບກຳນົດຂອງຊັບສິນ ແລະ ໜີ້ສິນ** (ຕໍ່)

| **ນະວັນທີ 31 ທັນວາ 2018** | *ພາຍໃນ 12 ເດືອນ ລ້ານກີບ* | *ຫຼັງຈາກ 12 ເດືອນ ລ້ານກີບ* | *ທັງໝົດ ລ້ານກີບ* |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກກັບ ທຫລ | 965,118 | - | 965,118 |
| ເງິນຝາກກັບທະນາຄານອື່ນ | 982,928 | - | 982,928 |
| ການານໜີ້ໃນຕົ້ນທຶນຄ່າເສື່ອມ | 7,129 | 853,000 | 860,129 |
| ເງິນກູ້ໃຫ້ລູກຄ້າ | - | 567,722 | 567,722 |
| ຊັບສິນບົດ ແລະ ອຸປະກອນ | - | 5,577 | 5,577 |
| ຊັບສິນອື່ນໆ | - | 13,374 | 13,374 |
| **ລວມຍອດຊັບສິນ** | **1,955,175** | **1,439,673** | **3,394,848** |
| **ໜີ້ສິນ** | | | |
| ເງິນຝາກຈາກທະນາຄານອື່ນ | 224,526 | - | 224,526 |
| ເງິນຝາກລູກຄ້າ | 2,549,002 | 99,533 | 2,648,535 |
| ໜີ້ສິນອາກອນໝູນວຽນ | 8,683 | - | 8,683 |
| ເງິນແຮ | 354 | - | 354 |
| ໜີ້ສິນອື່ນໆ | 5,657 | - | 5,657 |
| **ລວມຍອດຊັບສິນ** | **2,788,222** | **99,533** | **2,887,755** |
| **ສຸດທິ** | **(833,047)** | **1,340,140** | **507,093** |

**30. ນະໂຍບາຍການບໍລິຫານຄວາມສ່ຽງ**

***ພາກສະເໜີ***

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນໃນການດຳເນີນງານຂອງສາຂາ ແຕ່ມັນໄດ້ຮັບການຄຸ້ມຄອງ ໂດຍຜ່ານຂັ້ນຕອນ, ວັດແທກ ແລະ ການຕິດຕາມຢ່າງຕໍ່ເນື່ອງ ເພື່ອຈຳກັດຂອບເຂດຄວາມສ່ຽງ ແລະ ນຳໃຊ້ການຄຸ້ມຄອງອື່ນໆ. ຂັ້ນຕອນການບໍລິຫານຄວາມສ່ຽງນີ້ເປັນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງສາຂາ ແລະ ແຕ່ລະໜ່ວຍງານພາຍໃນສາຂາຕ້ອງຮັບຜິດຊອບໃນການເປີດເຜີຍຄວາມສ່ຽງທີ່ຕິດພັນກັບໜ້າທີ່ຄວາມຮັບຜິດຊອບຂອງຕົນ.

ສາຂາໄດ້ເປີດເຜີຍຄວາມສ່ຽງສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງຕະຫຼາດ, ຫຼັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ສາຂາຍັງມີຄວາມສ່ຽງການດຳເນີນງານອື່ນໆ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງສາຂາແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດໂດຍຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງສາຂາ.

## 30. ນະໂຍບາຍການບໍລິຫານຄວາມສ່ຽງ (ຕໍ່)

*ໂຄງສ້າງການບໍລິຫານຄວາມສ່ຽງ*

ໂຄງສ້າງການຄຸ້ມຄອງການບໍລິຫານຄວາມສ່ຽງຂອງສາຂາແມ່ນຖືກອອກແບບມາເພື່ອໃຫ້ຄອບຄຸມບັນດາຂະບວນການທາງທຸລະກິດທັງໝົດ ແລະ ຮັບປະກັນວ່າມີການບໍລິຫານ ແລະ ຄວບຄຸມຄວາມສ່ຽງຕ່າງໆຢ່າງເໝາະສົມໃນການດໍາເນີນທຸລະກິດ. ໂຄງສ້າງອົງກອນການບໍລິຫານຄວາມສ່ຽງແມ່ນມີຄວາມແຂງແຮງພ້ອມກັບບັນດານະໂຍບາຍ ແລະ ຂັ້ນຕອນເພື່ອລະບຸ, ຕີມູນຄ່າ, ຕິດຕາມ ແລະ ຄວບຄຸມ ບັນດາຄວາມສ່ຽງທີ່ອາດຈະເກີດຂຶ້ນ. ນະໂຍບາຍ ແລະ ຂັ້ນຕອນການບໍລິຫານຄວາມສ່ຽງເຫຼົ່ານີ້ໄດ້ຮັບການກວດຄືນ ແລະ ປັບປຸງຢ່າງສະໝ່ຳສະເໝີເພື່ອສະທ້ອນການປ່ຽນແປງໃນຕະຫຼາດ ແລະ ຍຸດທະສາດຂອງທຸລະກິດ. ກຸ່ມຜູ້ຮັບຄວາມສ່ຽງຫຼາຍກຸ່ມມີໜ້າທີ່ຮັບຜິດຊອບໃນການບໍລິຫານຄວາມສ່ຽງ.

ຄະນະອໍານວຍການຂອງ ທະນາຄານແຫ່ງປະເທດຈີນ ຈໍາກັດ ເຊິ່ງເປັນຕົວແທນໃນສິດຜົນປະໂຫຍດຂອງຜູ້ຖືຮຸ້ນ, ເປັນຜູ້ມີອໍານາດໃນການຕັດສິນໃຈສູງສຸດ ແລະ ມີຄວາມຮັບຜິດຊອບສູງສຸດສໍາລັບການບໍລິຫານຄວາມສ່ຽງ. ຄະນະຜູ້ອໍານວຍການພ້ອມກັບຄວາມຊ່ວຍເຫຼືອຂອງຄະນະກໍາມະການແມ່ນມີຄວາມຮັບຜິດຊອບພື້ນຖານສໍາລັບການກໍານົດຍຸດທະສາດການບໍລິຫານຄວາມສ່ຽງ ແລະ ຮັບປະກັນວ່າສາຂາມີລະບົບການບໍລິຫານຄວາມສ່ຽງທີ່ມີປະສິດທິຜົນໃນການນໍາໃຊ້ຍຸດທະສາດເຫຼົ່ານີ້.

ຄະນະກໍາມະການບໍລິຫານຄວາມສ່ຽງເຊິ່ງເປັນຄະນະກໍາມະການທີ່ຈັດຕັ້ງຂຶ້ນໂດຍຄະນະຜູ້ອໍານວຍການຂອງ ທະນາຄານແຫ່ງປະເທດຈີນ ຈໍາກັດ ມີໜ້າທີ່ຮັບຜິດຊອບກໍາກັບດູແລຄວາມສ່ຽງປະເພດຕ່າງໆຂອງສາຂາ, ອະນຸມັດນະໂຍບາຍການບໍລິຫານຄວາມສ່ຽງ ແລະ ຕິດຕາມການປະຕິບັດນໍາໃຊ້ນະໂຍບາຍດັ່ງກ່າວ, ແລະ ອະນຸມັດຄວາມສ່ຽງ ຫຼື ທຸລະກໍາທີ່ມີຄວາມສໍາຄັນ ຫຼື ສູງ. ຄະນະກໍາມະການກວດສອບຊ່ວຍເຫຼືອຄະນະອໍານວຍການໃນການກໍາກັບດູແລລະບົບການຄວບຄຸມພາຍໃນ.

ໜ່ວຍງານຕ່າງໆຂອງສາຂາມີໜ້າທີ່ຮັບຜິດຊອບການບໍລິຫານຄວາມສ່ຽງ. ໜ່ວຍງານທຸລະກິດເຮັດໜ້າທີ່ເປັນແນວປ້ອງກັນທໍາອິດ ໃນຂະນະທີ່ໜ່ວຍງານບໍລິຫານເຊິ່ງເປັນອິດສະຫຼະຈາກໜ່ວຍງານທຸລະກິດ ແມ່ນຮັບຜິດຊອບໃນການບໍລິຫານຄວາມສ່ຽງປະເພດຕ່າງໆໃນແຕ່ລະວັນ. ໜ່ວຍງານບໍລິຫານຄວາມສ່ຽງມີຄວາມຮັບຜິດຊອບຫຼັກໃນການຮ່າງແບບ, ກວດຄືນ ແລະ ປັບປຸງນະໂຍບາຍ ແລະ ຂັ້ນຕອນການບໍລິຫານຄວາມສ່ຽງຕ່າງໆ.

ສາຂາໄດ້ຈັດໃຫ້ມີລະບົບການຄວບຄຸມພາຍໃນທີ່ເໝາະສົມລວມເຖິງການຈັດຕັ້ງໂຄງສ້າງອົງກອນທີ່ກໍານົດຂອບເຂດຂອງອໍານາດ ແລະ ໜ້າທີ່ຮັບຜິດຊອບທີ່ຊັດເຈນໃນການຕິດຕາມການປະຕິບັດຕາມນະໂຍບາຍ, ຂັ້ນຕອນ ແລະ ຂໍ້ຈໍາກັດ. ນອກຈາກນັ້ນ, ສາຍການລາຍງານທີ່ເໝາະສົມຍັງໄດ້ສະໜອງຄວາມເປັນອິດສະຫຼະຢ່າງພຽງພໍຂອງໜ້າທີ່ການຄວບຄຸມຈາກຂອບເຂດທຸລະກິດ ລວມເຖິງ ການແບ່ງແຍກໜ້າທີ່ອັນພຽງພໍທົ່ວອົງກອນ ເຊິ່ງຊ່ວຍສົ່ງເສີມສະພາບແວດລ້ອມການຄວບຄຸມພາຍໃນທີ່ເໝາະສົມ.

## 31. ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອແມ່ນຄວາມສ່ຽງທີ່ສາຂາເກີດຄວາມສູນເສຍເນື່ອງຈາກລູກຄ້າ ຫຼື ຄູ່ສັນຍາບໍ່ສາມາດປະຕິບັດຕາມພັນທະຜູກພັນຕາມສັນຍາ. ສາຂາບໍລິຫານ ແລະ ຄວບຄຸມຄວາມສ່ຽງດ້ານສິນເຊື່ອໂດຍການກໍານົດຂອບເຂດຂອງປະລິມານຄວາມສ່ຽງທີ່ສາມາດຮັບໄດ້ສໍາລັບຄູ່ສັນຍາທີ່ເປັນບຸກຄົນ ແລະ ສໍາລັບການຮອບຮອມທາງພູມສາດ ແລະ ອຸດສາຫະກໍາ ແລະ ໂດຍການກວດສອບຍອດທຸລະກໍາທີ່ກ່ຽວຂ້ອງກັບຂອບເຂດນັ້ນ.

ສາຂາໄດ້ສ້າງຕັ້ງຂັ້ນຕອນການກວດກາຄຸນະພາບສິນເຊື່ອເພື່ອລະບຸການປ່ຽນແປງທີ່ເປັນໄປໄດ້ໃນຄວາມໜ້າເຊື່ອຖືຂອງຄູ່ສັນຍາ. ຂອບເຂດຈໍາກັດຄູ່ສັນຍາຖືກກໍານົດຂຶ້ນໂດຍຜ່ານການນໍາໃຊ້ລະບົບການຈັດປະເພດຄວາມສ່ຽງດ້ານສິນເຊື່ອເຊິ່ງລະບຸການຈັດອັນດັບຄວາມສ່ຽງຂອງແຕ່ລະຄູ່ສັນຍາ. ການຈັດອັນດັບຄວາມສ່ຽງແມ່ນມີການແກ້ໄຂແຕ່ລະເດືອນ. ຂັ້ນຕອນການກວດກາຄຸນະພາບສິນເຊື່ອມີວັດຖຸປະສົງເພື່ອໃຫ້ສາຂາສາມາດປະເມີນການສູນເສຍທີ່ອາດຈະເກີດຂຶ້ນທີ່ເປັນຜົນມາຈາກຄວາມສ່ຽງທີ່ຈະເກີດຂຶ້ນ ແລະ ຕ້ອງດໍາເນີນການແກ້ໄຂ.

## 31. **ຄວາມສ່ຽງດ້ານສິນເຊື່ອ** (ຕໍ່)

### 31.1 *ຄຸນະພາບສິນເຊື່ອ ແລະ ຄວາມສ່ຽງດ້ານສິນເຊື່ອ*

ປັດຈຸບັນສາຂາໄດ້ມີການຈັດອັນດັບສິນເຊື່ອພາຍໃນເພື່ອໃຫ້ຄະແນນລູກຄ້າໂດຍອີງໃສ່ລະດັບຄວາມສ່ຽງ. ສາຂາບໍ່ໄດ້ຈັດອັນດັບສິນເຊື່ອພາຍໃນສຳຫຼັບທະນາຄາການ, ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນໆອີງໃສ່ລະດັບຄວາມສ່ຽງຂອງພວກເຂົາ, ແຕ່ວ່າສາຂານຳໃຊ້ອັດຕາສະເລ່ຍຖ່ວງໜັກຂອງກຸ່ມສຳລັບສະຖາບັນການເງິນໂດຍທັງໝົດ.

### 31.2 *ຄວາມສ່ຽງພັນທະຜູກພັນທີ່ກ່ຽວຂ້ອງກັບສິນເຊື່ອ*

ສາຂາໃຫ້ການຄໍ້າປະກັນແກ່ລູກຄ້າເຊິ່ງອາດຈະກຳນົດໃຫ້ສາຂາຊຳລະເງິນໃນນາມຂອງລູກຄ້າ ແລະ ມີພັນທະຜູກພັນໃນການຂະຫຍາຍວົງເງິນສິນເຊື່ອເພື່ອຮັກສາຄວາມຕ້ອງການສະພາບຄ່ອງ. ໜັງສືສິນເຊື່ອ ແລະ ໜັງງສືຄໍ້າປະກັນເຮັດໃຫ້ສາຂາມີພັນທະຕ້ອງຊຳລະໃນນາມຂອງລູກຄ້າໃນກໍລະນີທີ່ມີເຫດການສະເພາະເຈາະຈົງ, ໂດຍທົ່ວໄປແມ່ນກ່ຽວຂ້ອງກັບການນຳເຂົ້າ ຫຼື ສົ່ງອອກສິນຄ້າ. ພັນທະຜູກພັນດັ່ງກ່າວເຮັດໃຫ້ສາຂາມີຄວາມສ່ຽງຕໍ່ເງິນກູ້ ແລະ ຄວາມສ່ຽງຈະຫຼຸດລົງໂດຍຂັ້ນຕອນການຄວບຄຸມ ແລະ ນະໂຍບາຍ.

### 31.3 *ການປະເມີນການເສື່ອມມູນຄ່າ (ນະໂຍບາຍມີຜົນນັບແຕ່ວັນທີ 1 ມັງກອນ 2018)*

ເພື່ອວັດຖຸປະສົງໃນການນຳສະເໜີບົດລາຍງານທາງດ້ານການເງິນພາຍໃຕ້ IFRS, ສາຂານຳໃຊ້ຕົວແບບການຂາດທຶນທີ່ຄາດການໄວ້ສຳລັບການຮັບຮູ້ການຂາດທຶນຈາກຊັບສິນທາງການເງິນທີ່ເສື່ອມມູນຄ່າ. ເຊິ່ງໝາຍຄວາມວ່າໝາຍຄວາມວ່າສາຂາຈະຮັບຜິດຊອບສຳລັບ ECLs ແລະ ປັບປຸງເງິນແຮໜີ້ເສຍສາລັບສ່ວນປ່ຽນແປງໃນ ECL ນະມື້ລາຍງານເພື່ອສະແດງໃຫ້ເຫັນເຖິງສ່ວນປ່ຽນແປງໃນຄວາມສ່ຽງສິນເຊື່ອນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ. ດັ່ງນັ້ນ, ສາຂາຕ້ອງຄຳນຶງເຖິງບັນດາຂໍ້ມູນເຫຼົ່ານີ້:

- ຜົນລັບຄວາມອາດຈະເປັນແບບຖ່ວງໜັກ;
- ມູນຄ່າຂອງເງິນຕາມເວລາ; ແລະ
- ຂໍ້ມູນທີ່ສົມເຫດສົມຜົນ ແລະ ສາມາດສະໜັບສະໜູນ ທີ່ມີຢູ່ໂດຍ ບໍ່ໃຊ້ຄ່າໃຊ້ຈ່າຍ ແລະ ຄວາມພະຍາຍາມອັນເກີນຄວນ.

#### 31.3.1 *ຄວາມໝາຍຂອງການຜິດນັດຊຳລະ ແລະ ການຮັກສາປົວຢາ*

ສາຂາສາມາດພິຈາລະນາເຄື່ອງມືທາງການເງິນທີ່ຜິດນັດຊຳລະ ເຊິ່ງຈະກາຍເປັນ ຂັ້ນທີ 3 (ສິນເຊື່ອເສື່ອມມູນຄ່າ) ສຳລັບການຄຳນວນຜົນຂາດທຶນສິນເຊື່ອທີ່ຄາດການໄວ້ໃນທຸກໆກໍລະນີ ເມື່ອ ຜູ້ກູ້ຢືມເລີຍເວລາຊຳລະ 90 ວັນຂອງການຊຳລະຕາມສັນຍາ.

ດັ່ງທີ່ເປັນສ່ວນໜຶ່ງຂອງການປະເມີນທາງຄຸນະພາບວ່າລູກຄ້າຢູ່ໃນຖານະຂອງການຜິດນັດຊຳລະ ຫຼື ບໍ່, ສາຂາໄດ້ພິຈາລະນາບັນດາສາລະສຳຄັນທີ່ອາດຈະບົ່ງຊີ້ຄວາມອາດຈະເປັນໄປບໍ່ໄດ້ໃນການຊຳລະ. ເມື່ອເຫດການດັ່ງກ່າວເກີດຂຶ້ນ, ສາຂາຈະພິຈາລະນາຢ່າງລະມັດລະວັງວ່າເຫດການດັ່ງກ່າວຈະສົ່ງຜົນໃຫ້ການປະຕິບັດຕໍ່ລູກຄ້າເປັນການຜິດນັດຊຳລະ ຫຼື ບໍ່ ເຊິ່ງຈະຕ້ອງປະເມີນເປັນຂັ້ນທີ 3 ສຳລັບການຄຳນວນຜົນຂາດທຶນສິນເຊື່ອທີ່ຄາດການໄວ້ ຫຼື, ປະເມີນເປັນຂັ້ນທີ 2 ຂຶ້ນກັບວ່າຂັ້ນໃດຈະເໝາະສົມທີ່ສຸດ. ເຫດການດັ່ງກ່າວປະກອບມີ:

- ການຈັດອັນດັບພາຍໃນຂອງຜູ້ຢືມທີ່ຊີ້ໃຫ້ເຫັນເຖິງ ການຜິດນັດຊຳລະ ຫຼື ໃກ້ຜິດນັດຊຳລະ;
- ເງິນທຶນສຸກເສີນທີ່ຜູ້ກູ້ຢືມຮ້ອງຂໍຈາກສາຂາ;
- ຜູ້ກູ້ຢືມມີມື້ຄົບກຳນົດຊຳລະໜີ້ສິນແກ່ເຈົ້າໜີ້ສາທາລະນະ ຫຼື ພະນັກງານ;
- ຜູ້ກູ້ຢືມເສຍຊີວິດ;
- ການຫຼຸດລົງອັນສຳຄັນໃນມູນຄ່າຫຼັກຊັບຄໍ້າປະກັນເຊິ່ງເງິນກູ້ມີການຄາດການການຟື້ນຟູຈາກການຂາຍຫຼັກຊັບຄໍ້າປະກັນ;
- ການຫຼຸດລົງອັນສຳຄັນຂອງລາຍໄດ້ຜູ້ກູ້ຢືມ ຫຼື ການສູນເສຍລູກຄ້າຫຼັກຂອງຜູ້ກູ້ຢືມ

## 31. **ຄວາມສ່ຽງດ້ານສິນເຊື່ອ** (ຕໍ່)

### 31.3 *ການປະເມີນການເສື່ອມມູນຄ່າ (ນະໂຍບາຍມີຜົນບັງຄັບແຕ່ວັນທີ 1 ມັງກອນ 2018)* (ຕໍ່)

#### 31.3.1 *ຄວາມໝາຍຂອງການຜິດນັດຊຳລະ ແລະ ການຮັກສາຢູ່ຮອຍາ* (ຕໍ່)

- ການຝ່າຝືນສັນຍາທີ່ບໍ່ໄດ້ຮັບອະນຸຍາດຈາກສາຂາ
- ລູກໜີ້ (ຫຼື ນິຕິບຸກຄົນໃດໆ ທີ່ຢູ່ໃນກຸ່ມລູກໜີ້) ທີ່ຍື່ນຟ້ອງສຳລັບການຮ້ອງຂໍ/ຄຸ້ມຄອງ ການລົ້ມລະລາຍ
- ໜີ້ສິນ ຫຼື ທຶນທີ່ຈົດທະບຽນຂອງລູກໜີ້ ຖືກລະງັບໃນການແລກປ່ຽນຫຼັກ ຍ້ອນຂ່າວລື ຫຼື ຂໍ້ເທັດຈິງກ່ຽວກັບບັນຫາທາງການເງິນ

ສາຂາມີນະໂຍບາຍທີ່ຈະພິຈາລະນາເຄື່ອງມືທາງເງິນເປັນ "ການຮັກສາຢູ່ຮອຍາ" ແລະ ຖືກຈັດປະເພດຄືນໃໝ່ອອກຈາກ ຂັ້ນທີ 3 ເມື່ອບໍ່ເປັນໄປຕາມເງື່ອນໄຂການຜິດນັດຊຳລະເປັນເວລາຢ່າງໜ້ອຍ 1 ເດືອນສຳລັບໜີ້ສິນໄລຍະສັ້ນ ຫຼື 3 ເດືອນຕໍ່ເນື່ອງສຳລັບ ໜີ້ສິນໄລຍະກາງ ແລະ ໄລຍະຍາວ ຕັ້ງແຕ່ມື້ທີ່ເລີ່ມຕົ້ນຊຳລະຄືນເງິນຕົ້ນ ແລະ ດອກເບ້ຍທີ່ກາຍມື້ຊຳລະເຕັມຢ່າງຈຳນວນ. ການຕັດສິນວ່າຈະຈັດປະເພດຄືນໃໝ່ໃຫ້ແກ່ຊັບສິນເປັນ ຂັ້ນທີ 2 ຫຼື ຂັ້ນທີ 1 ນັ້ນເມື່ອໄດ້ຮັບການຟື້ນຟູຂຶ້ນຢູ່ກັບລະດັບສິນເຊື່ອທີ່ໄດ້ປັບປຸງ ແລະ ມີສິ່ງທີ່ຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງສິນເຊື່ອ ຫຼື ບໍ່ ໃນເວລາການຟື້ນຟູເມື່ອປຽບທຽບໃສ່ການຮັບຮູ້ເບື້ອງຕົ້ນ.

#### 31.3.2 *ການຈັດອັນດັບພາຍໃນ ແລະ ຂັ້ນຕອນການປະເມີນຄວາມອາດຈະເປັນຂອງການຜິດນັດຊຳລະຂອງສາຂາ*

ສາຂາປະຕິບັດຮູບແບບການຈັດອັນດັບພາຍໃນເຊິ່ງລວມເອົາທັງຂໍ້ມູນທາງດ້ານຄຸນະພາບ ແລະ ປະລິມານ ແລະ, ນອກຈາກຂໍ້ມູນທີ່ເຈາະຈົງຂອງຜູ້ຢືມ ຍັງນຳໃຊ້ ຂໍ້ມູນເພີ່ມເຕີມຈາກພາຍນອກທີ່ສາມາດກະທົບຕໍ່ພຶດຕິກຳຂອງຜູ້ກູ້ຢືມ. ແຫຼ່ງຂໍ້ມູນເຫຼົ່ານີ້ແມ່ນຖືກນຳໃຊ້ທຳອິດເພື່ອພິຈາລະນາ PDs ພາຍໃນຂອບເຂດ ບາເຊວ II ຂອງສາຂາ. ການໃຫ້ຄະແນນສິນເຊື່ອພາຍໃນແມ່ນຖືກກຳນົດຕາມການໃຫ້ຄະແນນໃນ ບາເຊວ II. ຫຼັງຈາກນັ້ນ PDs ຈະຖືກດັດແກ້ສຳລັບການຄຳນວນ ECL ໃນ IFRS 9 ເພື່ອລວມກັບຂໍ້ມູນທີ່ຄາດການລ່ວງໜ້າ ແລະ ການຈັດຂັ້ນຂອງຍອດໜີ້ໃນ IFRS 9. ການປະຕິບັດດັ່ງກ່າວນີ້ຈະຖືກເຮັດຄືນສຳລັບແຕ່ລະສະພາບເສດຖະກິດຕາມທີ່ເຫັນສົມຄວນ.

***ສາຍພົວພັນຄັງເງິນ, ການຄ້າ ແລະ ລະຫວ່າງທະນາຄານ***

ສາຍພົວພັນຄັງເງິນ, ການຄ້າ ແລະ ລະຫວ່າງທະນາຄານ ແລະ ຄູ່ສັນຍາຂອງສາຂາປະກອບດ້ວຍສະຖາບັນການເງິນ, ທະນາຄານ, ນາຍໜ້າ, ໜ່ວຍແລກປ່ຽນ ແລະ ຊຳລະສະສາງ. ສຳລັບສາຍພົວພັນເຫຼົ່ານີ້, ພະແນກຄວາມສ່ຽງດ້ານສິນເຊື່ອຂອງສາຂາຈະວິເຄາະຂໍ້ມູນສາທາລະນະທີ່ມີເຊັ່ນ ຂໍ້ມູນທາງດ້ານການເງິນ ແລະ ຂໍ້ມູນພາຍນອກອື່ນໆ, ຄືຢ່າງ ການຈັດອັນດັບຂອງ Moody's, S&P, Fitch, ແລະ ກຳນົດການຈັດອັນດັບພາຍໃນດັ່ງທີ່ໄດ້ສະແດງໃນຕາຕະລາງດ້ານລຸ່ມ.

***ການໃຫ້ກູ້ຢືມແກ່ບໍລິສັດ***

ສຳລັບສິນເຊື່ອບໍລິສັດ, ຜູ້ກູ້ຢືມແມ່ນຖືກປະເມີນໂດຍພະນັກງານສະເພາະດ້ານຄວາມສ່ຽງດ້ານສິນເຊື່ອຂອງສາຂາ. ການປະເມີນຄວາມສ່ຽງດ້ານສິນເຊື່ອແມ່ນອີງໃສ່ຮູບແບບການໃຫ້ຄະແນນສິນເຊື່ອທີ່ພິຈາລະນາຂໍ້ມູນໃນອະດີດ, ປັດຈຸບັນ ແລະ ທີ່ຄາດການລ່ວງໜ້າໃນອະນາຄົດເຊັ່ນວ່າ:

- ຂໍ້ມູນທາງດ້ານການເງິນໃນອາດີດພ້ອມກັບການຄາດຄະເນ ແລະ ງົບປະມານທີ່ໄດ້ກະກຽມໂດຍລູກຄ້າ. ຂໍ້ມູນທາງດ້ານການເງິນນີ້ລວມເອົາຜົນລັບທີ່ໄດ້ຮັບ ແລະ ຄາດຫວັງ, ອັດຕາສ່ວນຄວາມສາມາດໃນການຊຳລະໜີ້, ອັດຕາສ່ວນສະພາບຄ່ອງ ແລະ ອັດຕາສ່ວນອື່ນໆທີ່ກ່ຽວຂ້ອງກັບການຕີມູນຄ່າຜົນການດຳເນີນງານທາງດ້ານການເງິນຂອງລູກຄ້າ. ຕົວບົ່ງຊີ້ເຫຼົ່ານີ້ຖືກບັນທຶກໄວ້ໃນພັນທະສັນຍາກັບລູກຄ້າ ເຊິ່ງຈະຖືກວັດແທກລະອຽດຂຶ້ນ.
- ຂໍ້ມູນໃດໆຂອງລູກຄ້າທີ່ມີຢູ່ສາທາລະນະຈາກພາກສ່ວນພາຍນອກ. ເຊິ່ງລວມເອົາການຄະແນນການຈັດອັນດັບພາຍນອກທີ່ອອກໂດຍຕົວແທນການຈັດອັນດັບ, ບົດລາຍງານການວິເຄາະເອກະລາດ ຫຼື ຂ່າວປະຊາສຳພັນ ແລະ ບົດຄວາມຕ່າງໆ.

**31. ຄວາມສ່ຽງດ້ານສິນເຊື່ອ** (ຕໍ່)

*31.3 ການປະເມີນການເສື່ອມມູນຄ່າ (ນະໂຍບາຍມີຜົນບັງຄັບແຕ່ວັນທີ 1 ມັງກອນ 2018)* (ຕໍ່)

*31.3.2 ການຈັດອັນດັບພາຍໃນ ແລະ ຂັ້ນຕອນການປະເມີນຄວາມອາດຈະເປັນຂອງການຜິດນັດຊຳລະຂອງສາຂາ* (ຕໍ່)

- ຂໍ້ມູນທາງເສດຖະສາດມະຫາພາກ ແລະ ພູມສາດການເມືອງໃດໆ ເຊັ່ນ ການຈະເລີນເຕີບໂຕຂອງ GDP ທີ່ກ່ຽວຂ້ອງສຳລັບພາກສ່ວນອຸດສາຫະກຳ ແລະ ພູມສາດສະເພາະທີ່ລູກຄ້າດຳເນີນງານຢູ່.
- ຂໍ້ມູນອື່ນໆທີ່ມີມີວັດຖຸປະສົງໃນການສະໜັບສະໜູນໃນດ້ານຄຸນະພາບ ແລະ ຄວາມສາມາດຂອງການບໍລິຫານທີ່ກ່ຽວກັບຜົນການດຳເນີນງານຂອງບໍລິສັດຂອງລູກຄ້າ.

ຄວາມຊັບຊ້ອນ ແລະ ຄວາມລະອຽດຂອງເຕັກນິກການຈັດອັນດັບທີ່ຈະແຕກຕ່າງກັນໄປຕາມຍອດສິນເຊື່ອຂອງສາຂາ ແລະ ຄວາມຊັບຊ້ອນ ແລະ ຂະໜາດຂອງລູກຄ້າ.

## 31. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

### *31.3 ການປະເມີນການເສື່ອມມູນຄ່າ (ນະໂຍບາຍມີຜົນບັງຄັບແຕ່ວັນທີ 1 ມັງກອນ 2018) (ຕໍ່)*

### *31.3.2 ການຈັດອັນດັບພາຍໃນ ແລະ ຂັ້ນຕອນການປະເມີນຄວາມອາດຈະເປັນຂອງການຜິດນັດຊຳລະຂອງສາຂາ (ຕໍ່)*

***ຄະແນນການຈັດອັນດັບສິນເຊື່ອພາຍໃນຂອງສາຂາ***

| | | *ອັດຕາ PD 12 ເດືອນ* | | | |
|---|---|---|---|---|---|
| | | *31 ທັນວາ 2018* | | *1 ທັນວາ 2018* | |
| *ຄະແນນການຈັດອັນດັບພາຍໃນ* | *ຄະແນນການຈັດອັນດັບພາຍໃນ* | *ສະຖາບັນການເງິນ* | *ການໃຫ້ກູ້ຢືມແກ່ບໍລິສັດ* | *ສະຖາບັນການເງິນ* | *ການໃຫ້ກູ້ຢືມແກ່ບໍລິສັດ* |
| ຄວາມສ່ຽງ ກຸ່ມ 1 | ຜູ້ທີ່ມີພັນທະຜູກພັນມີຄວາມສາມາດຢ່າງສູງຫຼາຍໃນການຊຳລະພັນທະຜູກພັນທາງດ້ານການເງິນ | 0.003% | 0.563% | 0.010% | 0.339% |
| ຄວາມສ່ຽງ ກຸ່ມ 2 | ຜູ້ທີ່ມີພັນທະຜູກພັນມີຄວາມສາມາດຢ່າງສູງຫຼາຍໃນການຊຳລະພັນທະຜູກພັນທາງດ້ານການເງິນ ເຊິ່ງຈາກຕ່າງມີພັນທະຜູກພັນທີ່ຖືກຈັດຢູ່ໃນກຸ່ມທີ 1 ເລັກໜ້ອຍ. | 0.009% | 0.563% | 0.010% | 0.339% |
| ຄວາມສ່ຽງ ກຸ່ມ 3 | ຜູ້ທີ່ມີພັນທະຜູກພັນມີຄວາມສາມາດຢ່າງສູງໃນການຊຳລະພັນທະຜູກພັນທາງດ້ານການເງິນ.ແຕ່ມີຄວາມອ່ອນໄຫວຕໍ່ຜົນກະທົບຈາກການປ່ຽນແປງໃນສະຖານະການ ແລະ ສະພາບເສດຖະກິດ ຫຼາຍກວ່າ ຜູ້ທີ່ມີພັນທະຜູກພັນໃນທີ່ຢູ່ໃນໝວດທີ່ສູງກວ່າ. | 0.021% | 0.563% | 0.017% | 0.339% |
| ຄວາມສ່ຽງ ກຸ່ມ 4 | ຜູ້ທີ່ມີພັນທະຜູກພັນມີຄວາມສາມາດຢ່າງພຽງພໍໃນການຊຳລະພັນທະຜູກພັນທາງດ້ານການເງິນ. ເຖິງຢ່າງໃດກໍຕາມ, ພາວະເສດຖະກິດທີ່ບໍ່ເອື້ອອຳນວຍ ຫຼື ສະຖານະການທີ່ປ່ຽນແປງຈະເຮັດໃຫ້ຄວາມສາມາດໃນການຊຳລະພັນທະຜູກພັນທາງດ້ານການເງິນຂອງຜູ້ທີ່ມີພັນທະຫຼຸດລົງ. | 0.115% | 1.473% | 0.066% | 1.043% |
| ຄວາມສ່ຽງ ກຸ່ມ 5 | ຜູ້ທີ່ມີພັນທະຜູກພັນມີຄວາມສ່ຽງໜ້ອຍກວ່າກຸ່ມອື່ນໆ ທີ່ຢູ່ໃນລະດັບຕໍ່າກວ່າໃນໄລຍະເວລາອັນໃກ້. ເຖິງຢ່າງໃດກໍຕາມ, ການພົບກັບຄວາມບໍ່ແນ່ນອນທີ່ມີຢູ່ ແລະ ຍອດສິນເຊື່ອທີ່ກະທົບດ້ານລົບຕໍ່ທຸລະກິດ, ການເງິນ, ຫຼື ພາວະເສດຖະກິດເຊິ່ງສາມາດເຮັດໃຫ້ຄວາມສາມາດຂອງຜູ້ທີ່ມີພັນທະຜູກພັນບໍ່ພຽງພໍໃນການຊຳລະພັນທະຜູກພັນທາງດ້ານການເງິນ. | 0.115% | 5.367% | 0.212% | 3.423% |
| ຄວາມສ່ຽງ ກຸ່ມ 6 | ຜູ້ທີ່ມີພັນທະຜູກພັນມີຄວາມສ່ຽງຫຼາຍກວ່າຜູ້ທີ່ຢູ່ໃນກຸ່ມທີ 5. ແຕ່ໃນປັດຈຸບັນຜູ້ທີ່ມີພັນທະຜູກພັນມີຄວາມສາມາດໃນການຊຳລະພັນທະຜູກພັນທາງດ້ານການເງິນ. ພາວະເສດຖະກິດ, ການເງິນ, ທຸລະກິດໃນດ້ານລົບອາດຈະສົ່ງຜົນຕໍ່ຄວາມສາມາດ ຫຼື ຄວາມຕັ້ງໃຈທີ່ຈະຊຳລະພັນທະຜູກພັນທາງດ້ານການເງິນ. | 2.157% | 16.473% | 0.473% | 11.941% |
| ຄວາມສ່ຽງ ກຸ່ມ 7 | ປັດຈຸບັນຜູ້ມີພັນທະຜູກພັນມີຄວາມສ່ຽງ ແລະ ຂຶ້ນຢູ່ກັບເງື່ອນໄຂທາງທຸລະກິດ, ການເງິນ ແລະ ເສດຖະກິດທີ່ເອື້ອອຳນວຍເພື່ອທີ່ຈະຊຳລະພັນທະຜູກພັນທາງດ້ານການເງິນ. | 2.518% | 17.484% | 2.556% | 11.941% |
| ບໍ່ໄດ້ຈັດອັນດັບ/ລວມ | ຄ່າສະເລ່ຍຖ່ວງໜັກໂດຍລວມທັງໝົດທຸກກຸ່ມ. | 0.025% | 3.031% | 0.028% | 2.250% |

**31. ຄວາມສ່ຽງດ້ານສິນເຊື່ອ** (ຕໍ່)

*31.3 ການປະເມີນການເສື່ອມມູນຄ່າ (ນະໂຍບາຍມີຜົນບັງຄັບແຕ່ວັນທີ 1 ມັງກອນ 2018)* (ຕໍ່)

*31.3.3 ຍອດໜີ້ເມື່ອຜິດນັດຊຳລະ*

ຍອດໜີ້ເມື່ອຜິດນັດຊຳລະ (EAD) ແມ່ນສະແດງໃຫ້ເຫັນເຖິງມູນຄ່າຂອງເຄື່ອງມືທາງດ້ານການເງິນທີ່ຂຶ້ນຢູ່ກັບການຄຳນວນຄ່າເສື່ອມມູນຄ່າ, ທີ່ລະບຸທັງຄວາມສາມາດຂອງລູກຄ້າໃນການເພີ່ມຄວາມສ່ຽງໃນຍອດໜີ້ເມື່ອມີການຜິດນັດຊຳລະ ແລະ ຄວາມອາດສາມາດໃນການຊຳລະຄືນກ່ອນກຳນົດເຊັ່ນດຽວກັນ.

ເພື່ອທີ່ຈະຄຳນວນ EAD ສຳລັບເງິນກູ້ຂັ້ນທີ 1, ສາຂາປະເມີນເຫດການການຜິດນັດຊາລະທີ່ເປັນໄປໄດ້ໃນ 12 ເດືອນສຳລັບການຄິດໄລ່ ECL 12 ເດືອນ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າ ເງິນກູ້ ຂັ້ນທີ 1 ຖືກຄາດການໄວ້ວ່າຈະຜິດນັດຊາລະໃນ 12 ເດືອນຈາກວັນທີໃນລາຍງານຖານະການເງິນ ແລະ ຍັງຖືກຄາດການວ່າຫຼັງຈາກການຮັກສາປຽວປາ ແລ້ວຈະຍັງຜິດນັດຊຳລະອີກພາຍຫຼັງ, ສະນັ້ນເຫດການການຜິດນັດຊຳລະທັງໝົດທີ່ເຊື່ອມຕໍ່ກັນແມ່ນຖືກນຳມາພິຈາລະນາ. ສຳລັບຊັບສິນທາງດ້ານການເງິນໃນ ຂັ້ນທີ 2, ຂັ້ນທີ 3 ແລະ POCI, ຍອດໜີ້ເມື່ອຜິດນັດຊຳລະແມ່ນຖືກນຳມາພິຈາລະນາສຳລັບເຫດການທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມື. ສາຂາກຳນົດ EAD ໂດຍການຈຳລອງໄລຍະຂອງຜົນຂອງຍອດໜີ້ທີ່ເປັນໄປໄດ້ໃນຫຼາຍໆຈຸດເວລາທີ່ກ່ຽວຂ້ອງກັບຫຼາຍໆສະຖານະການທາງເສດຖະກິດ. ຫຼັງຈາກນັ້ນ PDs ຂອງ IFRS 9 ແມ່ນຖືກກຳນົດໃນແຕ່ລະສະຖານະການທາງເສດຖະກິດໂດຍອີງໃສ່ຜົນຂອງຮູບແບບຂອງສາຂາ.

*31.3.4 ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ*

ສຳລັບເຄື່ອງມືທາງການທຶນໃນບໍລິສັດ ແລະ ການລົງທຶນການທະນາຄານ, ມູນຄ່າ LGD ແມ່ນຖືກປະເມີນເປັນໄລຍະໂດຍຜູ້ຈັດການບັນຊີ ແລະ ຖືກກວດຄືນ ແລະ ອະນຸມັດໂດຍພະແນກຄວາມສ່ຽງດ້ານສິນເຊື່ອສະເພາະຂອງສາຂາ. ການປະເມີນຄວາມສ່ຽງດ້ານສິນເຊື່ອແມ່ນອີງໃສ່ກອບການປະເມີນ LGD ທີ່ເປັນພື້ນຖານທີ່ມີຜົນໃນອັດຕາ LGD ທີ່ແນ່ນອນ. ອັດຕາ LGD ເຫຼົ່ານີ້ພິຈາລະນາ EAD ທີ່ຄາດການໄວ້ສົມທຽບກັບມູນຄ່າທີ່ຄາດການວ່າຈະຟື້ນຟູ ຫຼື ຮັບຮູ້ຈາກຫຼັກຊັບຄ້ຳປະກັນໃດໆທີ່ມີຢູ່.

ຂໍ້ມູນລ່າສຸດ ແລະ ສະຖານະການເສດຖະກິດທີ່ຄາດການໄວ້ລ່ວງໜ້າແມ່ນຖືກໃຊ້ເພື່ອກຳນົດ ອັດຕາ LGD ໃນ IFRS 9 ໃນແຕ່ລະກຸ່ມຂອງເຄື່ອງມືທາງດ້ານການເງິນ. ເມື່ອປະເມີນຂໍ້ມູນທີ່ຄາດການໄວ້ລ່ວງໜ້າ, ການຄາດການໄວ້ອີງໃສ່ຫຼາຍສະຖານະການທາງດ້ານເສດຖະກິດ. ຕົວຢ່າງຂອງຂໍ້ມູນທີ່ສຳຄັນທີ່ປ້ອນເຂົ້າກ່ຽວຂ້ອງກັບສ່ວນປ່ຽນແປງໃນມູນຄ່າມູນຄ່າຫຼັກຊັບຄ້ຳປະກັນທີ່ປະກອບມີລາຄາອະສັງຫາລິມະຊັບສິນສຳລັບການຈຳນອງ, ລາຄາສິນຄ້າ, ສະຖານະການຊຳລະ ຫຼື ບັນດາປັດໃຈອື່ນໆທີ່ບົ່ງບອກການຂາດທຶນໃນກຸ່ມ. ສາຂາປະເມີນກົດລະບຽບ ແລະ LGDs ໃນ IFRS 9 ໃນພື້ນຖານທີ່ແຕກຕ່າງກັນ. ພາຍໃຕ້ IFRS 9, ອັດຕາ LGD ແມ່ນຖືກປະເມີນສຳລັບ ພາກສ່ວນ ຂັ້ນທີ 1, ຂັ້ນທີ 2, ຂັ້ນທີ 3 ແລະ POCI ໃນ IFRS 9 ຂອງແຕ່ລະກຸ່ມ. ຂໍ້ມູນທີ່ປ້ອນເຂົ້າສຳລັບອັດຕາ LGD ແມ່ນຖືກປະເມີນ ແລະ, ທີ່ເປັນໄປໄດ້, ຈະເຮັດການທົດສອບຜ່ານການທົດສອບຍ້ອນຫຼັງຕໍ່ກັບການຟື້ນຟູກ່ອນໜ້າ. ຂັ້ນຕອນເຫຼົ່ານີ້ແມ່ນຖືກເຮັດຄືນສຳລັບແຕ່ລະສະຖານະການເສດຖະກິດຕາມທີ່ເໝາະສົມ.

## 31. ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

### *31.3 ການປະເມີນການເສື່ອມມູນຄ່າ (ນະໂຍບາຍມີຜົນນັບແຕ່ວັນທີ 1 ມັງກອນ 2018)* (ຕໍ່)

### *31.3.5 ການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງສິນເຊື່ອ*

ສາຂາເຮັດການກວດສອບຊັບສິນທັງໝົດຢ່າງຕໍ່ເນື່ອງເພື່ອຜົນຕອບແທນສິນເຊື່ອທີ່ຄາດການໄວ້. ເພື່ອທີ່ຈະກຳນົດວ່າເຄື່ອງມືທາງດ້ານການເງິນ ຫຼືວ່າ ກຸ່ມຫຼັກຊັບຂອງເຄື່ອງມືທາງດ້ານການເງິນແມ່ນຂຶ້ນຢູ່ຜົນຂາດທຶນທາງດ້ານສິນເຊື່ອ 12 ເດືອນ ຫຼື ຕະຫຼອດອາຍຸເຄື່ອງມື, ສາຂາປະເມີນວ່າມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອ ຫຼື ບໍ່ນັບຈາກການຮັບຮູ້ຄັ້ງທຳອິດ. ສາຂາພິຈາລະນາຍອດໜີ້ສິນທີ່ມີການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງດ້ານສິນເຊື່ອເມື່ອ PD ຕະຫຼອດອາຍຸຊັບສິນໃນ IFRS 9 ເພີ່ມຂຶ້ນສອງເທົ່ານັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ ແລະ ເພີ່ມຂຶ້ນຫຼາຍກວ່າ 20 bps ຕໍ່ປີ.

ສາຂາຍັງໄດ້ນຳໃຊ້ວິທີທາງຄຸນະພາບທຸຕິຍະພູມສຳລັບການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງດ້ານສິນເຊື່ອສຳລັບຊັບສິນ ເຊັ່ນວ່າ ການຍ້າຍລູກຄ້າ/ສິ່ງເອື້ອອຳນວຍ ເປັນໜີ້ຕ້ອງເອົາໃຈໃສ່ ຫຼື ບັນຊີທີ່ກາຍເປັນບັນຊີທີ່ພົບກັບຄວາມຫຍຸ້ງຍາກທາງການເງິນ ໃນບາງກໍລະນີ, ສາຂາອາດຈະພິຈາລະນາເຫດການທີ່ອະທິບາຍໃນບົດອະທິບາຍເລກທີ 31.3.1 ເປັນການເພີ່ມຂຶ້ນອັນສຳຄັນໃນຄວາມສ່ຽງດ້ານສິນເຊື່ອເມື່ອທຽບກັບການຜິດນັດຊຳລະ. ໂດຍບໍ່ຄຳນຶງເຖິງສ່ວນປ່ຽນແປງໃນການໃຫ້ຄະແນນສິນເຊື່ອ, ຖ້າຫາກວ່າການຊຳລະຕາມສັນຍາເລີຍກຳນົດຫຼາຍກວ່າ 30 ວັນ, ຄວາມສ່ຽງດ້ານສິນເຊື່ອມີແນວໂນ້ມທີ່ຈະເພີ່ມຂຶ້ນຢ່າງສຳຄັນນັບແຕ່ການຮັບຮູ້ຄັ້ງທຳອິດ.

## 32. ຄວາມສ່ຽງດ້ານອັດຕາດອກເບ້ຍ

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກການປ່ຽນແປງອັດຕາດອກເບ້ຍເຊິ່ງອາດກະທົບຕໍ່ກະແສເງິນສົດໃນອານາຄົດ ຫຼື ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ. ຜູ້ບໍລິຫານໄດ້ກຳນົດຂໍ້ຈຳກັດກ່ຽວກັບຊ່ອງຫວ່າງອັດຕາດອກເບ້ຍທີ່ບໍ່ແມ່ນອັດຕາດອກເບ້ຍເພື່ອການຊື້ຂາຍໃນໄລຍະເວລາທີ່ກຳນົດ. ນະໂຍບາຍຂອງສາຂາແມ່ນການກວດສອບສະຖານະໃນແຕ່ລະມື້. ຄວາມອ່ອນໄຫວຂອງໃບລາຍງານຜົນການດຳເນີນງານແມ່ນຜົນກະທົບມາຈາກສ່ວນປ່ຽນແປງຂອງອັດຕາດອກເບ້ຍທີ່ຄາດວ່າຈະເກີດຂຶ້ນຕໍ່ ກຳໄລ ຫຼື ຂາດທຶນສຳລັບພາຍໃນປີ ໂດຍອີງໃສ່ອັດຕາດອກເບ້ຍແບບລອຍຕົວຂອງຊັບສິນທາງດ້ານການເງິນທີ່ບໍ່ແມ່ນການຊື້ຂາຍ ແລະ ໜີ້ສິນທາງການເງິນທີ່ຖືຄອງນະວັນທີ 31 ທັນວາ 2018. ຄວາມອ່ອນໄຫວທັງໝົດແມ່ນອີງໃສ່ການສົມມຸດຖານວ່າຈະມີການເຄື່ອນແບບຂະໜານໃນເສັ້ນອັດຕາຜົນຕອບແທນ. ຕາຕະລາງລຸ່ມນີ້ວິເຄາະຄວາມສ່ຽງດ້ານອັດຕາດອກເບ້ຍສຳລັບຊັບສິນທາງດ້ານການເງິນ ແລະ ໜີ້ສິນທາງດ້ານການເງິນຂອງສາຂາທີ່ສະແດງເຖິງມູນຄ່າຕາມບັນຊີ ແລະ ໄດ້ຈັດປະເພດໂດຍມື້ຕິລາຄາຄືນ ຫຼື ມື້ຄົບກຳນົດ, ແລ້ວແຕ່ມື້ໃດຈະເຖິງກ່ອນ.

*ຫົວໜ່ວຍ: ລ້ານກີບ*

| | *ບໍ່ໄດ້ຕີລາຄາຄືນ* | *1 ເດືອນລົງມາ* | *1 - 3 ເດືອນ* | *3 - 6 ເດືອນ* | *6 - 12 ເດືອນ* | *1 - 5 ປີ* | *ເກີນ 5 ປີ* | *ທັງໝົດ* |
|---|---|---|---|---|---|---|---|---|
| **ຊັບສິນທາງດ້ານການເງິນ** | | | | | | | | |
| ເງິນສົດ ແລະ ເງິນຝາກ ຢູ່ ທຫລ | 538,618 | - | - | 426,500 | - | - | - | 965,118 |
| ເງິນຝາກຢູ່ທະນາຄານອື່ນ | 536,528 | - | 446,400 | - | - | - | - | 982,928 |
| ການສານໜີ້ໃບລາຄາທຶນຕັດຈຳໜ່າຍ | - | - | - | 860,129 | - | - | - | 860,129 |
| ເງິນກູ້ຢືມ ແລະ ລ່ວງໜ້າໃຫ້ແກ່ລູກຄ້າ (*) | 1,617 | - | 3,500 | 215,500 | - | 55,656 | 300,000 | 576,273 |
| ຊັບສິນທາງດ້ານການເງິນອື່ນໆ | 13,374 | - | - | - | - | - | - | 13,374 |
| **ຊັບສິນທາງດ້ານການເງິນທັງໝົດ** | **1,090,137** | **-** | **449,900** | **1,502,129** | **-** | **55,656** | **300,000** | **3,397,822** |
| **ໜີ້ສິນທາງດ້ານເງິນ** | | | | | | | | |
| ເງິນຝາກຈາກທະນາຄານອື່ນ | 194,149 | - | - | 30,377 | - | - | - | 224,526 |
| ເງິນຝາກຈາກລູກຄ້າ | 1,956,096 | 183,814 | 207,372 | 121,572 | 80,148 | 99,533 | - | 2,648,535 |
| ເງິນແຮ | 354 | - | - | - | - | - | - | 354 |
| ໜີ້ສິນທາງດ້ານການເງິນອື່ນໆ | 5,657 | - | - | - | - | - | - | 5,657 |
| **ໜີ້ສິນທາງດ້ານການເງິນທັງໝົດ** | **2,156,256** | **183,814** | **207,372** | **151,949** | **80,148** | **99,533** | **-** | **2,879,072** |
| **ຍອດທຸລະກຳອັດຕາດອກເບ້ຍສຸດທິ** | **(1,066,119)** | **(183,814)** | **242,528** | **1,350,180** | **(80,148)** | **(43,877)** | **300,000** | **518,750** |

**32. ຄວາມສ່ຽງດ້ານອັດຕາດອກເບ້ຍ** (ຕໍ່)

(*) ຍົກເວັ້ນຄ່າໃຊ້ຈ່າຍສຳລັບຄ່າເສື່ອມມູນຄ່າໜີ້ເສຍຂອງເງິນກູ້ແກ່ລູກຄ້າ

ໂດຍການສົມມຸດຖານວ່າຕົວປ່ຽນອື່ນໆແມ່ນບໍ່ມີການປ່ຽນແປງ, ການຜັນຜວນໃນອັດຕາດອກເບ້ຍນະວັນທີ 31 ທັນວາ 2018 ທີ່ກະທົບກຳໄລກ່ອນອາກອນຕະຫຼອດໄລຍະ 12 ເດືອນຂ້າງໜ້າຂອງສາຂານະມື້ລາຍງານແມ່ນດັ່ງລຸ່ມນີ້:

| *ສ່ວນເພີ່ມ/(ຫຼຸດ) ໃນພື້ນຖານຄະແນນ* | *ຄວາມອ່ອນໄຫວຂອງກຳໄລກ່ອນອາກອນ* |
|---|---|
| + 100 bps | 8,498 |
| - 100 bps | (8,498) |

## 33. ຄວາມສ່ຽງດ້ານສະພາບຄ່ອງ ແລະ ການບໍລິຫານທຶນ

ຄວາມສ່ຽງດ້ານສະພາບຄ່ອງໝາຍເຖິງຄວາມສ່ຽງທີ່ທະນາຄານອາດຈະບໍ່ສາມາດປະຕິບັດພັນທະຜູ້ພັນໃນການຊຳລະເມື່ອເຖິງກຳນົດຊຳລະພາຍໃຕ້ສະຖານະການປົກກະຕິ ແລະ ກົດດັນ. ເພື່ອທີ່ຈະຈຳກັດຄວາມສ່ຽງດັ່ງກ່າວນີ້, ທະນາຄານໄດ້ຈັດໃຫ້ມີແຫຼ່ງເງິນທຶນທີ່ຫຼາກຫຼາຍນອກເໜືອຈາກຖານເງິນຝາກຫຼັກ ແລະ ມີນະໂຍບາຍໃນການບໍລິຫານຊັບສິນທີ່ຄຳນຶງເຖິງສະພາບຄ່ອງ ແລະ ຕິດຕາມກະແສເງິນສົດໃນອະນາຄົດ ແລະ ສະພາບຄ່ອງໃນແຕ່ລະວັນ. ທະນາຄານໄດ້ພັດທະນາຂະບວນການຄວບຄຸມພາຍໃນ ແລະ ແຜນຮອງຮັບສຳລັບການບໍລິຫານຄວາມສ່ຽງດ້ານສະພາບຄ່ອງ. ນອກຈາກນີ້, ທະນາຄານຍັງຮັກສາຄັງສຳຮອງບັງຄັບຢູ່ ທຫລ ໂດຍອີງຕາມຍອດເງິນຝາກຈາກລູກຄ້າ. ຕາຕະລາງລຸ່ມນີ້ສະຫຼຸບ ລາຍລະອຽດການຄົບກຳນົດຂອງກະແສເງິນສົດທີ່ຍັງບໍ່ໄດ້ຫຼຸດຄ່າຂອງ ຊັບສິນ ແລະ ໜີ້ສິນທາງການເງິນຂອງທະນາຄານນະມື້ສິ້ນສຸດການລາຍງານ.

*ຫົວໜ່ວຍ: ລ້ານກີບ*

| | *ກະແສລາຍວັນ* | *1 ເດືອນລົງມາ* | *1 - 3 ເດືອນ* | *3 - 12 ເດືອນ* | *1 - 5 ປີ* | *ຫຼາຍກວ່າ 5 ປີ* | *ທັງໝົດ* |
|---|---|---|---|---|---|---|---|
| **ຊັບສິນທາງການເງິນ** | | | | | | | |
| ເງິນສົດ ແລະ ເງິນຝາກກັບ ທຫລ | 352,317 | - | - | 430,000 | 182,801 | - | 965,118 |
| ເງິນຝາກຢູ່ທະນາຄານອື່ນ | 536,036 | - | 446,892 | - | - | - | 982,928 |
| ກາສານໜີ້ໃນລາຄາຕົ້ນທຶນຕັດຈຳໜ່າຍ | - | - | - | 860,129 | - | - | 860,129 |
| ເງິນກູ້ໃຫ້ລູກຄ້າ | - | - | 3,448 | 213,895 | 54,830 | 295,549 | 567,722 |
| ຊັບສິນທາງການເງິນອື່ນໆ | - | - | - | - | 13,374 | - | 13,374 |
| **ລວມຍອດຊັບສິນທາງການເງິນ** | 888,353 | - | 450,340 | 1,504,024 | 251,005 | 295,549 | 3,389,271 |
| **ໜີ້ສິນທາງການເງິນ** | | | | | | | |
| ເງິນຝາກທະນາຄານອື່ນ | 194,149 | - | - | 30,377 | - | - | 224,526 |
| ເງິນຝາກລູກຄ້າ | 1,956,096 | 183,814 | 207,372 | 201,720 | 99,533 | - | 2,648,535 |
| ເງິນແຮ | - | - | - | 354 | - | - | 354 |
| ໜີ້ສິນທາງການເງິນອື່ນໆ | - | - | - | 5,657 | - | - | 5,657 |
| **ລວມຍອດໜີ້ສິນທາງການເງິນ** | 2,150,245 | 183,814 | 207,372 | 238,108 | 99,533 | - | 2,879,072 |
| **ຍອດອັດຕາດອກເບ້ຍສຸດທິ** | (1,261,892) | (183,814) | 242,968 | 1,265,916 | 151,472 | 295,549 | 510,199 |

## 34. ຄວາມສ່ຽງດ້ານເງິນຕາ

ຄວາມສ່ຽງດ້ານເງິນຕາແມ່ນຄວາມສ່ຽງທີ່ເກີດຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ເຊິ່ງກະທົບໃສ່ຖານະເງິນຕາຕ່າງປະເທດຂອງສາຂາ. ສາຂາໄດ້ກຳນົດເພດານຂອງຖານະເງິນຕາຕ່າງປະເທດແຕ່ລະສະກຸນເງິນພາຍໃຕ້ລະບົບການປະເມີນການຄວບຄຸມຄວາມສ່ຽງພາຍໃນ ແລະ ຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ. ແຕ່ລະຖານະແມ່ນໄດ້ຖືກຕິດຕາມກວດກາທຸກໆມື້ເພື່ອຮັບປະກັນໃຫ້ຖານະເງິນຕາຖືກຮັກສາໄວ້ຢູ່ໃນຂອບເຂດຂອງເພດານທີ່ໄດ້ສ້າງຂຶ້ນ.

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນທີ່ຖືກປ່ຽນເປັນລ້ານກີບໃນວັນທີ 31 ທັນວາ 2018 ມີດັ່ງນີ້:

| | *ກີບ* | *ໂດລາ ທຽບເທົ່າ* | *ຢວນ ທຽບເທົ່າ* | *ອື່ນໆ ທຽບເທົ່າ* | *ລວມ ທຽບເທົ່າ* |
|---|---|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຊັບສິນ** | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ | 256,548 | 691,411 | 10,742 | 6,653 | 965,354 |
| ເງິນຝາກຢູ່ທະນາຄານອື່ນ | - | 404,713 | 576,112 | 2,220 | 983,045 |
| ການລົງທຶນໃນຫຼັກຊັບ | - | 860,343 | - | - | 860,343 |
| ເງິນກູ້ໃຫ້ລູກຄ້າ | 356,670 | 82,095 | 137,508 | - | 576,273 |
| ຊັບສິນບັດ ແລະ ອຸປະກອນ | 5,577 | - | - | - | 5,577 |
| ຊັບສິນອື່ນໆ | 13,263 | 111 | - | - | 13,374 |
| **ຊັບສິນທັງໝົດ** | **632,058** | **2,038,673** | **724,362** | **8,873** | **3,403,966** |
| **ໜີ້ສິນ ແລະ ທຶນ** | | | | | |
| **ໜີ້ສິນ** | | | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 195,973 | 4,597 | 23,956 | - | 224,526 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 122,938 | 1,844,096 | 672,852 | 8,649 | 2,648,535 |
| ເງິນແຮ | - | 354 | - | - | 354 |
| ໜີ້ສິນອື່ນໆ | 69 | 5,221 | 365 | 2 | 5,657 |
| **ໜີ້ສິນທັງໝົດ** | **318,980** | **1,854,268** | **697,173** | **8,651** | **2,879,072** |
| **ຍອດທຸລະກຳສຸດທິ** | **313,078** | **184,405** | **27,189** | **222** | **524,894** |

### ການວິເຄາະຄວາມອ່ອນໄຫວຂອງຄວາມສ່ຽງດ້ານເງິນຕາ

ຕາຕະລາງລຸ່ມນີ້ສະແດງສະກຸນເງິນທີ່ສາຂາມີຍອດທຸລະກຳອັນສຳຄັນນະວັນທີ 31 ທັນວາ 2018 ໃນຊັບສິນ ແລະ ໜີ້ທາງດ້ານເງິນຕາ ແລະ ສະແດງການຄາດຄະເນກະແສເງິນສົດ. ການວິເຄາະຄຳນວນຜົນກະທົບການເຄື່ອນໄຫວທີ່ເປັນໄປໄດ້ຢ່າງສົມເຫດສົມຜົນຂອງອັດຕາແລກປ່ຽນຕໍ່ກັບເງິນກີບ, ດ້ວຍຄ່າຕົວປ່ຽນອື່ນໆຄົງທີ່, ໃນໃບລາຍງານຜົນການດຳເນີນງານ (ເນື່ອງຈາກມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງດ້ານເງິນຕາທີ່ມີຄວາມອ່ອນໄຫວ). ມູນຄ່າລົບໃນຕາຕະລາງແມ່ນສະທ້ອນໃຫ້ເຫັນເຖິງການການຫຼຸດລົງສຸດທິທີ່ອາດຈະເກີດຂຶ້ນໃນໃບລາຍງານຜົນການດຳເນີນງານ, ໃນຂະນະທີ່ມູນຄ່າບວກແມ່ນສະທ້ອນໃຫ້ເຫັນເຖິງສ່ວນເພີ່ມຂຶ້ນທີ່ອາດຈະເກີດຂຶ້ນ.

**34. ຄວາມສ່ຽງດ້ານເງິນຕາ** (ຕໍ່)

*ຫົວໜ່ວຍ: ລ້ານກີບ*

| | *ຜົນກະທົບຕໍ່ກຳໄລກ່ອນຫັກອາກອນ* | | *ຜົນກະທົບຕໍ່ກຳໄລຫຼັງຫັກອາກອນ* | |
|---|---|---|---|---|
| | *ອັດຕາແລກປ່ຽນ ເພີ່ມຂຶ້ນ 10%* | *ອັດຕາແລກປ່ຽນ ຫຼຸດລົງ 10%* | *ອັດຕາແລກປ່ຽນ ເພີ່ມຂຶ້ນ 10%* | *ອັດຕາແລກປ່ຽນ ຫຼຸດລົງ 10%* |
| ໂດລາ | 18,441 | (18,441) | 14,015 | (14,015) |
| ບາດ | 2,719 | (2,719) | 2,066 | (2,066) |
| **ທັງໝົດ** | **21,160** | **(21,160)** | **16,081** | **(16,081)** |

**35. ການບໍລິຫານທຶນ**

ສາຂາໄດ້ຮັກສາທຶນຕໍ່າສຸດຕາມລະບຽບການຂອງທຶນ ໂດຍອີງຕາມລະບຽບການເລກທີ 536/ກທຄສ/ທຫລ ລົງວັນທີ 14 ຕຸລາ 2009 ວ່າດ້ວຍຄວາມພຽງພໍຂອງທຶນ ແລະ ລາຍລະອຽດການແນະນຳອື່ນໆ. ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງສາຂາແມ່ນເພື່ອຮັບປະກັນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານເງິນທຶນຂອງ ທຫລ. ສາຂາຮັບຮູ້ເຖິງຄວາມຈຳເປັນໃນການບໍລິຫານຊັບສິນ ແລະ ໜີ້ສິນຢ່າງມີປະສິດທະພາບ ເພື່ອເຮັດໃຫ້ເກີດຄວາມສົມດຸນກັນລະຫວ່າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມລະບຽບການເລກທີ 536/ກທຄສ/ທຫລ, ທຶນຕາມລະບຽບການຂອງສາຂາວິເຄາະເປັນສອງຊັ້ນຄື:

- ທຶນຊັ້ນ 1, ປະກອບດ້ວຍ ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອຂະຫາຍທຸລະກິດ, ທຶນອື່ນໆ ແລະ ກຳໄລສະສົມ;
- ທຶນຊັ້ນ 2, ປະກອບດ້ວຍໜີ້ສິນສຳຮອງ, ເງິນແຮທົ່ວໄປ ແລະ ອົງປະກອບຂອງຄັງສະສົມມູນຄ່າຍຸດຕິທຳທີ່ກ່ຽວຂ້ອງກັບກຳໄລ/ຂາດທຶນທີ່ບໍ່ເປັນຈິງ ເຊິ່ງກ່ຽວຂ້ອງກັບເຄື່ອງມືທາງດ້ານທຶນທີ່ໄດ້ຈັດປະເພດມີໄວ້ເພື່ອຂາຍ.

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອີງໃສ່: ທຶນຊັ້ນ 2 ບໍ່ສາມາດຫຼາຍກວ່າທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງ ອາດຈະບໍ່ຮອດ 50% ຂອງທຶນ ຊັ້ນ 1.

**35. ການບໍລິຫານທຶນ** (ຕໍ່)

ການວິເຄາະທຶນຂອງສາຂາແມ່ນອີງຕາມຂໍ້ມູນທາງການເງິນຈາກມາດຕະຖານສາກົນດ້ານການລາຍງານການເງິນດັ່ງຕໍ່ໄປນີ້:

| *ລາຍການ* | *31 ທັນວາ 2018*<br>*ພາຍໃຕ້ IFRS*<br>*ລ້ານກີບ* | *31 ທັນວາ 2017*<br>*ພາຍໃຕ້ IFRS*<br>*ລ້ານກີບ* |
|---|---|---|
| ທຶນຊັ້ນ 1 | 507,093 | 432,470 |
| ທຶນຊັ້ນ 2 | - | - |
| **ທຶນທັງໝົດ** | **507,093** | **432,470** |
| ລົບ: ຫັກຈາກທຶນ (ລົງທຶນໃນສິນເຊື່ອ ແລະ ສະຖາບັນການເງິນອື່ນໆ) | - | - |
| **ທຶນສຳລັບການຄິດໄລ່ CAR (A)** | **507,093** | **432,470** |
| ນ້ຳໜັກຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ | 873,797 | 404,755 |
| ນ້ຳໜັກຄວາມສ່ຽງຂອງລາຍການນອກໃບລາຍງານຖານະການເງິນ | 1,262,537 | 1,334,443 |
| **ລວມນ້ຳໜັກຄວາມສ່ຽງຂອງຊັບສິນ (B)** | **2,136,334** | **1,739,198** |
| **ອັດຕາຄວາມພຽງພໍຂອງທຶນ (A/B)** | **24%** | **25%** |

**36. ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ**

***ການກຳນົດມູນຄ່າຍຸດຕິທຳ ແລະ ລະດັບຊັ້ນຂອງມູນຄ່າຍຸດຕິທຳ***

ສາຂາໃຊ້ລະດັບຊັ້ນຕໍ່ໄປນີ້ໃນການກຳນົດ ແລະ ເປີດເຜີຍມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນໂດຍວິທີຕີມູນຄ່າ:

ລະດັບ 1: ລາຄາປະກາດ/(ບໍ່ໄດ້ດັດແປງ) ໃນຕະຫລາດທີ່ມີການຊື້-ຂາຍ ສຳລັບ ຊັບສິນ ຫຼື ໜີ້ສິນ ຢ່າງດຽວກັນ;

ລະດັບ 2: ວິທີການອື່ນໆ ໂດຍນຳໃຊ້ປັດໄຈທີ່ມີຜົນກະທົບສູງຕໍ່ມູນຄ່າຍຸດຕິທຳ ບໍ່ວ່າທາງກົງ ຫຼື ທາງອ້ອມ ເຊິ່ງສາມາດສັງເກດເຫັນໄດ້.

ລະດັບ 3: ວິທີການທີ່ນຳໃຊ້ປັດໃຈທີ່ມີຜົນກະທົບສູງຕໍ່ກັບມູນຄ່າຍຸດຕິທຳ ທີ່ຂໍ້ມູນບໍ່ໄດ້ຢູ່ໃນຕະຫລາດສັງເກດໄດ້.

***ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກຕາມມູນຄ່າຍຸດຕິທຳ***

ສາຂາບໍ່ມີຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກຕາມມູນຄ່າຍຸດຕິທຳ ນະວັນທີ 31 ທັນວາ 2018. ດັ່ງນັ້ນ, ບໍ່ມີການວິເຄາະຊັບສິນທາງການເງິນຕາມມູນຄ່າຍຸດຕິທຳຕາມລະດັບຊັ້ນຂອງມູນຄ່າຍຸດຕິທຳ.

***ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸດຕິທຳ***

ສາຂານຳໃຊ້ວິທີ ແລະ ການຄາດຄະເນດັ່ງຕໍ່ໄປນີ້ ໃນການພິຈາລະນາມູນຄ່າຍຸດຕິທຳສຳລັບ ຊັບສິນ ແລະ ໜີ້ສິນທາງການເງິນທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸດຕິທຳໃນເອກະສານລາຍງານການເງິນ:

*ຊັບສິນທີ່ມູນຄ່າຍຸດຕິທຳໃກ້ຄຽງກັບມູນຄ່າຕາມບັນຊີ*

ສຳລັບ ຊັບສິນ ແລະ ໜີ້ສິນທີ່ເປັນໄລຍະສັ້ນ (ຕ່ຳກວ່າ 1 ປີ) ມີການຄາດການວ່າ ຈຳນວນຕາມບັນຊີ ໃກ້ຄຽງກັບ ມູນຄ່າຍຸດຕິທຳ. ການຄາດຄະເນນີ້ແມ່ນຍັງໃຊ້ກັບເງິນຝາກກະແສລາຍວັນ.

**36. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ** (ຕໍ່)

*ເຄື່ອງມືທາງການເງິນທີ່ມີອັດຕາຄົງທີ່*

ມູນຄ່າຍຸດຕິທຳຖືກກຳນົດໂດຍວິທີກະແສເງິນສົດແບບສ່ວນຫລຸດ ໂດຍໃຊ້ດອກເບ້ຍນະທ້າຍໄລຍະຂອງເຄື່ອງມືທາງການເງິນໃນຕະຫລາດທີ່ມີຄວາມສ່ຽງ ແລະ ໄລຍະເວລາທີ່ຄືກັນ. ນອກນັ້ນ ທະນາຄານຍັງຄາດຄະເນວ່າເງິນກູ້ທີ່ໃຫ້ກັບລູກຄ້າແມ່ນຖືໄວ້ຈົນຄົບກຳນົດ. ມູນຄ່າຍຸດຕິທຳຂອງເງິນກູ້ທີ່ໃຫ້ລູກຄ້າແມ່ນກຳນົດຈາກມູນຄ່າຕາມບັນຊີ ລົບໃຫ້ ເງິນແຮຄ່າເສື່ອມ. ສຳລັບໜີ້ຕ້ອງສົ່ງໃຫ້ລູກຄ້າ, ມູນຄ່າຍຸດຕິທຳຖືກກຳນົດໃນມູນຄ່າຕາມບັນຊີຂອງເງິນຝາກ, ຍົກເວັ້ນມູນຄ່າຍຸດຕິທຳສຳລັບລາຍການທີ່ມີອັດຕາຄົງທີ່ ທີ່ມີໄລຍະເວລາຄົບກຳນົດຫຼາຍກວ່າ 1 ປີ ເຊິ່ງຖືກຄິດໄລ່ໂດຍອີງຕາມມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດສຳລັບຕົ້ນທຶນ ແລະ ດອກເບ້ຍ, ຫຼຸດໃນອັດຕາທີ່ໄດ້ສະເໜີສຳລັບເງິນຝາກດັ່ງກ່າວ.

ລາຍການຕໍ່ໄປນີ້ແມ່ນການປຽບທຽບຕາມປະເພດຂອງມູນຄ່າຕາມບັນຊີ ແລະ ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນຂອງທະນາຄານທີ່ບໍ່ໄດ້ບັນທຶກຕາມມູນຄ່າຍຸດຕິທຳໃນເອກະສານລາຍງານການເງິນ:

**ນະວັນທີ 31 ທັນວາ 2018**

*ຫົວໜ່ວຍ: ລ້ານກີບ*

| | | *ມູນຄ່າຍຸດຕິທຳ* | | | |
|---|---|---|---|---|---|
| | *ມູນຄ່າຖືຄອງ* | *ລະດັບ 1* | *ລະດັບ 2* | *ລະດັບ 3* | *ລວມ* |
| ***ຊັບສິນທາງດ້ານການເງິນ*** | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ | 939,368 | 509,133 | - | 430,235 | 939,368 |
| ເງິນຝາກຢູ່ທະນາຄານອື່ນ | 983,045 | 536,036 | - | 447,009 | 983,045 |
| ການລົງທຶນໃນຫຼັກຊັບ | 860,343 | - | - | 860,343 | 860,343 |
| ເງິນກູ້ຢືມແກ່ລູກຄ້າ | 576,273 | - | - | 576,273 | 576,273 |
| | **3,359,029** | **1,045,169** | **-** | **2,313,860** | **3,359,029** |
| **ໜີ້ສິນທາງດ້ານການເງິນ** | | | | | |
| ເງິນຝາກຈາກທະນາຄານອື່ນ | 224,526 | 194,149 | - | 30,377 | 224,526 |
| ເງິນຝາກຈາກລູກຄ້າ | 2,648,535 | 1,956,094 | - | 692,441 | 2,648,535 |
| | **2,873,061** | **2,150,243** | **-** | **722,818** | **2,873,061** |

**37. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວນະມື້ລາຍງານ**

| | *31 ທັນວາ 2018* | *31 ທັນວາ 2017* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ (“USD”) | 8,530 | 8,293 |
| ບາດໄທ (“THB”) | 261.90 | 253.84 |
| ຢວນຈີນ (“CNY”) | 1,240 | 1,272 |

**38. ເຫດການທີ່ເກີດຂຶ້ນພາຍຫຼັງມື້ໃບລາຍງານຖານະການເງິນ**

ບໍ່ມີເຫດການທີ່ສຳຄັນຫຼັງຈາກວັນທີອອກໃບລາຍງານຖານະການເງິນ ທີ່ຮຽກຮ້ອງໃຫ້ດັດແກ້ ຫຼື ຖືກເປີດເຜີຍໃນເອກະສານລາຍງານທາງການເງິນ.

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ
ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ອຳນວຍໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

23 ເມສາ 2019